ສຳນັກງານໃຫຍ່

ເລກທີ: 011 /ທຄຕລ.ສພທ.2025
ນະຄອນຫຼວງວຽງຈັນ, ວັນທີ:....07..ເມສາ..2025....

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024.

- ອີງຕາມມະຕິສະພາບໍລິຫານ ທຄຕລ ເລກທີ 001/ສພທ.ທຄຕລ.2025, ລົງວັນທີ 18 ມີນາ 2025.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ **ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024** ໃນວັນພຸດ ວັນທີ 30 ເມສາ 2025 ເວລາ 14:30 ໂມງ (ລົງທະບຽນເວລາ 13:00 – 14:30 ໂມງ) ທີ່ຫ້ອງປະຊຸມ Grand Ballroom, ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາແລະຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ກຳນົດເອົາວັນທີ **27 ມີນາ 2025 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ** ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

ສຳຫຼັບທ່ານຜູ້ຖືຮຸ້ນທີ່ບໍ່ສະດວກເຂົ້າຮ່ວມດ້ວຍຕົນເອງ ທ່ານສາມາດມອບສິດໃຫ້ສະມາຊິກສະພາບໍລິຫານອິດສະລະ ທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະຊຸມແທນ ໂດຍປະກອບແບບຟອມໃບມອບສິດທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ ທຄຕລ ທາງອີເມວ: bcelhqv@bcel.com.la ກ່ອນວັນທີ **28 ເມສາ 2025.**

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ປະທານສະພາບໍລິຫານ

ທ່ານ ອາຄົມ ປຣະເສີດ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ເອກະສານຄັດຕິດ

1. **ເອກະສານຄັດຕິດ 01:** ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ;
2. **ເອກະສານຄັດຕິດ 02:** ບົດບັນທຶກກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2023;
3. **ເອກະສານຄັດຕິດ 03:** ລາຍງານຜົນການດຳເນີນງານຂອງ ທຄຕລ ປະຈຳປີ 2024 ໂດຍສັງເຂບ ແລະ ບົດລາຍງານຖານະການເງິນ ທຄຕລ ປະຈຳປີ 2024 ຈາກຜູ້ກວດສອບພາຍນອກ;
4. **ເອກະສານຄັດຕິດ 04:** ເອກະສານແຜນການປະຈຳປີ 2025 ຂອງ ທຄຕລ;
5. **ເອກະສານຄັດຕິດ 05:** ແຜນຍຸດທະສາດພັດທະນາ ທຄຕລ ປີ 2025 – 2029 (ຄັດຫຍໍ້)
6. **ເອກະສານຄັດຕິດ 06:** ຊີວະປະຫວັດ ທ່ານ ສຸລິວັດ ສຸວັນນະໂຈມຄຳ ແລະ ທ່ານ ອາໂນ ເດີໂລເມ
7. **ເອກະສານຄັດຕິດ 07:** ໃບມອບສິດ-Poxy
8. **ເອກະສານຄັດຕິດ 08:** ລະບຽບສຳລັບການດຳເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ
9. **ເອກະສານຄັດຕິດ 09:** ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
10. **ເອກະສານຄັດຕິດ 10:** ຄຳແນະນຳກ່ຽວກັບການລົງຄະແນນສຽງ
11. **ເອກະສານຄັດຕິດ 11:** ແຜນທີ່ສະຖານທີ່ປະຊຸມ

❖ ໝາຍເຫດ:

1. ຜູ້ຖືຮຸ້ນແຕ່ລະທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງ ທຄຕລ www.bcel.com.la ແລະ ເວັບໄຊຂອງຕະຫຼາດຫຼັກຊັບລາວ www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ຢູ່ຕະຫຼາດຫຼັກຊັບລາວ ທີ່ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +856 (21) 454361-4 ເລີ່ມແຕ່ວັນທີ 07 ເມສາ 2025 ເປັນຕົ້ນໄປ.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມໄດ້ລະບຸໃວ້ໃນຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

❖ ຜູ້ປະສານງານຝ່າຍ ທຄຕລ

1) ທ່ານ ປອ. ອິນປິງ ສີລິພູທອນ, ໂທ: 020 2888 5353
2) ທ່ານ ພອນນະລັດ ກອງວົງສາ, ໂທ: 020 2222 3455

ວາລະ
ກອງປະຊຸມ ຜູ້ຖືຮຸ້ນ ທຄຕລ ສະໄໝສາມັນປະຈຳປີ 2024
(ຄັ້ງວັນທີ 30 ເມສາ 2025)

ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ທຄຕລ ປະຈຳປີ 2023.

ທຄຕລ ໄດ້ມີບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ຂອງ ທຄຕລ ສະໄໝສາມັນ ປະຈຳປີ 2023 ຈັດຂຶ້ນໃນວັນທີ 29 ເມສາ 2024 ຕາມລາຍລະອຽດທີ່ຢູ່ໃນ **(ເອກະສານຄັດຕິດ 02)** ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງ ສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ເຫັນວ່າ ບົດບັນທຶກກອງປະຊຸມດັ່ງກ່າວ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ ແລ້ວ ຈຶ່ງເຫັນຄວນສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການ ເງິນຂອງ ທຄຕລ ປະຈຳປີ 2024 (ເອກະສານຄັດຕິດ 03)

ການດຳເນີນງານທີ່ພົ້ນເດັ່ນຂອງ ທຄຕລ ໃນໄລຍະປີ 2024 ມີດັ່ງນີ້:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 300 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ;
- ຈັດກອງປະຊຸມສະພາບໍລິຫານ ທຄຕລ 11 ຄັ້ງ (ສະໄໝສາມັນ 04 ຄັ້ງ ແລະ ສະໄໝວິສາມັນ 07 ຄັ້ງ);
- ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 04 ຄັ້ງ (ກອງປະຊຸມປະຈຳປີ 01 ຄັ້ງ ແລະ ໄຕມາດ 03 ຄັ້ງ);
- ຈັດພິທີສະເຫຼີມສະຫຼອງວັນຫັນເປັນທຸລະກິດ ທຄຕລ ຄົບຮອບ 35 ປີ;
- ທົບທວນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດ 2021 – 2025;
- ດຳເນີນການຄົ້ນຄວ້າກຳນົດແຜນຍຸດທະສາດ 5 ປີສະບັບໃໝ່ ຂອງ ທຄຕລ ໄລຍະ 2025 – 2029;
- ຈັດຂັ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2024 ແລະ ກຳນົດ KPI ຂອງສາຂາ ປະຈຳປີ 2024;
- ພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ ແລະ ການບໍລິການ ເຊັ່ນ: ພັດທະນາ EzyKip App; Go Live SWIFT ISO 20022; ໂອນເງິນຂ້າມແດນຜ່ານມືຖືຈາກ ສ. ເກົາຫຼີ ຫາ ສປປ ລາວ ຜ່ານແອັບ BCEL One; ຊຳລະສະສາງຂ້າມແດນລາວ-ໄທ ຜ່ານ QR Code; ຊຳລະສະສາງ Unionpay QR ຜ່ານ BCEL One; ເປີດໂຕ BCEL VISA Corporate; ເປີດໂຕ OneBank ທີ່ໄດ້ລວມ 2 ແອັບ BCEL One ແລະ i-Bank ເຂົ້າມາລວມ

ກັນ; ເຊື່ອມຕໍ່ຊຳລະພາສີ ແລະ ອາກອນກັບລະບົບ FINLINK ຂອງກະຊວງການເງິນ; ຍົກລະດັບຕົວແທນ BCOME ເປັນ Super Agent; ຜັດທະນາການ Settlement ເປັນສະກຸນເງິນຢວນຂອງບັດ UnionPay ແລະ ອື່ນໆ.

- ເປີດໜ່ວຍບໍລິການ 02 ແຫ່ງ ຄື: ໜ່ວຍບໍລິການໄຊມຸງຄຸນ ຂຶ້ນກັບສາຂານະຄອນຫຼວງວຽງຈັນ ແລະ ໜ່ວຍບໍລິການ ວັງເຕົ່າ-ຊ່ອງເມັກ ຂຶ້ນກັບສາຂາຈຳປາສັກ;
- ຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນ: ເຊື່ອມຕໍ່ OnePay E-Commerce ກັບ ບໍລິສັດ ດວງດີ ທະວີໂຊກ ຈຳກັດຜູ້ດຽວ; ຕໍ່ສັນຍາການຮ່ວມມືກະເປົ໋າເງິນເອເລັກໂທຣນິກຂອງ 02 ບໍລິສັດຄື: M-Money ແລະ U-Money; ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ການຮ່ວມມື ເພື່ອຊຸກຍູ້ການລົງທຶນຂອງໄທ ໃນ ສປປ ລາວ ສົ່ງເສີມການພັດທະນາແບບຢືນຍົງ ລະຫວ່າງ ທຄຕລ ແລະ ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດ ໄທ (EXIM Thailand); ເຊັນສັນຍາລະຫວ່າງ ທຄຕລ ແລະ ກຸ່ມບໍລິສັດ ວຽງຈັນປະກັນໄພ ພ້ອມດ້ວຍການເປີດ ໂຕການໃຫ້ບໍລິການຊື້-ຂາຍປະກັນໄພ ຜ່ານແອັບ BCEL One;
- ລາງວັນຊົ່ງກຽດທີ່ໄດ້ຮັບ: ລາງວັນຜູ້ອອກບັດດີເດັ່ນ ປະຈຳປີ 2023 (Best Issuing Member Award 2023) ຂອງບໍລິສັດ Union Pay ສາກົນ; ລາງວັນຜົນງານດີເດັ່ນໃນການປະຕິບັດພັນທະສ່ວຍສາອາກອນເຂົ້າ ງົບປະມານແຫ່ງລັດ ປະຈຳປີ 2022; ລາງວັນດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດໃນການຊຳລະສະ ສາງເປັນສະກຸນໂດລາ ປະຈຳປີ 2024 ຈາກທະນາຄານ JP Morgan Chase Bank ແລະ ໄດ້ຮັບ 02 ລາງວັນຂອງ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ລາງວັນການເປີດເຜີຍຂໍ້ມູນດີເດັ່ນ ປະ ເພດທີ I ປະຈຳປີ 2024 ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະເພດທີ I ປະຈຳປີ 2024.

ຜົນການດຳເນີນທຸລະກິດປະຈຳປີ 2024 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ EY ແລະ ຮັບຮອງ ຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- **ຍອດຊັບສິນ:** 142,191 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 100.99%;
- **ຍອດເງິນຝາກ:** 133,135 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 102.41%;
- **ຍອດເງິນກູ້ທັ້ງໝົດ:** 62,162 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 104.53%;
- **ອັດຕາສ່ວນ NPL:** 2.79%;
- **ກຳໄລສຸດທິ:** 449 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 149.85%.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 03: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2024 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ

ທຄຕລ ສະເໜີກອງປະຊຸມພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນປະຈຳປີ 2024 ເພື່ອຈ່າຍເຂົ້າ ຄັງຕ່າງໆຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;

- ຈ່າຍເງິນປັນຜົນ: **100 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **103,861,650,000.00 ກີບ** ເພີ່ມຂຶ້ນ 66.67% ເມື່ອທຽບກັບ ປີ 2023 (ໃນປີ 2023 ທຄຕລ ຈ່າຍ ເງິນປັນຜົນ 300 ກີບ/ຮຸ້ນ ເຊິ່ງເວລານັ້ນ ທຄຕລ ມີ ຮຸ້ນທັງໝົດ 207,723,300 ຮຸ້ນ; ໃນຕົ້ນປີ 2025 ທຄຕລ ໄດ້ສຳເລັດການແຕກຮຸ້ນ ເຮັດໃຫ້ປະຈຸບັນ ທຄຕລ ມີ ຮຸ້ນທັງໝົດຈຳນວນ 1,038,616,500 ຮຸ້ນ ຫຼື ເພີ່ມຂຶ້ນ 5 ເທົ່າຂອງຈຳນວນຮຸ້ນທັງໝົດໃນປີ 2023. ຖ້າເອົາລວມ ມູນຄ່າເງິນປັນຜົນທັງໝົດຈຳນວນ 103,861,650,000.00 ກີບ ທີ່ສະເໜີຈ່າຍໃນປີ 2024 ມາແບ່ງຕາມຈຳນວນ ຮຸ້ນເດີມໃນປີ 2023 ອັດຕາເງິນປັນຜົນທີ່ສະເໜີຈ່າຍໃນປີ 2024 ຈະເທົ່າກັບ 500 ກີບ/ຮຸ້ນ);
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **14 ພຶດສະພາ 2025**.

ທຄຕລ ໄດ້ກຳນົດເອົາວັນທີ **25 ເມສາ 2025** ເປັນມື້ປິດປຶ້ມ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ ປະຈຳປີ 2024 ເຊິ່ງໄດ້ມີການເປີດເຜີຍຂໍ້ມູນແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2025 (ເອກະສານຄັດຕິດ 04)

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈຳປີ 2025 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ທຽບໃສ່ຕົວເລກການປະຕິບັດປີ 2024 ມີດັ່ງນີ້:

- **ຍອດຊັບສິນ:** ບໍ່ໜຸດ 150,620 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 5.93%;
- **ຍອດເງິນຝາກ:** ບໍ່ໜຸດ 138,000 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 3.65%;
- **ຍອດເງິນກູ້ທັງໝົດ:** ບໍ່ໜຸດ 65,700 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ບໍ່ເກີນ 3% ຂອງຍອດເງິນກູ້ທັງໝົດ;
- **ກຳໄລສຸດທິ:** ບໍ່ໜຸດ 550 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 22.34%
- ແຜນຂະຫຍາຍຕາໜ່າງບໍລິການ: ສ້າງຕັ້ງສາຂາ 01 ແຫ່ງ, ຂະຫຍາຍໜ່ວຍບໍລິການໃໝ່ 13 ແຫ່ງ ແລະ ຍົກຍ້າຍ ສະຖານທີ່ໜ່ວຍບໍລິການ 02 ແຫ່ງ;
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນ ແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 804.67 ຕື້ກີບ;
- ແຜນຮັບພະນັກງານໃໝ່ ຈຳນວນ 84 ຄົນ ເຊິ່ງຈະປະກອບເພື່ອຮອງຮັບວຽກງານວິຊາສະເພາະທີ່ຈຳເປັນ ບໍ່ສາມາດ ສັບຊ້ອນພະນັກງານພາຍໃນໄດ້, ປະກອບເຂົ້າໃນໂຄງຮ່າງການຈັດຕັ້ງ ແລະ ຕາໜ່າງບໍລິການທີ່ຈະຂະຫຍາຍໃໝ່.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029 (ເອກະສານຄັດຕິດ 05)

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029 ເຊິ່ງມີລາຍລະອຽດແຜນການທີ່ສຳຄັນໃນການຈັດຕັ້ງປະຕິບັດ ດັ່ງນີ້:

ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ໄລຍະແຕ່ປີ 2025-2029 ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ພາຍໃຕ້ວິໄສທັດ **"ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**. ໃນນັ້ນ, ໄດ້ກຳນົດ 03 ຍຸດທະສາດໃຫຍ່ ຄື:

- **ຍຸດທະສາດທີ 01: ສ້າງຄວາມເຂັ້ມແຂງໃຫ້ອົງກອນ** (ປະກອບມີ 4 ແຜນງານ 17 ໂຄງການ)
  - ບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ເຂັ້ມແຂງ;
  - ຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອ ຢ່າງມີປະສິດທິພາບ;
  - ພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ;
  - ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ເຂັ້ມແຂງ.
- **ຍຸດທະສາດທີ 02: ທັນເປັນທັນສະໄໝ ແລະ ນຳໃຊ້ເຕັກໂນໂລຊີໃໝ່ໃນການດຳເນີນທຸລະກິດ** (ປະກອບມີ 5 ແຜນງານ 22 ໂຄງການ)
  - ຄຸ້ມຄອງ ແລະ ພັດທະນາລະບົບໄອທີໃຫ້ທັນສະໄໝ;
  - ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການໃນຮູບແບບ Digital Banking;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝ;
  - ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ;
  - ພັດທະນາລະບົບບັນຊີ-ລາຍງານການເງິນໃຫ້ເປັນທັນສະໄໝ.
- **ຍຸດທະສາດທີ 03: ຫັນສູ່ມາດຕະຖານສາກົນ ໃນການຄຸ້ມຄອງການບໍລິຫານ ແລະ ບໍລິການ** (ປະກອບມີ 6 ແຜນງານ 11 ໂຄງການ)
  - ຄຸ້ມຄອງ ແລະ ບໍລິຫານອົງກອນໃຫ້ຍືນຍົງຕາມທິດສີຂຽວ Sustainable Finance;
  - ປະຕິບັດຕາມຫຼັກການ BASEL II;
  - ພັດທະນາວຽກງານບັນຊີ ແລະ ລາຍງານການເງິນ ໃຫ້ໄດ້ຕາມມາດຕະຖານ IFRS ເຕັມຮູບແບບ;
  - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ກ້າວສູ່ມາດຕະຖານ COSO;
  - ພັດທະນາວຽກງານບໍລິການໃຫ້ໄດ້ຕາມມາດຕະຖານສາກົນ ISO9001:2015;
  - ພັດທະນາໂຄງການ PCI Compliance.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະລະປະຈຳປີ 2025.

ຕາມການຄົ້ນຄວ້າ ແລະ ຜ່ານການປະມູນຕາມລະບຽບທີ່ກ່ຽວຂ້ອງ, ທຄຕລ ໄດ້ເລືອກເອົາບໍລິສັດ PWC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2025 ໃນມູນຄ່າ 945,000,000 ກີບ (ມູນຄ່າຂອງປີຜ່ານມາໄດ້ນຳໃຊ້ບໍລິສັດ EY ເປັນຜູ້ກວດສອບອິດສະລະ: 945,000,000 ກີບ) ແລະ ອອກບົດລາຍງານໃຫ້ ທຄຕລ 05 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS special purpose);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);
4) ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational review report);
5) ບົດລາຍງານການທົບທວນຄືນຖານະເງິນກູ້ (Loan review report).

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງ ປະທານ ແລະ ສະມາຊິກສະພາບໍລິຫານທຄຕລ ປ່ຽນແທນທ່ານສະມາຊິກເດີມທີ່ພົ້ນຈາກໜ້າທີ່ ແລະ ຮັບຮອງອາຍຸການຂອງສະພາບໍລິຫານ (ເອກະສານຄັດຕິດ 06)

ສະເໜີກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງ **ທ່ານ ສຸລິວັດ ສຸວັນນະຈຸມຄຳ**, ຮອງລັດຖະມົນຕີກະຊວງການເງິນ ເປັນປະທານສະພາບໍລິຫານ ທຄຕລ ຕາມຂໍ້ຕົກລົງສະບັບເລກທີ 0527/ກງ, ລົງວັນທີ 27 ກຸມພາ 2025, ເພື່ອປ່ຽນແທນ **ທ່ານ ບຸນປອນ ອັນນະຈິດ** ອະດີດຮອງລັດຖະມົນຕີກະຊວງການເງິນ ອະດີດປະທານສະພາບໍລິຫານ ທຄຕລ ທີ່ໄດ້ເຂົ້າຮັບບຳນານແລ້ວ; ແລະ ຮັບຮອງການແຕ່ງຕັ້ງທ່ານ **Arnaud DELAUNAY** ຕົວແທນຄູ່ຮ່ວມຍຸດທະສາດ ຕາມການແຈ້ງເຈດຈຳນົງຂອງ COFIBRED ໃນຄັ້ງວັນທີ 18 ພະຈິກ 2024 ເພື່ອປ່ຽນແທນທ່ານ **Stephane MANGIAVACCA**. ສຳລັບບັນດາກຳມະການສະພາບໍລິຫານທ່ານອື່ນໆ ຍັງຄົງຮັກສາຕາມເດີມ.

ດັ່ງນັ້ນ, ຈາກການຮັບຮອງໃນຄັ້ງນີ້ ຈະເຮັດໃຫ້ສະພາບໍລິຫານຂອງ ທຄຕລ ຊຸດໃໝ່ ປະກອບດ້ວຍ **08 ທ່ານ** ດັ່ງນີ້:

1. ທ່ານ ສຸລິວັດ ສຸວັນນະຈຸມຄຳ ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ

2. ທ່ານ ປອ. ອາຄົມ ປະເສີດ ກຳມະການອິດສະລະ, ຮອງປະທານສະພາບໍລິຫານ
3. ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ, ກຳມະການ
4. ທ່ານ ປະສົມເພັດ ຄຳຕັນ ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ກຳມະການ
5. ທ່ານ Arnaud DELAUNAY ຕົວແທນຄູ່ຮ່ວມຍຸດທະສາດ, ກຳມະການ
6. ທ່ານ ຮສ. ທອງເພັດ ຈັນທະນີວົງ ສະມາຊິກອິດສະລະ, ກຳມະການ
7. ທ່ານ ນ. ລັດດາວັນ ຊົງວິໄລ ສະມາຊິກອິດສະລະ, ກຳມະການ
8. ທ່ານ ສອນໄຊ ສີລາເພັດ ສະມາຊິກອິດສະລະ, ກຳມະການ

ສະພາບໍລິຫານຊຸດນີ້ ມີອາຍຸການ 01 ປີ ນັບຈາກກອງປະຊຸມຜູ້ຖືຮຸ້ນຄັ້ງນີ້ເປັນຕົ້ນໄປ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງ ເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 08: ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນຈົດທະບຽນຂອງ ທຄຕລ

ອີງຕາມການຂະຫຍາຍຕົວຂອງທຸລະກິດຂອງ ທຄຕລ ຢ່າງຕໍ່ເນື່ອງ ເຮັດໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ທຄຕລ ໃນປະຈຸບັນແມ່ນ 6.00% (IFRS) ອີງຕາມຕົວເລກໃນເດືອນ 12/2024 ເຊິ່ງຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງໄວ້ຄື 8%. ສະນັ້ນ ຈຶ່ງມີຄວາມຈຳເປັນໃນການເພີ່ມທຶນຈົດທະບຽນຂອງ ທຄຕລ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ຄວາມເຊື່ອໝັ້ນຕໍ່ ທຄຕລ.

ສະເໜີກອງປະຊຸມພິຈາລະນາຮັບຮອງແຜນການເພີ່ມທຶນຂອງ ທຄຕລ ບໍ່ຕ່ຳກວ່າ **800** ຕື້ກີບ, ອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນຕ່າງໆທີ່ຈຳເປັນເພື່ອໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ທຄຕລ ເພີ່ມຂຶ້ນຕາມມາດຕະຖານຄວາມພໍພຽງຂອງທຶນຂັ້ນຕ່ຳສຸດທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ມອບໝາຍໃຫ້ສະພາບໍລິຫານພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການດຳເນີນການເພີ່ມທຶນຈົດທະບຽນໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືກຮັບຮອງດ້ວຍມະຕິສະເພາະທີ່ມີຄະແນນສຽງເຫັນດີຢ່າງໜ້ອຍ 2/3 ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ບໍ່ຫຼຸດ 80% ຂອງຮຸ້ນ ທຄຕລ ທັງໝົດ.

ວາລະທີ 09: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ

ເນື່ອງຈາກປະຈຸບັນອັດຕາຄວາມພຽງພໍຂອງທຶນຂອງ ທຄຕລ ຍັງຫຼຸດມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ໃນຂະນະດຽວກັນທຸລະກິດຂອງ ທຄຕລ ກໍ່ມີການຂະຫຍາຍຕົວຢ່າງຕໍ່ເນື່ອງດັ່ງທີ່ໄດ້ລາຍງານໄວ້ໃນວາລະຂ້າງເທິງ. ທຄຕລ ຈຶ່ງເຫັນສົມຄວນຖອນເອົາທຶນຮອນທີ່ໄດ້ລົງທຶນຢູ່ໃນບາງບໍລິສັດ ເພື່ອມານຳໃຊ້ໃນການທຸລະກິດຕົ້ນຕໍຢູ່

ທຄຕລ ໃຫ້ມີປະສິດຕິຜົນສູງຂຶ້ນຕື່ມ ແລະ ເພື່ອຈຳກັດຂອບເຂດການລົງທຶນຂອງ ທຄຕລ ບໍ່ໃຫ້ກວ້າງຂວາງເກີນໄປ. ໃນນັ້ນ ທຄຕລ ເຫັນສົມຄວນສະເໜີຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ໃນທະນາຄານລາວ-ຝຣັ່ງ ຈຳກັດ ຈຳນວນ 30%. ສຳລັບລາຍລະອຽດ ກ່ຽວກັບ ລາຄາຂາຍ ຍັງຈະຕ້ອງໄດ້ມີການຄົ້ນຄວ້າ ແລະ ເຈລະຈາໃນລາຍລະອຽດກັບຜູ້ທີ່ສົນໃຈຊື້ ບົນພື້ນຖານການຄຳນຶງເຖິງຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ທຄຕລ. ປະຈຸບັນນີ້, ໄດ້ມີບໍລິສັດສະແດງເຈດຈຳນົງຊື້ເອົາຮຸ້ນດັ່ງກ່າວແລ້ວ.

ສະເໜີກອງປະຊຸມພິຈາລະນາອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນທີ່ຈຳເປັນ ເພື່ອເຮັດສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ທະນາຄານລາວ-ຝຣັ່ງຈຳກັດ ໂດຍມອບໝາຍໃຫ້ສະພາບໍລິຫານ ພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືກຮັບຮອງດ້ວຍມະຕິສະເພາະທີ່ມີຄະແນນສຽງເຫັນດີຢ່າງໜ້ອຍ 2/3 ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ບໍ່ຫຼຸດ 80% ຂອງຮຸ້ນ ທຄຕລ ທັງໝົດ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ

ອີງຕາມແຜນການຖອນເອົາທຶນທີ່ ທຄຕລ ໄດ້ລົງທຶນຢູ່ໃນບາງບໍລິສັດ ເພື່ອມານຳໃຊ້ໃນການທຸລະກິດຕົ້ນຕໍ ແລະ ເພື່ອຈຳກັດຂອບເຂດການລົງທຶນ ບໍ່ໃຫ້ກວ້າງຂວາງເກີນໄປ, ທຄຕລ ຈຶ່ງເຫັນສົມຄວນສະເໜີຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ໃນບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ຈຳນວນ 38,350,000 ຮຸ້ນ. ສຳລັບລາຍລະອຽດ ກ່ຽວກັບ ລາຄາຂາຍ ຍັງຈະຕ້ອງໄດ້ມີການຄົ້ນຄວ້າ ແລະ ເຈລະຈາໃນລາຍລະອຽດກັບຜູ້ທີ່ສົນໃຈຊື້ ບົນພື້ນຖານການຄຳນຶງເຖິງຜົນປະໂຫຍດສູງສຸດຂອງຜູ້ຖືຮຸ້ນ ທຄຕລ. ປະຈຸບັນນີ້ ໄດ້ມີບໍລິສັດ ໄດ້ແຈ້ງເຈດຈຳນົງຂໍຊື້ເອົາຮຸ້ນດັ່ງກ່າວແລ້ວ.

ສະເໜີກອງປະຊຸມພິຈາລະນາອະນຸມັດໃຫ້ ທຄຕລ ດຳເນີນຂັ້ນຕອນທີ່ຈຳເປັນ ເພື່ອເຮັດສຳເລັດການຂາຍຮຸ້ນທັງໝົດທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ ໂດຍມອບໝາຍໃຫ້ສະພາບໍລິຫານ ພິຈາລະນາຮັບຮອງທຸກບັນຫາທີ່ຈຳເປັນຕ່າງໆ ທີ່ຕິດພັນກັບການຂາຍຮຸ້ນດັ່ງກ່າວໃຫ້ສຳເລັດ ແລ້ວລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືກຮັບຮອງດ້ວຍມະຕິສະເພາະທີ່ມີຄະແນນສຽງເຫັນດີຢ່າງໜ້ອຍ 2/3 ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ບໍ່ຫຼຸດ 80% ຂອງຮຸ້ນ ທຄຕລ ທັງໝົດ.

ສຳນັກງານໃຫຍ່

ເລກທີ: 021 /ທຄຕລ.ສ.ບ.ກ.....
ນະຄອນຫຼວງວຽງຈັນ, ວັນທີ: 10/05/2024...

ບິດບັນທຶກ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023.
ວັນທີ 29/04/2024

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ປະຈຳປີ 2023 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 29 ເມສາ 2024 ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 36 ທ່ານ, ຜູ້ມອບສິດຈຳນວນ 188 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 179,578,228 ຮຸ້ນ, ນັບທັງ 20,993,178 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 86.451% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 28,145,072 ຮຸ້ນ ເທົ່າກັບ 13.549% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ຄະນະປະທານ ແລະ ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ປະກອບມີ:

1. ທ່ານ ບຸນປອນ ວັນນະຈິດ, ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ, ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ຄຳສຸກ ສຸນດາລາ, ສະມາຊິກສະພາບໍລິຫານອິດສະຫຼະ, ຮອງປະທານ;
3. ທ່ານນາງ ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ, ສະມາຊິກສະພາບໍລິຫານ;
4. ທ່ານ ປະສົມພັດ ຄຳຕັນ, ສະມາຊິກສະພາບໍລິຫານ;
5. ທ່ານ ສະເຕຟານ ອຽກແບ້ງ, ຕາງໜ້າຄູ່ຮ່ວມຍຸດທະສາດ COFIBRED;
6. ທ່ານ ຣສຈ. ທອງພັດ ຈັນທະນີວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
7. ທ່ານ ສອນໄຊ ສີລາພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
8. ທ່ານນາງ ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບິດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ທຄຕລ ປະຈຳປີ 2022:

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຫຍໍ້ເນື້ອໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ປະຈຳປີ 2022 ທີ່ໄດ້ຈັດຂຶ້ນໃນວັນທີ 27 ເມສາ 2023, ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະໜີກອງປະຊຸມ ພິຈາລະນາຮັບຮອງເອົາບົດບັນທຶກດັ່ງກ່າວ.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2023

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບ ຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2023 ທີ່ຜ່ານການກວດສອບແລ້ວ ເຊິ່ງມີບາງເນື້ອໃນສຳຄັນດັ່ງນີ້:

ການດຳເນີນງານທີ່ພົ້ນເດັ່ນຂອງ ທຄຕລ ໃນໄລຍະປີ 2023 ມີດັ່ງນີ້:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 100 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ ທຄຕລ;
- ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ ຈຳນວນ 4 ຄັ້ງ ແລະ ວິສາມັນ 1 ຄັ້ງ, ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 4 ຄັ້ງ;
- ໄດ້ຈັດຂຶ້ນສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ ປະຈຳປີ 2023, ສະຫຼຸບຜົນການຈັດຕັ້ງປະຕິບັດ KPI ຂອງສາຂາ ປະຈຳປີ 2022 ແລະ ກຳນົດ KPI ປະຈຳປີ 2023;
- ຈຳໜ່າຍພັນທະບັດທະນາຄານແຫ່ງ ສປປ ລາວ 2 ຄັ້ງ ຂອງງວດທີ 2 (ຄັ້ງທີ 2 ແລະ 3);
- ສຳເລັດການພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ ແລະ ການບໍລິການ ເຊັ່ນ: Go-Live ນຳໃຊ້ລະບົບການອະນຸມັດສິນເຊື່ອ LOS; ພັດທະນາຟັງຊັ່ນຕ່າງໆໃນແອັບ BCEL One ຄື: Tipme, OneX, ໂອນເງິນຢອນໄປ WeChat, OneCash wallet ສຳລັບນັກທ່ອງທ່ຽວຕ່າງປະເທດ, Consumer Loan, ຄິວອອນລາຍ, ການຈອງພັນທະບັດ ທຫລ ແລະ Currency Exchange (ຕະຫຼາດແລກປ່ຽນ); ພັດທະນາ **EzyKip App** ສຳລັບນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວ ສປປ ລາວ ແລະ ອື່ນໆ.
- ເປີດໜ່ວຍບໍລິການ 2 ແຫ່ງ ຄື: ໜ່ວຍບໍລິການຊາຍແດນລາວບາວ ແລະ ໜ່ວຍບໍລິການສາມຫຼ່ຽມຄຳ;
- ຮ່ວມມືທາງດ້ານທຸລະກິດກັບພາກສ່ວນຕ່າງໆທີ່ສຳຄັນ: ຮ່ວມມືກັບບໍລິສັດ Tencent ຂອງ ສປ ຈີນ ໃນໂຄງການໂອນເງິນໄປຈີນຜ່ານ BCEL One ຫາ We-Chat; ຮ່ວມມືກັບ KEB Hana Bank ສ. ເກົາຫຼີ ໃນໂຄງການຊຳລະຜ່ານລະບົບ GLN ສະແກນ QR Code ຜ່ານ BCELOnePay ແລະ ເປີດໂຕການໃຫ້ບໍລິການໂອນເງິນຂ້າມແດນລະຫວ່າງ ສປປ ລາວ ແລະ ສ. ເກົາຫຼີ (BCEL ແລະ GLN International); ຮ່ວມມືກັນບໍລິສັດລິດໄຟລາວ-ຈີນ

ຈຳກັດ ໃນການຂາຍປີ້ລົດໄຟອອນລາຍຜ່ານແອັບ LCR ຊຳລະຜ່ານ BCEL One ແລະ ຮ່ວມມືກັບບໍລິສັດ ພຣູເດັນ ໂຊລ ປະກັນໄພຊີວິດ (ລາວ) ຈຳກັດ ໃນການຊື້ປະກັນໄພຜ່ານ BCEL One;

- ໄດ້ຮັບລາງວັນນັກທຸລະກິດ ຊັ້ນນຳດີເດັ່ນ ສຄອຊ ປະຈຳປີ 2022 (Lao Business Leader Award 2022) ແລະ ໄດ້ຮັບ 4 ລາງວັນດ້ານການດຳເນີນທຸລະກິດດີເດັ່ນ (VISA Client forum 2023) ປະກອບມີ: ❶ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂ້າມແດນ, ❷ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະຂອງຮ້ານຄ້າ, ❸ ລາງວັນດີເດັ່ນ ໃນການອະນຸມັດລາຍການບັດທີ່ດີທີ່ສຸດ ແລະ ❹ ລາງວັນດີເດັ່ນ ຜູ້ນຳດ້ານການຊຳລະສະສາງ.

ຜົນການດຳເນີນທຸລະກິດປະຈຳປີ 2023 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ: 126,433,759 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 127.10%;
- ຍອດສິນເຊື່ອທັງໝົດ: 52,198,063 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 104.29%;
- NPL: 1.92%;
- ຍອດເງິນຝາກທັງໝົດ: 117,626,838 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 129.26%;
- ກຳໄລສຸດທິ ຫຼັງຫັກອາກອນ: 231,408 ລ້ານກີບ, ທຽບໃສ່ແຜນການປີ 2023 ປະຕິບັດໄດ້ 115.70%.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ ທ່ານ ສອນນາລິນ ແສງມະນີ ລາຍງານການຮັບຄຳຖາມລ່ວງໜ້າຈາກ **ທ່ານ ໄກອັນ ກາດາອານິດ** ຈາກສະມາຄົມຜູ້ຖືຮຸ້ນໄທ: ຂໍໃຫ້ ອະທິບາຍ 4 ລາງວັນທີ່ ທຄຕລ ໄດ້ຮັບໃນປີ 2023 ມີຫຍັງແດ່.

➢ **ທ່ານ ນັນທະລາດ ແກ້ວປະເສີດ** ໄດ້ຊີ້ແຈງວ່າ: 4 ລາງວັນທີ່ ທຄຕລ ໄດ້ຮັບໃນປີ 2023 ແມ່ນຮັບຈາກການບໍລິການບັດ VISA ລວມມີ: ທຄຕລ ມີຍອດລູກຄ້ານຳໃຊ້ບັດຢູ່ຕ່າງປະເທດສູງສຸດ; ລາງວັນທີ່ຍອດຂາຍໃຫ້ຄົນຕ່າງປະເທດສູງສຸດໃນລາວ (ຄົນຕ່າງປະເທດໃຊ້ບັດ VISA ຊຳລະຜ່ານເຄື່ອງຮູດ ທຄຕລ ຫຼາຍສຸດໃນລາວ); ລາງວັນດີເດັ່ນ ດ້ານລະບົບຂອງບັດ ໄດ້ຮັບອະນຸມັດສູງສຸດ (ໂອກາດທີ່ບັດຖືກປະຕິເສດ/ມີບັນຫາໜ້ອຍກວ່າໝູ່); ແລະ ສຸດທ້າຍແມ່ນ ຍອດຂາຍບັດ ນຳໃຊ້ບັດທັງໝົດ ທຽບຄູ່ແຂ່ງໃນລາວ ມີຍອດສູງສຸດ; 4 ລາງວັນດັ່ງກ່າວແມ່ນໄດ້ຮັບຈາກສູນບັດວີຊາສາກົນປະຈຳປີ 2023.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
– ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2023 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ການຈັດສັນກຳໄລຫຼັງອາກອນປະຈຳປີ 2023 ເພື່ອຈ່າຍເຂົ້າຄັງຕ່າງໆຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ແບ່ງເຂົ້າຄັງສະສົມຕາມລະບຽບການ: **10%**;
- ຈ່າຍເງິນປັນຜົນ: **300 ກີບ/ຮຸ້ນ** ລວມມູນຄ່າເງິນປັນຜົນທັງໝົດ **62,316,990,000 ກີບ**;
- ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;
- ມື້ຈ່າຍເງິນປັນຜົນ: **14/05/2024**.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,569,858 ສຽງ, ເທົ່າກັບ 99.995 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 8,370 ສຽງ, ເທົ່າກັບ 0.005% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2024

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ແຜນການປະຈຳປີ 2024 ເຊິ່ງມີຄາດໝາຍບາງຕົວເລກສຳຄັນ ດັ່ງນີ້:

- ຍອດຊັບສິນ: ບໍ່ໜ້ອຍ 140,795,000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 11.36%;
- ເງິນຝາກ: ບໍ່ໜ້ອຍ 130,000,000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 10.52%;
- ເງິນກູ້: ບໍ່ໜ້ອຍ 59,470,000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 13.93% ຫຼື ຍອດເງິນກູ້ໃຫ້ກວມ ອັດຕາສ່ວນບໍ່ໜ້ອຍ 45% ຂອງຍອດເງິນຝາກທັງໝົດ;
- NPL: ບໍ່ເກີນ 3%;
- ກຳໄລສຸດທິ (ຫຼັງຫັກອາກອນ): ບໍ່ໜ້ອຍ 300,000 ລ້ານກີບ ທຽບໃສ່ປະຕິບັດປີ 2023 ເພີ່ມຂຶ້ນ 29.64%;
- ແຜນຂະຫຍາຍຕາໜ່າງບໍລິການໃໝ່ 4 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 1 ແຫ່ງ;
- ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດ 585.10 ຕື້ກີບ;
- ແຜນຮັບພະນັກງານໃໝ່ ຈຳນວນ 66 ຄົນ.

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

– ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2024

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ບໍລິສັດ EY ເປັນຜູ້ກວດສອບອິດສະຫຼະ ເພື່ອດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2024 ແລະ ອອກບົດລາຍງານໃຫ້ ທຄຕລ 5 ບົດຄື:

1) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS);
2) ບົດລາຍງານການກວດສອບເອກະສານລາຍງານການເງິນ ຕາມມາດຕະຖານສາກົນ (IFRS special purpose);
3) ຈົດໝາຍຄຸ້ມຄອງເຖິງຜູ້ບໍລິຫານ (Management Letter);
4) ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational review report);
5) ບົດລາຍງານການທົບທວນຄືນຖານະເງິນກູ້ (Loan review report).

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
– ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ເອົາ **ທ່ານ ປອ. ອາຄົມ ປຣະເສີດ** ເປັນຮອງປະທານສະພາບໍລິຫານ ທຄຕລ **ແທນທ່ານ ຄຳສຸກ ສຸນດາລາ** ທີ່ ໄດ້ຄົບວາລະການດຳລົງຕຳແໜ່ງ ເຊິ່ງເຮັດໃຫ້ສະມາຊິກສະພາບໍລິຫານ ທຄຕລ ປະກອບມີດັ່ງນີ້:

1. ທ່ານ ບຸນປອນ ວັນນະຈິດ	ຮອງລັດຖະມົນຕີກະຊວງການເງິນ ປະທານ
2. ທ່ານ ປອ. ອາຄົມ ປຣະເສີດ	ຜູ້ອຳນວຍການສະຖາບັນການທະນາຄານ, ຮອງປະທານ
3. ທ່ານນາງ ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ ທຄຕລ, ກຳມະການ
4. ທ່ານ ປະສົມພັດ ຄຳຕັນ	ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດແລະປະກັນໄພ, ກຳມະການ
5. ທ່ານ Stephane Mangiavacca	ຕົວແທນ COFIBRED ຄູ່ຮ່ວມຍຸດທະສາດ, ກຳມະການ
6. ທ່ານ ຣສ .ທອງພັດ ຈັນທະນີວົງ	ສະມາຊິກອິດສະຫຼະ, ກຳມະການ
7. ທ່ານ ນ .ລັດດາວັນ ຊົງວິໄລ	ສະມາຊິກອິດສະຫຼະ, ກຳມະການ
8. ທ່ານ ສອນໄຊ ສີລາພັດ	ສະມາຊິກອິດສະຫຼະ, ກຳມະການ

ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມທີ່ກ່ຽວຂ້ອງກັບວາລະນີ້ ແຕ່ບໍ່ມີຄຳຖາມໃດໆ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງ ການປ່ຽນແປງມູນຄ່າກຳນົດຮຸ້ນ ທຄຕລ

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງ ການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split): ເພື່ອເພີ່ມສະພາບຄ່ອງຂອງການຊື້-ຂາຍຮຸ້ນຂອງ ທຄຕລ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອເຮັດໃຫ້ນັກລົງທຶນສາມາດເຂົ້າເຖິງຮຸ້ນຂອງ ທຄຕລ ໄດ້ຫຼາຍຂຶ້ນ ດ້ວຍລາຄາທີ່ຖືກລົງ ແຕ່ໃນຂະນະດຽວກັນມູນຄ່າຫຼັກຊັບຕາມລາຄາຕະຫຼາດຍັງຄົງເດີມ ທຄຕລ ໄດ້ຄົ້ນຄວ້າໂດຍສົມທົບກັບຜູ້ຄຸ້ມຄອງທີ່ກ່ຽວຂ້ອງ ໃນການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1/5 ໝາຍຄວາມວ່າຈາກເດີມລາຄາ 5,000 ກີບ/ຮຸ້ນ ເປັນລາຄາ 1,000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ 207,723,300 ຮຸ້ນ ເປັນ 1,038,616,500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມ, ມູນຄ່າຫຼັກຊັບຕາມລາຄາຕະຫຼາດບໍ່ມີການປ່ຽນແປງ ແລະ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

- **ທ່ານ ແກ້ວຕາດຳ ມະໂນລົມ,ຜູ້ຖືຮຸ້ນ**: ຂໍໃຫ້ ທຄຕລ ອະທິບາຍຕື່ມກ່ຽວກັບການແຕກຮຸ້ນ, ຕາມຄວາມເຂົ້າໃຈຂອງຕົນເອງແມ່ນ ຈາກອັດຕາສ່ວນທີ່ຜູ້ຖືຮຸ້ນເຄີຍຖື ຕົວຢ່າງ, ຈາກ 80,000 ຮຸ້ນ ມູນຄ່າ 400 ລ້ານກີບ, ຫຼັງຈາກແຕກຮຸ້ນ ມູນຄ່າຮຸ້ນຈະຫຼຸດລົງຄືແນວໃດບໍ່?
- **ທ່ານ ນ. ສາຍສະໝອນ ຈັນທະຈັກ ຊີ້ແຈງ**: ໃນຕະຫຼາດຫຼັກຊັບສາກົນເຄີຍມີບາງບໍລິສັດຈົດທະບຽນໄດ້ປະຕິບັດມາກ່ອນແລ້ວ; ຈາກຕົວຢ່າງທີ່ຜູ້ຖືຮຸ້ນຍົກຂຶ້ນນັ້ນ ຫຼັງປ່ຽນແປງ (ແຕກຮຸ້ນ) ມູນຄ່າການຖືຮຸ້ນຂອງຜູ້ຖືຮຸ້ນຈະຍັງຄົງເທົ່າກັບ 400 ລ້ານກີບຕາມເດີມ ພຽງແຕ່ຈຳນວນຮຸ້ນຈະຫຼາຍຂຶ້ນ 5 ເທົ່າ ຈາກ 80,000 ເປັນ 400,000 ຮຸ້ນ; ການປ່ຽນແປງນີ້ ຄາດວ່າຈະຊ່ວຍເຮັດໃຫ້ ການຊື້-ຂາຍຮຸ້ນໃນຕະຫຼາດຈະຄ່ອງຕົວກວ່າເກົ່າ ເຊັ່ນ: ຜູ້ຖືຮຸ້ນສາມາດແບ່ງຂາຍຮຸ້ນຖືຕົ້ນຖືຄອງໄດ້ງ່າຍຂຶ້ນ, ນັກລົງທຶນ ກໍ່ສາມາດຊື້ຮຸ້ນໄດ້ງ່າຍຂຶ້ນ ໂດຍບໍ່ຈຳເປັນຕ້ອງລົງທຶນໃນວົງເງິນທີ່ສູງ ຫຼື ມີເງິນກ້ອນໃຫຍ່ຈຶ່ງສາມາດຊື້ຮຸ້ນໄດ້; ໃນອະນາຄົດ ທຄຕລ ກໍ່ຍັງມີແຜນໃນການຈ່າຍໂບນັດເປັນຮຸ້ນໃຫ້ພະນັກງານຕື່ມອີກ ຖ້າມູນຄ່າກຳນົດຮຸ້ນສູງຫຼາຍ ກໍ່ຈະໄດ້ຮຸ້ນໃນຈຳນວນທີ່ໜ້ອຍ ເຊິ່ງອາດຈະບໍ່ເປັນທີ່ດຶງດູດໃຈພະນັກງານໄດ້;
- **ທ່ານ ບຸນປອນ ອັນນະຈິດ**: ຈາກການອະທິບາຍເພີ່ມເຕີມຈາກ ທ່ານຜູ້ອຳນວຍການ ທຄຕລ ເຫັນວ່າ ການແຕກຮຸ້ນຈະບໍ່ມີຜົນກະທົບດ້ານລົບ ແຕ່ຈະເປັນການສ້າງຄຸນຄ່າ ແລະ ສ້າງຄວາມສະດວກໃຫ້ການຊື້-ຂາຍຮຸ້ນຫຼາຍຂຶ້ນ;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຫຼື ທຽບເທົ່າ 3/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 86.450% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.
- ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຫຼື ທຽບເທົ່າ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ທຽບເທົ່າ 0.001% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງ ການປັບປຸງກົດລະບຽບຂອງ ທຄຕລ

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ຂອງ ທຄຕລ ໃຫ້ແທດເໝາະກັບການປັບປຸງໂຄງສ້າງຂອງຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ ຈາກເດີມ 5 ມາເປັນ 4 ຄະນະກຳມະການ ເພື່ອໃຫ້ມີຄວາມກະທັດຮັດ, ຮັບປະກັນຄວາມຄ່ອງຕົວໃນການດຳເນີນງານ ຂອງຄະນະກຳມະການ ເຊິ່ງການປັບປຸງໂຄງສ້າງດັ່ງກ່າວໄດ້ຮັບການເຫັນດີຈາກຜູ້ຄຸ້ມຄອງທີ່ກ່ຽວຂ້ອງແລ້ວ ແລະ ສືບເນື່ອງຈາກ ທຄຕລ ໄດ້ສະເໜີການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ທຄຕລ ຕາມການສະເໜີໃນວາລະຂ້າງເທິງຜ່ານມານັ້ນ.

ດ້ວຍເຫດນີ້ ຈຶ່ງຈຳເປັນຕ້ອງໄດ້ປັບປຸງເນື້ອໃນບາງມາດຕາຂອງກົດລະບຽບຂອງ ທຄຕລ ທີ່ຕິດພັນກັບຮຸ້ນ ແລະ ຄະນະກຳມະການສະພາບໍລິຫານ ໃຫ້ມີຄວາມສອດຄ່ອງກັບການປ່ຽນແປງດັ່ງກ່າວ; ການປັບປຸງກົດລະບຽບໃນເທື່ອນີ້ ຈະເຮັດໃຫ້ກົດລະບຽບຂອງ ທຄຕລ ຍັງຄົງເຫຼືອ 72 ມາດຕາ ຈາກເດີມ 73 ມາດຕາ.

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໄກອັນ ກາດາອານິດ** ຈາກສະມາຄົມຜູ້ຖືຮຸ້ນໄທ: ວາລະນີ້ ທ່ານ ຜູ້ອຳນວຍການ ທຄຕລ ໄດ້ນຳສະເໜີກ່ຽວກັບການທີ່ປ່ຽນແປງຂອງກົດລະບຽບ ສືບເນື່ອງມາຈາກການການປ່ຽນແປງມູນຄ່າກຳນົດຮຸ້ນ ແລະ ການປັບປຸງຄະນະກຳມະການຂອງສະພາບໍລິຫານ, ເຊິ່ງໃນສ່ວນຕົວແລ້ວເຫັນວ່າ ການປ່ຽນແປງມູນຄ່າກຳນົດຮຸ້ນ ອາດເປັນພຽງແຕ່ການຈົດທະບຽນແກ້ໄຂໃໝ່ເທົ່ານັ້ນ ແລະ ມັນເປັນຄົນລະເລື່ອງກັນກັບການປ່ຽນແປງກົດລະບຽບ. ສະນັ້ນປະເດັນທີ່ສະເໜີໃຫ້ຜູ້ຖືຮຸ້ນອະນຸມັດຄວນແບ່ງເປັນ 2 ສ່ວນໃນວາລະນີ້ຄື: ການປ່ຽນຊື່ຄະນະກຳມະການຂອງສະພາບໍລິຫານ ແລະ ການຂໍອະນຸມັດຕັດຄະນະກຳມະການຊຸດທີ 5 ເພື່ອນຳລວມເຂົ້າກັນກັບຄະນະກຳມະການທີ 4; ສ່ວນເລື່ອງການປ່ຽນແປງມູນຄ່າກຳນົດຮຸ້ນໃນວາລະທີ 7 ນັ້ນເຫັນວ່າເພື່ອສ້າງຄວາມສະດວກໃນການດຳເນີນການພ້ອມກັນ ແຕ່ການປ່ຽນແປງກົດລະບຽບ ກ່ຽວກັບເລື່ອງຮຸ້ນ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ:** ຂໍຂອບໃຈ ຕໍ່ຄຳເຫັນຂອງ ທ່ານ ໄກອັນ, ໂດຍລວມແລ້ວ ຄຳເຫັນທີ່ທ່ານຍົກຂຶ້ນອາດເປັນການເບິ່ງຄົນລະດ້ານກັນ, ທຄຕລ ແມ່ນເຮັດແບບກະທັດຮັດໃນການສະເໜີຂໍປັບປຸງກົດລະບຽບ ຍ້ອນມີການປ່ຽນແປງ 2 ຢ່າງ: ຄະນະກຳມະການຂອງສະພາບໍລິຫານ ແລະ ການປ່ຽນແປງມູນຄ່າກຳນົດຮຸ້ນ ຈຶ່ງໄດ້ສະເໜີຄັ້ງດຽວກັນ ໃຫ້ກະທັດຮັດແລະໄວຂຶ້ນ ເພື່ອເປັນບ່ອນອີງໃນການນຳສະເໜີເຖິງຜູ້ຄຸ້ມຄອງຫຼືກະຊວງທີ່ກ່ຽວຂ້ອງ.

➢ **ທ່ານ ສອນນາລິນ ແສງມະນີ:** ຊີ້ແຈງ ຕໍ່ປະເດັນ ທີ່ ທ່ານ ໄກອັນ ຍົກຂຶ້ນ, ການປ່ຽນແປງມູນຄ່າກຳນົດຮຸ້ນ ຕິດພັນກັບກົດລະບຽບ ທຄຕລ ຍ້ອນມູນຄ່າກຳນົດຮຸ້ນ ໄດ້ຖືກລະບຸໄວ້ຢູ່ໃນກົດລະບຽບ, ສະນັ້ນ ເມື່ອມີການປ່ຽນແປງມູນຄ່າຮຸ້ນ ກໍ່ຈຳເປັນຕ້ອງໄດ້ປັບປຸງກົດລະບຽບໃນຈຸດດັ່ງກ່າວໄປນຳ ແລະ ເປັນເງື່ອນໄຂໜຶ່ງຂອງບໍລິສັດຈົດທະບຽນທີ່ຕ້ອງຍື່ນຄຳຮ້ອງຈົດທະບຽນປ່ຽນແປງມູນຄ່າກຳນົດຮຸ້ນ ພ້ອມກັບກົດລະບຽບຂອງບໍລິສັດທີ່ໄດ້ປັບປຸງແລ້ວ. ຕິດພັນກັບການ

ປ່ຽນແປງຄະນະກຳມະການຈາກ 5 ເປັນ 4 ຄະນະກຳມະການ ເຊິ່ງໄດ້ມີການຕັດມາດຕາໃນກົດລະບຽບຈາກ 73 ມາດຕາ ເຫຼືອ 72 ມາດຕານັ້ນ ບໍ່ແມ່ນການຕັດເນື້ອໃນ ກ່ຽວກັບ ໜ້າທີ່ຂອງຄະນະກຳມະການໃດໜຶ່ງອອກໄປ ພຽງແຕ່ເປັນການ ໂຮມເນື້ອໃນ ກ່ຽວກັບ ໜ້າທີ່ຂອງຄະນະກຳມະການດັ່ງກ່າວເຂົ້າກັນກັບໜ້າທີ່ຂອງຄະນະກຳມະການທີ່ຖືກໂຮມເຂົ້າກັນ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 179,577,158 ສຽງ, ເທົ່າກັບ 99.999% ຫຼື ທຽບເທົ່າກັບ 3/3 ຂອງຈຳນວນສຽງທັງໝົດທີ່ ເຂົ້າຮ່ວມກອງປະຊຸມ ແລະ ເທົ່າກັບ 86.450% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.
- ບໍ່ເຫັນດີຈຳນວນ: 1,070 ສຽງ, ເທົ່າກັບ 0.001% ຫຼື ທຽບເທົ່າກັບ 0/3 ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມ ກອງປະຊຸມ ແລະ ທຽບເທົ່າກັບ 0.001% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ຄຳຖາມ ແລະ ຄຳເຫັນເພີ່ມເຕີມອື່ນໆ:

❖ **ທ່ານ ໄກອັນ ກາດາອານິດ**: ຂໍຖາມເປັນຄວາມຮູ້ວ່າລາງວັນທີ່ ທຄຕລ ໄດ້ຮັບມີຄຳຫຍໍ້ວ່າ CP ຫຍໍ້ມາຈາກຫຍັງ, ໃນຕົວເລກ NPL ທີ່ ທຄຕລ ໄດ້ນຳສະເໜີນີ້ ລວມເອົາຕົວເລກໜີ້ຄ້າງຊຳລະຄ່າທຳນຽມບໍລິການທັງໝົດບໍ່?; ຄ່າທຳ ນຽມຜະລິດຕະພັນ (ບໍ່ແມ່ນເງິນກູ້) ທີ່ຄົບກຳນົດແຕ່ບໍ່ຊຳລະ ຈະລວມໃນ NPL ບໍ່?

- ສະແດງຄວາມຊົມເຊີຍ: ສັງເກດໄດ້ວ່າ ການບັນທຶກກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາເນື້ອໃນຄົບຖ້ວນ ແລະ ແປ ຖືກຕ້ອງ, ແຕ່ສຳລັບການແປ ມີບາງຄຳສັບຈະໄດ້ແຈ້ງການໃຊ້ຄຳສັບທີ່ຖືກຕ້ອງ ແລະ ເໝາະສົມ ໃຫ້ ທຄຕລ ຊາບ ຕາມພາຍຫລັງຕື່ມ ເນື່ອງຈາກເປັນສັບວິຊາສະເພາະ ເພື່ອບໍ່ໃຫ້ຜູ້ອ່ານສັບສົນ ແລະ ໃນວາລະທີ 7 ຂອງກອງປະຊຸມ ຄັ້ງນີ້ ທ່ານ ຜູ້ອຳນວຍການ ໄດ້ສື່ຄວາມໝາຍ ແລະ ອະທິບາຍ ຈະແຈ້ງດີ.

➢ **ທ່ານ ນັນທະລາດ ແກ້ວປະເສີດ**: CP ຫຍໍ້ມາ Card Present, ເປັນສັບສະເພາະຂອງການໃຊ້ບັດ ໝາຍເຖິງ ການໃຊ້ບັດຕົວຈິງ (Physical card) ໃນເວລາຊຳລະສິນຄ້າ ເຊິ່ງຕ່າງຈາກການໃຊ້ບັດທາງອອນລາຍ;

➢ **ທ່ານ ບຸນທັນ ແກ້ວບຸບຜາ:** ຕິດພັນປະເດັນວຽກງານສິນເຊື່ອ, ເນື່ອງຈາກການປ່ອຍກູ້ຈະມີການເກັບຄ່າທຳນຽມ ກ່ອນຈຶ່ງອະນຸມັດໃຫ້ເບີກເງິນກູ້ ຈະບໍ່ມີຄ່າທຳນຽມຄ້າງ, ສຳຫຼັບການຄ້າງຊຳລະງວດຕົ້ນທຶນ ແລະ ດອກເບ້ຍ ການແກ້ ໄຂແມ່ນປະຕິບັດຕາມລະບຽບ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ:** NPL ແມ່ນຕົວເລກໜີ້ສິນສະເພາະຈາກລູກຄ້າສິນເຊື່ອ, ລູກຄ້າທີ່ເປັນ NPL ຈະຖືກສັງລວມພາລະຜູກພັນ ທັງຕົ້ນທຶນ ແລະ ດອກເບ້ຍ (ດອກເບ້ຍປົກກະຕິ, ດອກເບ້ຍຕົກເກດ ແລະ ດອກເບ້ຍປັບ ໃໝ), ຖ້າຄ້າງຄ່າທຳນຽມໃດໜຶ່ງຈະຄິດໄລ່ເຂົ້າເປັນຕົ້ນທຶນທີ່ລູກຄ້າຕ້ອງຊຳລະຄືນ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງ ປະຊຸມ ແລະ ໄດ້ປະກາດປິດກອງປະຊຸມໃນເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ | **ຜູ້ບັນທຶກ**

ບຸນປອນ ອັນນະຈິດ | **ສອນນາລິນ ແສງມະນີ**

ລາຍງານຜົນການດຳເນີນງານຂອງ ທຄຕລ ປະຈຳປີ 2024 ໂດຍສັງເຂບ

ປີ 2024 ການດຳເນີນທຸລະກິດຂອງ ທຄຕລ ຍັງສືບຕໍ່ພົບກັບຄວາມຫຍຸ້ງຍາກຫຼາຍດ້ານ ຈາກຜົນລວມຂອງ ເສດຖະກິດມະຫາພາກທີ່ຟື້ນຕົວຊ້າ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄານ້ຳມັນ ແລະ ບັນຫາອື່ນໆ. ແຕ່ເຖິງ ຢ່າງໃດກໍ່ຕາມ, ດ້ວຍຄວາມເອົາໃຈໃສ່ຂອງຄະນະບໍລິຫານງານ ແລະ ພະນັກງານທັງໝົດ ທີ່ໄດ້ພ້ອມກັນທຸ່ມເທສະຕິ ປັນຍາ ແລະ ເຫື່ອແຮງເຂົ້າໃນການດຳເນີນທຸລະກິດຂອງຕົນ ເຮັດໃຫ້ ທຄຕລ ມີຜົນສຳເລັດຫຼາຍດ້ານ ເຊິ່ງສະແດງ ອອກດັ່ງນີ້:

1. ການເຄື່ອນໄຫວວຽກງານຕ່າງໆທີ່ພົ້ນເດັ່ນໂດຍຫຍໍ້

ໃນໄລຍະ 1 ປີຜ່ານມາ ທຄຕລ ມີການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຫຼາຍດ້ານ ເຊິ່ງສາມາດສະຫຼຸບສັງລວມ ໂດຍຫຍໍ້ ດັ່ງນີ້:

- ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2023 ພ້ອມທັງສຳເລັດການຈ່າຍເງິນປັນຜົນ ຈຳນວນ 300 ກີບ/ຮຸ້ນ ໃຫ້ແກ່ຜູ້ຖືຮຸ້ນ; ຈັດກອງປະຊຸມສະພາບໍລິຫານ ທຄຕລ 11 ຄັ້ງ (ສາມັນ 4 ຄັ້ງ ແລະ ວິສາມັນ 7 ຄັ້ງ) ແລະ ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງ ທຄຕລ 4 ຄັ້ງ (ກອງປະຊຸມປະຈຳປີ 1 ຄັ້ງ ແລະ ປະຈຳໄຕມາດ 3 ຄັ້ງ);
- ຈັດພິທີສະເຫຼີມສະຫຼອງວັນຫັນເປັນທຸລະກິດ ທຄຕລ ຄົບຮອບ 35 ປີ;
- ທົບທວນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດ 2021 – 2025;
- ດຳເນີນການຄົ້ນຄວ້າກຳນົດແຜນຍຸດທະສາດ 5 ປີສະບັບໃໝ່ ຂອງ ທຄຕລ ໄລຍະ 2025 – 2029;
- ຈັດຂັ້ນສາຂາ ແລະ ໜ່ວຍບໍລິການ ທົ່ວລະບົບ ປະຈຳປີ 2024; ກຳນົດ KPI ຂອງສາຂາ ປະຈຳປີ 2024 ພ້ອມ ທັງຍ້ອງຍໍ ແລະ ໃຫ້ລາງວັນປະຈຳປີຂອງວຽກງານ KPI ແລະ ວຽກງານການຈັດຂັ້ນສາຂາ ແລະ ໜ່ວຍ ບໍລິການ;
- ສຳເລັດການຄົ້ນຄວ້າວິທີແກ້ໄຂອັດຕາສ່ວນຄວາມພຽງພໍຂອງທຶນ (CAR ratio) ຂອງ ທຄຕລ, ເຊິ່ງໄດ້ ຮັບຮອງດ້ານຫຼັກການຈາກສະພາບໍລິຫານ ເພື່ອດຳເນີນການຂັ້ນຕອນໃນການເພີ່ມທຶນຈົດທະບຽນ;
- ຄົ້ນຄວ້າເບື້ອງຕົ້ນກ່ຽວກັບການປັບປຸງຕົວຊີ້ວັດລະດັບຄວາມສ່ຽງທີ່ຍອມຮັບໄດ້ດ້ານສິນເຊື່ອ (ຂອບເຂດ ການໃຫ້ສິນເຊື່ອໃນຂະແໜງອຸດສາຫະກຳຕ່ຳຍອດສິນເຊື່ອທັງໝົດ) ແລະ ດ້ານຕະຫຼາດ (ການລົງທຶນໃນ ຜັນທະບັດ);
- ເປີດເຜີຍບົດລາຍງານປະຈຳປີ 2023 ແລະ ປະຈຳແຕ່ລະໄຕມາດ 2024. ພ້ອມທັງເປີດເຜີຍລາຍງານການເງິນ ມາດຖານສາກົນ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ ແລະ ເວັບໄຊ໌ຂອງ ທຄຕລ;
- ເຊັນສັນຍາກວດສອບກັບ ບໍລິສັດ EY ເປັນຜູ້ກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2024;
- ພັດທະນາເຄື່ອງມືດ້ານໄອທີ, ຜະລິດຕະພັນ ແລະ ການບໍລິການ ເຊັ່ນ: ພັດທະນາ EzyKip App ເພື່ອໃຫ້ນັກ ທ່ອງທ່ຽວຕ່າງປະເທດເຂົ້າມາ ສປປ ລາວ; Go Live SWIFT ISO20022; ເປີດໂຕການບໍລິການໂອນເງິນ ຂ້າມແດນຜ່ານມືຖືຈາກ ສ. ເກົາຫຼີ ຫາ ສປປ ລາວ ຜ່ານແອັບ BCEL One; ບໍລິການຊຳລະສະສາງຂ້າມ ແດນລາວ-ໄທ ຜ່ານ QR Code; ບໍລິການຊຳລະສະສາງ Unionpay QR ຜ່ານ BCEL One; ເປີດໂຕ BCEL VISA Corporate; ເປີດໂຕ OneBank ທີ່ໄດ້ລວມ 2 ແອັບ BCEL One ແລະ i-Bank ເຂົ້າ ມາລວມກັນ; ເຊື່ອມຕໍ່ຊຳລະພາສີ ແລະ ອາກອນກັບລະບົບ FINLINK ຂອງກະຊວງການເງິນ; ຍົກລະດັບ ຕົວແທນ BCOME ເປັນ Super Agent ແລະ ພັດທະນາການ Settlement ເປັນສະກຸນເງິນຢວນຂອງບັດ UnionPay;
- ເປີດໜ່ວຍບໍລິການ 02 ແຫ່ງ ຄື: ໜ່ວຍບໍລິການໄຊມຸງຄຸນ ຂຶ້ນກັບສາຂານະຄອນຫຼວງວຽງຈັນ ແລະ ໜ່ວຍ ບໍລິການວັງເຕົ່າ-ຊ່ອງເມັກ ຂຶ້ນກັບສາຂາຈຳປາສັກ;

- **ການຮ່ວມມືກັບພາກສ່ວນພາຍນອກ:** ເຊື່ອມຕໍ່ OnePay E-Commerce ກັບ ບໍລິສັດ ດວງດີ ທະວີໂຊກ ຈຳກັດຜູ້ດຽວ (ຫວຍດວງດີ); ຕໍ່ສັນຍາການຮ່ວມມືກະເປົ໋າເງິນເອເລັກໂທຣນິກຂອງ 2 ບໍລິສັດຄື: M-Money ແລະ U-Money; ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ການຮ່ວມມື ເພື່ອຊຸກຍູ້ການລົງທຶນຂອງໄທ ໃນ ສປປ ລາວ ສົ່ງເສີມການພັດທະນາແບບຍືນຍົງ ລະຫວ່າງ ທຄຕລ ແລະ ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ (EXIM Thailand); ເຊັນສັນຍາລະຫວ່າງ ທຄຕລ ແລະ ກຸ່ມບໍລິສັດ ວຽງຈັນປະກັນໄພ ພ້ອມດ້ວຍການເປີດໂຕການໃຫ້ບໍລິການຊື້-ຂາຍປະກັນໄພ ຜ່ານແອັບ BCEL One.
- **ລາງວັນຊີ້ງກຽດທີ່ໄດ້ຮັບ:**
  - ✓ ລາງວັນຜູ້ອອກບັດດີເດັ່ນ ປະຈຳປີ 2023 (Best Issuing Member Award 2023) ຂອງບໍລິສັດ **UnionPay** ສາກົນ;
  - ✓ ລາງວັນຜົນງານດີເດັ່ນໃນການປະຕິບັດພັນທະສ່ວຍສາອາກອນເຂົ້າງົບປະມານແຫ່ງລັດ ປະຈຳປີ 2022;
  - ✓ ລາງວັນດີເດັ່ນດ້ານຄຸນນະພາບທຸລະກຳເງິນໂອນຕ່າງປະເທດໃນການຊຳລະສະສາງເປັນສະກຸນໂດລາ ປະຈຳປີ 2024 ຈາກທະນາຄານ JP Morgan Chase Bank;
  - ✓ ໄດ້ຮັບ 2 ລາງວັນຂອງ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຄື: ລາງວັນການເປີດເຜີຍຂໍ້ມູນດີເດັ່ນ ປະ ເພດທີ I ປະຈຳປີ 2024 ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະເພດທີ I ປະຈຳປີ 2024.

2. ຜົນການດຳເນີນທຸລະກິດ ປະຈຳປີ 2024

- **ຍອດຊັບສິນ:** 142,191 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 100.99%;
- **ຍອດເງິນກູ້ທັງໝົດ:** 62,162 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 104.53%;
- **ອັດຕາສ່ວນ NPL:** 2.79%;
- **ຍອດເງິນຝາກ:** 133,135 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 102.41%;
- **ກຳໄລສຸດທິ:** 449 ຕື້ກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 149.85%.

3. ການປະຕິບັດແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຂຶ້ນແຜນໄວ້ມີຈຳນວນ 585.10 ຕື້ກີບ, ພາຍໃນປີ 2024 ສາມາດຈົດເຂົ້າເປັນຊັບສິນບັດຄົງທີ່ເພື່ອຫັກຄ່າຫຼຸ້ຍຫ້ຽນ ແລະ ຈົດເຂົ້າບັນຊີຊັບສິນບັດຄົງທີ່ພວມຊື້ ພວມກໍ່ສ້າງ ທັງໝົດຈຳນວນ 407.19 ຕື້ກີບ ເທົ່າກັບ 70% ຂອງແຜນການ.

4. ການຂະຫຍາຍຕາໜ່າງບໍລິການ

ປີ 2024 ທຄຕລ ໄດ້ຖືກຮັບຮອງແຜນຂະຫຍາຍໜ່ວຍບໍລິການໃໝ່ 4 ແຫ່ງ ແລະ ຍົກຍ້າຍສະຖານທີ່ 1 ແຫ່ງ ເຊິ່ງສາມາດເປີດບໍລິການໄດ້ທັງໝົດ 2 ແຫ່ງ ຄື: ໜ່ວຍບໍລິການໄຊມຸງຄຸນ ຂຶ້ນກັບສາຂານະຄອນຫຼວງວຽງຈັນ ແລະ ໜ່ວຍບໍລິການວັງເຕົ່າ-ຊ່ອງເມັກ ຂຶ້ນກັບສາຂາຈຳປາສັກ.

5. ການປະຕິບັດແຜນງານ, ໂຄງການ ແລະ ແຜນວຽກ

ລຳດັບ	ລາຍການ (11 ແຜນງານ, 38 ໂຄງການ)	ຈຳນວນ	2024
		420	80%
ຍຸດທະສາດ 1	**ສ້າງຄວາມເຂັ້ມແຂງໃຫ້ອົງກອນຮອບດ້ານ**	**274**	**88%**
ແຜນງານ 1	ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ	128	94%
ແຜນງານ 2	ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອທັນສະໄໝ	36	89%
ແຜນງານ 3	ການພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ	53	89%
ແຜນງານ 4	ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານດ້ານການຟອກເງິນໃຫ້ເຂັ້ມແຂງ	57	87%

ລຳດັບ	ລາຍການ (11 ແຜນງານ, 38 ໂຄງການ)	ຈຳນວນ	2024
		420	80%
ແຜນງານ 5	ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ	-	80%
ຍຸດທະສາດ 2	**ຫັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ**	**112**	**84%**
ແຜນງານ 6	ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ	41	81%
ແຜນງານ 7	ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ	18	79%
ແຜນງານ 8	ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking	53	93%
ຍຸດທະສາດ 3	**ສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ**	**34**	**66%**
ແຜນງານ 9	ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ	26	71%
ແຜນງານ 10	ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ.	5	100%
ແຜນງານ 11	ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard)	3	28%

6. ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ ໃນໄລຍະປີ 2024 ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

- ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ຊຶ່ງພາຍໃນປີ 2024 ໄດ້ເປີດຮັບບໍລິຈາກທັງໝົດ 07 ໂຄງການ ແລະ ພາຍໃນປີມີຜູ້ບໍລິຈາກທັງໝົດ 14,625 ຄັ້ງ, ລວມເງິນທັງໝົດຈຳນວນ 3,029.63 ລ້ານກີບ.
- ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆ ຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ພາຍໃນປີ 2024 ຈຳນວນ 135 ລາຍການ ລວມເປັນຈຳນວນເງິນທັງໝົດ 2,615.82 ລ້ານກີບ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານນັກກວດສອບອິດສະຫຼະ	4 - 8
ໃບລາຍງານຜົນການດຳເນີນງານ	9
ໃບລາຍງານຜົນການດຳເນີນງານນອກການທຸລະກິດ	10
ໃບລາຍງານຖານະການເງິນ	11
ໃບລາຍງານສ່ວນປ່ຽນແປງຂອງທຶນ	12
ໃບລາຍງານກະແສເງິນສົດ	13 -14
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	15 - 70

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງ ຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕ່າງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (“COFIBRED”) ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ເຊິ່ງເປັນທະນາຄານທີ່ ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68,047,300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3,098,400 ຮຸ້ນ ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355,728,500,000 ກີບ (ເທົ່າກັບ 71,145,700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429 /ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ວັນທີ 11 ຕຸລາ 2019, ສຳນັກງານຄະນະຄຸ້ມຄອງກຳມະການຫຼັກຊັບລາວໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນທັ້ງຈາກການສະເໜີຂາຍຮຸ້ນໃຫ້ແກ່ປະຊາຊົນ ແລະ ສາທາລະນະ. ຈຸດປະສົງຂອງການຂາຍຮຸ້ນຂອງລັດຖະບານແມ່ນເພື່ອສະໜັບສະໜູນຜູ້ຖືຮຸ້ນທີ່ມີຄວາມຫຼາກຫຼາຍຫຼາຍຂຶ້ນ ເພື່ອພັດທະນາທະນາຄານໃນການຂະຫຍາຍທຸລະກິດ ແລະ ຄວາມຍືນຍົງ. ວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຫຼັກຊັບລາວ ໄດ້ຢັ້ງຢືນວ່າທະນາຄານສະເໜີຂາຍຮຸ້ນ 10% ຂອງທະນາຄານສຳເລັດຜົນ.

ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124,634,021	60%
ຄູ່ຮ່ວມທາງຍຸດທະສາດ	20,772,359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	62,316,920	30%
	207,723,300	**100%**

ຂໍ້ມູນທົ່ວໄປ (ຕໍ່)

ທະນາຄານ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະ ສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2024 ແມ່ນ 1,038,617 ລ້ານກີບ (ນະວັນທີ 31 ທັນວາ 2023 : 1,038,617 ລ້ານກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2024 ທະນາຄານມີໜຶ່ງ (01) ສຳນັກງານໃຫຍ່, ເຈັດ (07) ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ, ຊາວ (20) ສາຂາ ຫຼັກ, ໜຶ່ງຮ້ອຍໜຶ່ງ (101) ໜ່ວຍບໍລິການ ແລະ ສິບສອງ (12) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2024 ທະນາຄານມີ ເຈັດ (07) ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດເລກທີ*	*ຂະແໜງການ*	*% ຖືຮຸ້ນຂອງ ທະນາຄານ*
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	10179/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍກະຊວງ ອຸດສາຫະກຳ ແລະ ການຄ້າ	ຫຼັກຊັບ	70%
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	732/ຫຈທ ລົງວັນທີ 29 ສິງຫາ 2016 ໂດຍກະຊວງອຸດ ສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	0495/ຫຈທ ລົງວັນທີ 07 ມິຖຸນາ 2018 ໂດຍກະຊວງອຸດ ສາຫະກຳ ແລະ ການຄ້າ	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ -ຫວຽດ	0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະ ກຳ ແລະ ການຄ້າ	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ກົມ ທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	31.35%
ບໍລິສັດ ເຄືອຂ່າຍການຈ່າຍ ເງິນແຫ່ງຊາດລາວ ຈຳກັດ	0349/ຫຈທ ລົງວັນທີ 12 ມີນາ 2019 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ ກະຊວງອຸດ ສາຫະກຳ ແລະ ການຄ້າ	ການຈັດການທຸລະ ກຳການຊຳລະ (ເອ ເລັກໂຕຣນິກ)	20%
ບໍລິສັດ ຕະຫຼາດແລກປ່ຽນ ເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ)	4016/ຫຈທ ລົງວັນທີ 22 ຕຸລາ 2024 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ ກະຊວງອຸດ ສາຫະກຳ ແລະ ການຄ້າ.	ການບໍລິການ ແລກປ່ຽນເງິນຕາ ຕ່າງປະເທດ (ເອ ເລັກໂຕຣນິກ)	10%

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີ ແລະ ນະອັນທີ ທີ່ອອກປົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ບຸນປອນ ອັນນະຈິດ	ປະທານ	ແຕ່ງຕັ້ງວັນທີ 27 ເມສາ 2023
ທ່ານ ປອ. ອາຄົມ ປຣະເສີດ	ຮອງປະທານ	ແຕ່ງຕັ້ງວັນທີ 29 ເມສາ 2024
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງວັນທີ 27 ເມສາ 2023 ລາອອກວັນທີ 29 ເມສາ 2024
ທ່ານ ປະສົມເພັດ ຄຳຕັນ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ສະຕີເຟັນ ມັງເຈຍອາກາ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ນ. ສາຍສະໝອນ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງວັນທີ 22 ພະຈິກ 2022
ທ່ານ ຣສ. ທອງເພັດ ຈັນທະນີວົງ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ສອນໄຊ ສີລາເພັດ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018 ລາອອກວັນທີ 30 ມີນາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີ ແລະ ນະອັນທີ ທີ່ອອກປົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 02 ສິງຫາ 2022
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019 ລາອອກວັນທີ 30 ມີນາ 2024
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ສາຍຈິດ ສີມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ນ. ພູແສງທອງ ອານຸລັກຄຳ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024
ທ່ານ ນາລິນ ສີລະວົງສິດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະເວລາຂອງການກວດສອບ ແລະ ນະມື້ອອກເອກະສານລາຍງານການເງິນ ສະບັບນີ້ແມ່ນ ທ່ານ ນ. ສາຍສະໝອນ ຈັນທະຈັກ - ຜູ້ອຳນວຍການ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນ ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ.

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: *11436813/68463173 -SP*

ບົດລາຍງານນັກກວດສອບອິດສະຫຼະ

ຮຽນ: ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື,
ທະນາຄານແຫ່ງ ສປປ ລາວ; ແລະ
ສຳນັກງານຄະນະກຳມະການຫຼັກຊັບລາວ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2024, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ເອກະສານຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງນະໂຍບາຍທາງບັນຊີທີ່ສຳຄັນ (ເອີ້ນລວມກັນວ່າ: "ເອກະສານລາຍງານການເງິນ")

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນຂອງທະນາຄານ ແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 4 ແລະ ລະບຽບການທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (IASs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າພາຍໃຕ້ມາດຕະຖານດັ່ງກ່າວແມ່ນໄດ້ ຖືກອະທິບາຍເພີ່ມເຕີມ ໃນຂໍ້ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານດ້ານຈັນຍາບັນສາກົນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານດ້ານຈັນຍາບັນສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 4 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍນະໂຍບາຍການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດ ຂອງທະນາຄານເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ບັນຫາອື່ນໆ

ເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023 ແມ່ນໄດ້ຖືກກວດສອບໂດຍບໍລິສັດກວດສອບອື່ນ, ເຊິ່ງໄດ້ສະເໜີຄຳເຫັນແບບບໍ່ມີເງື່ອນໄຂຕໍ່ກັບເອກະສານງານການເງິນເຫຼົ່ານັ້ນໃນວັນທີ 29 ມີນາ 2024.

A member firm of Ernst & Young Global Limited

Building a better working world

ບັນຫາການກວດສອບທີ່ສຳຄັນ

ບັນຫາການກວດສອບທີ່ສຳຄັນແມ່ນບັນດາບັນຫາທີ່ຖືກປະເມີນຈາກການຕັດສິນທາງວິຊາຊີບຂອງພວກຂ້າພະເຈົ້າ, ເຊິ່ງເປັນບັນຫາທີ່ມີຄວາມສຳຄັນໃນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນຂອງທະນາຄານປີ 2024. ນອກຈາກບັນຫາທີ່ໄດ້ກ່າວໃນວັກ *ພື້ນຖານການອອກຄຳເຫັນ* ແລ້ວ, ພວກຂ້າພະເຈົ້າໄດ້ກຳນົດບັນຫາທີ່ໄດ້ອະທິບາຍຢູ່ຂ້າງລຸ່ມນີ້ເປັນບັນຫາການກວດສອບທີ່ສຳຄັນທີ່ໄດ້ຖືກສື່ສານໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ໄດ້ຖືກເອົາໃຈໃສ່ໃນຂອບເຂດຂອງການກວດສອບເອກະສານລາຍງານການເງິນ ຂອງພວກຂ້າພະເຈົ້າໂດຍລວມ ແລະ ໃນການອອກຄຳເຫັນຂອງພວກຂ້າພະເຈົ້າ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ໄດ້ໃຫ້ຄຳເຫັນແຍກຕ່າງຫາກສຳລັບບັນຫາດັ່ງກ່າວ. ສຳລັບແຕ່ລະບັນຫາລຸ່ມນີ້, ລາຍລະອຽດຂອງວິທີການກວດສອບຂອງພວກຂ້າພະເຈົ້າແມ່ນຖືກອະທິບາຍໃນຂໍ້ຄວາມຂ້າງລຸ່ມນີ້.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ ເຊິ່ງລວມເຖິງສ່ວນທີ່ກ່ຽວຂ້ອງກັບບັນຫາເຫຼົ່ານີ້. ຕາມການກວດສອບຂອງພວກຂ້າພະເຈົ້າ, ລວມມີການຈັດຕັ້ງປະຕິບັດວິທີການກວດສອບເພື່ອທີ່ຈະຕອບສະໜອງການປະເມີນຄວາມສ່ຽງທີ່ອາດນຳໄປສູ່ຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ. ຜົນຂອງການປະຕິບັດຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມມີຂັ້ນຕອນທີ່ຈັດຕັ້ງປະຕິບັດເພື່ອທີ່ຈະລະບຸບັນຫາລຸ່ມນີ້, ເພື່ອໃຫ້ເປັນພື້ນຖານສຳລັບການໃຫ້ຄຳເຫັນການກວດສອບຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານລາຍງານການເງິນ.

ເງິນແຮສຳລັບການສູນເສຍມູນຄ່າຂອງເງິນກູ້ຢືມໃຫ້ລູກຄ້າ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 15 ຂອງເອກະສານລາຍງານການເງິນ, ຍອດເຫຼືອຂອງເງິນໃຫ້ກູ້ນະວັນທີ 31 ທັນວາ 2024 ມີຈຳນວນ 62,162,622 ລ້ານກີບ (ກວມເອົາ 44% ຂອງຊັບສິນທັງໝົດ), ແລະ ເງິນແຮສຳລັບການສູນເສຍມູນຄ່າ ຈຳນວນ 2,220,822 ລ້ານກີບ.

ເງິນແຮສຳລັບເງິນກູ້ສູນເສຍມູນຄ່າ ແມ່ນເປັນຍອດເຫຼືອທີ່ມີຄວາມສຳຄັນ ແລະ ມີຄວາມບໍ່ແນ່ນອນໃນການຄາດຄະເນໃນລະດັບສູງ. ຄະນະອຳນວຍການຂອງທະນາຄານແມ່ນຕ້ອງໄດ້ນຳໃຊ້ການຕັດສິນໃຈໃນການລະບຸຫຼັກຖານຂອງການສູນເສຍມູນຄ່າ ແລະ ຄິດໄລ່ຈຳນວນການສູນເສຍມູນຄ່າ. ໃນການຄິດໄລ່ເງິນແຮສຳລັບການສູນເສຍມູນຄ່າ, ທະນາຄານໄດ້ພັດທະນາແບບຈຳລອງ ແລະ ຕັ້ງຂໍ້ສົມມຸດຖານ ເຊິ່ງລວມມີແຕ່ບໍ່ຈຳກັດ: ການປະເມີນມູນຄ່າຫຼັກຊັບຄ้ำປะกัน, ການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຖານະທາງການເງິນຂອງຜູ້ກູ້ຢືມ. ເມື່ອພິຈາລະນາເຖິງຄວາມສຳຄັນຂອງຍອດເຫຼືອ ແລະ ລະດັບດຸນພິນິດຂອງຄະນະອຳນວຍການທະນາຄານ ແລະ ອັດຕະວິໄສຂອງຂໍ້ສົມມຸດຖານທີ່ຖືກເລືອກ, ເພາະສະນັ້ນ ພວກຂ້າພະເຈົ້າຈຶ່ງພິຈາລະນາລາຍການນີ້ເປັນບັນຫາການກວດສອບທີ່ສຳຄັນ.

ໃນຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າໄດ້ທົດສອບການອອກແບບ ແລະ ປະສິດທິພາບການດຳເນີນງານຂອງການຄວບຄຸມຫຼັກທີ່ກ່ຽວຂ້ອງກັບການອະນຸມັດ ແລະ ການຮັບຮູ້ສິນເຊື່ອ; ຂະບວນການການຕິດຕາມເງິນກູ້, ການຈັດຊັ້ນເງິນກູ້, ການຄວບຄຸມຂໍ້ມູນທີ່ວໄປດ้ານເຕັກໂນໂລຊີ ປะกอบด้วย ການຈັດການການປ່ຽນແປງ, ການຈັດການການເຂົ້າເຖິງ ແລະ ການຄວບຄຸມດຳເນີນງານກ່ຽວກັບຄວາມສົມບູນຂອງຂໍ້ມູນລູກຄ້າທີ່ໃຊ້ໃນການຄຳນວນເງິນແຮ.

ພວກຂ້າພະເຈົ້າປะเมินขะบอบการของผู้บໍ่ลิหาน ในการละบุการสูนเสยมูนค่า โดยอิงตาม ติอชี้อัดการสูนเสยมูนค่า, ปัด ไจมะหาพาก และ อุดสาหะกำ ในปัดจุบัน. ສຳລັບຕົວຢ່າງສິນເຊື່ອທີ່ລະບຸວ່າເປັນການສູນເສຍມູນຄ່າເປັນແຕ່ລະລາຍການ ພວກຂ້າພະເຈົ້າດຳເນີນການປະເມີນ ແລະ ທ້າທາຍຂໍ້ສົມມຸດຖານຂອງຄະນະອຳນວຍການກ່ຽວກັບການຄາດຄະເນກະແສເງິນສົດ, ອັດຕາຫຼຸດຄ่า ແລະ ມูนค่าที่จะสามาดเก้บคืนได้จากหลักชับค้ำประกัน ແລະ ການຄິດໄລ່ການສູນເສຍມູນຄ่าโดยอิงตามการประเมินกะแสเงินสิดที่คาดหวัง ແລະ ຄວາມສາມາດໃນການເກັບຄືນຂອງຫຼັກຊັບค้ำประกัน. ສຳລັບການສູນເສຍມູນຄ่าของเงินกู้ที่คำนอน โดยลวม พวกข้าพะเจ้าได้ทิดสอบถอามถิบถ้วน ແລະ ถอามถูกต้องของข้อมูนที่ใช้ในแบบจำลองทิดสอบถอามถูกต้อง ทางคะนิดสาดของแบบจำลองของทะนาคาน, ประเมิน ແລະ ท้าทายถอามเพาะสิมของข้อสิมมุดถาน ลวมเถิงอัดตาอัดตาสูนเสยในอะดิด ແລະ ปรับทวบข้อมูน ແລະ สิมมุดถานที่ทะนาคานสร้างขึ้นกับ กับมาดตะถานพายนอก.

A member firm of Ernst & Young Global Limited

ພວກຂ້າພະເຈົ້າໄດ້ປະເມີນ ຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງ ຂອງການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ ທີ່ກ່ຽວຂ້ອງ ກັບເງິນແຣ່ຄ່າເສື່ອມຂອງເງິນກູ້ເພື່ອປະເມີນວ່າສອດຄ່ອງກັບຂໍ້ກຳນົດປະຕິບັດສຳລັບການເປີດເຜີຍຂໍ້ມູນ.

ຂໍ້ມູນອື່ນໆ

ຄະນະຜູ້ອຳນວຍການແມ່ນຮັບຜິດຊອບສຳລັບຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບດ້ວຍຂໍ້ມູນທີ່ລວມຢູ່ໃນບົດລາຍງານປະຈຳປີແຕ່ບໍ່ ໄດ້ລວມເອົາເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບຂອງພວກຂ້າພະເຈົ້າ. ບົດລາຍງານປະຈຳປີຄາດວ່າຈະ ກຽມພ້ອມໃຫ້ພວກຂ້າພະເຈົ້າຫຼັງຈາກວັນທີອອກບົດລາຍງານຂອງຜູ້ກວດສອບ.

ຄຳເຫັນຂອງພວກຂ້າພະເຈົ້າຕໍ່ກັບເອກະສານລາຍງານການເງິນບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກຂ້າພະເຈົ້າບໍ່ໄດ້ໃຫ້ຂໍ້ສະຫຼຸບທີ່ ເປັນການຮັບປະກັນໃດໆ.

ໃນການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ, ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຄືການອ່ານຂໍ້ ມູນອື່ນໆທີ່ກ່າວເຖິງຂ້າງເທິງເມື່ອຂໍ້ມູນດັ່ງກ່າວຖືກກຽມພ້ອມ ແລະ ຖ້າຫາກພິຈາລະນາວ່າ ຂໍ້ມູນອື່ນໆນັ້ນບໍ່ສອດຄ່ອງກັບ ເອກະສານລາຍງານການເງິນ ຫຼື ຂໍ້ມູນທີ່ໄດ້ຮັບຈາກການກວດສອບ, ຫຼື ອາດຈະມີການບິດບ່ຽນຂໍ້ມູນຢ່າງມີສາລະສຳຄັນ. ເມື່ອ ພວກຂ້າພະເຈົ້າອ່ານບົດລາຍງານປະຈຳປີ ຖ້າພວກຂ້າພະເຈົ້າສະຫຼຸບໄດ້ວ່າມີການບິດບ່ຽນຂໍ້ມູນຢ່າງມີສາລະສຳຄັນ ພວກຂ້າພະເຈົ້າ ຈຳເປັນຕ້ອງສື່ສານບັນຫາດັ່ງກ່າວໃຫ້ຜູ້ມີອຳນາດໃນການຄວບຄຸມໄດ້ຮັບຮູ້.

ຄວາມຮັບຜິດຊອບຂອງຄະນະອຳນວຍການຂອງທະນາຄານຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບ ນະໂຍບາຍບັນຊີ ຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍ ເລກທີ 4 ແລະ ບັນດາລະບຽບການອື່ນໆ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ, ລວມເຖິງການຄວບຄຸມພາຍໃນທີ່ທາງຄະນະອຳນວຍການເຫັນວ່າມີຄວາມຈຳເປັນໃນການ ກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ ທີ່ອາດເກີດ ຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການແມ່ນມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງ ທະນາຄານທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການຄວາມສືບ ເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການເຫັນວ່າທຸລະກິດບໍ່ມີຄວາມອາດສາມາດທີ່ຈະດຳເນີນຕໍ່ໄປໄດ້ ຫຼື ໃນ ກໍລະນີທີ່ທາງຄະນະອຳນວຍການຂອງທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອໄດ້ຮັບການຮັບປະກັນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການ ອອກບົດລາຍງານຂອງນັກກວດສອບອິດສະຫຼະ ທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການ ຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດ ສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມ ກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ການວິນິດໄສແບບ ມືອາຊີບ ຕະຫຼອດການດຳເນີນການກວດສອບພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ການອອກແບບ ແລະ ການດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງ ເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການ

A member firm of Ernst & Young Global Limited

ออกຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການ ລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອ ອອກແບບຂັ້ນຕອນການກວດສອບທີ່ ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນ ກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງ ທະນາຄານ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະອຳນວຍການ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານການບັນຊີ ອ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະ ກິດຂອງຄະນະອຳນວຍການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ, ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດຈະ ເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສສຳຄັນກ່ຽວກັບຄວາມສາມາດຂອງທະນາຄານໃນການສືບເນື່ອງໃນ ການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດ ລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງ ພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງ ຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບ ເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະອຳນວຍການ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ, ລວມເຖິງບັນດາຂໍ້ບົກພ່ອງທີ່ສຳຄັນຕ່າງໆ ໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າພົບ ເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າໄດ້ຈັດກຽມຄຳຖະແຫຼງການກັບຜູ້ມີອຳນາດໃນການຄວບຄຸມ ວ່າພວກຂ້າພະເຈົ້າໄດ້ປະຕິບັດຕາມທຸກຂໍ້ກຳນົດດ້ານກົດ ຈັນຍາບັນທີ່ກຳນົດເຊິ່ງກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສຳພັນ ແລະ ບັນຫາອື່ນໆທີ່ ອາດມີຜົນຕໍ່ກັບຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າມີ.

A member firm of Ernst & Young Global Limited

Building a better working world

ຈາກການປຶກສາຫາລືບັນຫາກັບຜູ້ມີອຳນາດໃນການຄວບຄຸມ ພວກຂ້າພະເຈົ້າໄດ້ພິຈາລະນາບັນຫາອື່ນທີ່ມີສາລະສຳຄັນໃນການກວດສອບເອກະສານລາຍງານການເງິນຂອງປີປັດຈຸບັນ ແລະ ບັນຫາສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍບັນຫາເຫຼົ່ານີ້ໃນບົດລາຍງານຂອງນັກກວດສອບອິດສະຫຼະ ເວັ້ນແຕ່ມີກົດໝາຍ ຫຼື ຂໍ້ບັງຄັບໃນການຫ້າມເປີດເຜີຍກ່ຽວກັບບັນຫາໃດໜຶ່ງຕໍ່ສາທາລະນະ ຫຼື ເມື່ອໃນສະຖານະການທີ່ພິບຍາກ ພວກຂ້າພະເຈົ້າພິຈາລະນາວ່າບໍ່ຄວນສື່ສານບັນຫາໃດໜຶ່ງໃນບົດລາຍງານຂອງພວກຂ້າພະເຈົ້າ ເນື່ອງຈາກວ່າຜົນກະທົບໃນແງ່ລົບທີ່ຕາມມາອາດຈະສົ່ງຜົນຫຼາຍກວ່າຜົນປະໂຫຍດຂອງສາທາລະນະທີ່ເກີດຈາກການສື່ສານດັ່ງກ່າວ.

ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ.

ອັນ ເລ
ຮຸ້ນສ່ວນ

ທະບຽນອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ: 018/LCPAA_APT-2019

ນາຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

A member firm of Ernst & Young Global Limited

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

	ບົດອະທິບາຍ ເລກທີ	2024 ລ້ານກີບ	2023 ລ້ານກີບ
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	6	6,349,673	4,000,347
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	6	(2,697,389)	(2,262,158)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**6**	**3,652,284**	**1,738,189**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	7	1,697,297	925,033
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	7	(866,313)	(371,827)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**7**	**830,984**	**553,206**
ລາຍຮັບສຸດທິຈາກການຊື້-ຂາຍເງິນຕາຕ່າງປະເທດ	8	244,081	390,926
ລາຍຮັບອື່ນໆຈາກການດຳເນີນງານ	9	506,516	445,957
ລາຍຮັບຈາກການດຳເນີນງານ		**5,233,865**	**3,128,278**
ລາຍຈ່າຍຄ່າສຸນເສຍສິນເຊື່ອຈາກເງິນກູ້ຢືມໃຫ້ລູກຄ້າ	16	(3,553,571)	(2,098,555)
ຫັກເພີ່ມ ຄ່າເສື່ອມມູນຄ່າການລົງທຶນທາງການເງິນ	10	(7,287)	(2,301)
ລາຍຮັບສຸດທິຈາກການດຳເນີນງານ		**1,673,007**	**1,027,422**
ລາຍຈ່າຍພະນັກງານ	11	(595,148)	(399,534)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	20.2, 21	(104,278)	(93,616)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ	22	(13,881)	(8,574)
ລາຍຈ່າຍອື່ນໆຈາກການດຳເນີນງານ	12	(322,607)	(294,971)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(1,035,914)**	**(796,695)**
ສ່ວນແບ່ງກຳໄລ ແລະ ຂາດທຶນຈາກການລົງທຶນໃນບໍລິສັດຮ່ວມ ທຸລະກິດ ແລະ ບໍລິສັດຮ່ວມທຶນ	19	57,418	52,393
ກຳໄລກ່ອນອາກອນ		**694,511**	**283,120**
ລາຍຈ່າຍອາກອນກຳໄລ	27.1	(154,509)	(40,272)
ລາຍຮັບອາກອນກຳໄລລໍຖ້າສະສາງ	27.4	(90,439)	(11,440)
ກຳໄລສຸດທິພາຍໃນປີ		**449,563**	**231,408**
ກຳໄລຕໍ່ຮຸ້ນ (ກີບ)	**34**	**2,164**	**1,114**

ກະກຽມໂດຍ:

ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ທິນເພັດ ຈັນທະລັງສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

	ບົດອະທິບາຍ ຊ້ອນທ້າຍ	*2024 ລ້ານກີບ*	*2023 ລ້ານກີບ*
ລາຍຮັບອື່ນໆນອກການທຸລະກິດ		**449,563**	**231,408**
ຂາດທຶນຈາກການປະເມີນມູນຄ່າຄືນຜົນປະໂຫຍດຂອງພະນັກງານ		(52,650)	11,334
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ	27.4	10,530	(2,267)
ລາຍຮັບນອກການທຸລະກິດພາຍໃນປີ, ຫຼັງຫັກອາກອນ		**(42,120)**	**9.067**
ລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**407,443**	**240,475**

ກະກຽມໂດຍ:

ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຫົນເພັດ ຈັນທະລັງສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນາຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2024

	ບົດອະທິບາຍ ຊ້ອນທ້າຍ	*31 ທັນວາ 2024 ລ້ານກີບ*	*31 ທັນວາ 2023 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	13	32,718,705	31,684,143
ເງິນຝາກຢູ່ທະນາຄານອື່ນ	14	20,512,515	21,964,355
ເງິນກູ້ໃຫ້ແກ່ລູກຄ້າ	15	59,941,800	53,892,356
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	17	80,535	87,822
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	18	25,001,699	15,098,095
ການລົງທຶນໃນບັນດາບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ	19	793,988	747,223
ຊັບສິນພວມກໍ່ສ້າງ	20.1	227,042	171,204
ຊັບສິນບັດຄົງທີ່ ແລະ ອຸປະກອນ	20.2	477,235	396,890
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	21	316,513	321,734
ສິດໃນການນຳໃຊ້ຊັບສິນ	22	72,066	53,500
ຊັບສິນອາກອນລໍຖ້າສະສາງ	27.4	226,165	102,813
ຊັບສິນອື່ນໆ	23	1,822,987	1,913,614
ລວມຊັບສິນ		**142,191,250**	**126,433,759**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	24	6,198,128	9,463,117
ໜີ້ຕ້ອງສົ່ງລູກຄ້າ	25	127,589,277	109,471,717
ເງິນກູ້ຢືມຈາກທະນາຄານອື່ນ	26	4,456,239	4,378,394
ໜີ້ຕ້ອງສົ່ງອາກອນ	27.2	195,347	80,461
ໜີ້ສິນຕາມສັນຍາເຊົ່າ	22	47,059	29,285
ໜີ້ສິນອາກອນລໍຖ້າສະສາງ	27.4	203,260	-
ໜີ້ສິນອື່ນໆ	28	579,150	433,121
ລວມໜີ້ສິນ		**139,268,460**	**123,856,095**
ທຶນ			
ທຶນຈົດທະບຽນ	29	1,038,617	1,038,617
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	30	1,154,828	911,701
ການປະເມີນມູນຄ່າຄັງສຳຮອງຜົນປະໂຫຍດຂອງພະນັກງານ		(24,013)	18,107
ກຳໄລສະສົມ		753,358	609,239
ລວມທຶນ		**2,922,790**	**2,577,664**
ລວມໜີ້ສິນ ແລະ ທຶນ		**142,191,250**	**126,433,759**

ກະກຽມໂດຍ:

ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ທົນເພັດ ຈັນທະລັງສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູເສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມ ຕາມລະບຽບການ ລ້ານກີບ*	*ການປະເມີນມູນຄ່າຄັງສຳຮອງ ຜົນປະໂຫຍດຂອງພະນັກງານ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອໃນວັນທີ 31 ທັນວາ 2023	**1,038,617**	**911,701**	**18,107**	**609,239**	**2,577,664**
ກຳໄລພາຍໃນປີ	-	-	-	449,563	449,563
ແບ່ງເຂົ້າຄັງສະສົມຕາມລະບຽບການສຳລັບປີ 2023 (*)	-	243,127	-	(243,127)	-
ເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນສຳລັບປີ 2023 (**)	-	-	-	(62,317)	(62,317)
ການປະເມີນມູນຄ່າຄັງສຳຮອງຜົນປະໂຫຍດຂອງພະນັກງານ	-	-	(52,650)	-	(52,650)
ອາກອນກຳໄລທີ່ເກີດຂຶ້ນຈາກອີງປະກອບລາຍຮັບນອກການທຸລະກິດ	-	-	10,530	-	10,530
ຍອດເຫຼືອນະວັນທີ 31 ທັນວາ 2024	**1,038,617**	**1,154,828**	**(24,013)**	**753,358**	**2,922,790**

(*) ການເບີກຈ່າຍເງິນປັນຜົນແມ່ນໄດ້ຮັບການອະນຸມັດຈາກສະພາບໍລິຫານຕາມກອງປະຊຸມສະພາບໍລິຫານສະບັບເລກທີ 009/ທຄຕລ.ສະພາບໍລິຫານ ລົງວັນທີ 22 ມີນາ 2024. ເງິນປັນຜົນແມ່ນຖືກຈ່າຍໃນວັນທີ 14 ພຶດສະພາ 2024.

(**) ທະນາຄານຕ້ອງຫັກ 10% ຂອງກຳໄລຫຼັງເສຍອາກອນໃນແຕ່ລະປີເຂົ້າໃນກອງທຶນສຳຮອງຕາມລະບຽບການ, ກອງທຶນຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງສະພາບໍລິຫານ.

ກະກຽມໂດຍ:

ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ທິນເພັດ ຈັນທະລັງສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024

	ບົດອະທິບາຍ ຊ້ອນທ້າຍ	*2024 ລ້ານກີບ*	*2023 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**694,511**	**283,120**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	20.2, 21	104,278	93,616
ຄ່າຫຼ້ຍຫ້ຽນສິດນຳໃຊ້ຊັບສິນ	22	13,881	8,574
ລາຍຈ່າຍຄ່າເສື່ອມມູນຄ່າ	16	3,553,571	2,098,555
ສ່ວນປ່ຽນແປງເງິນແຮສຳລັບຈາກການຂາດທຶນຄ່າເສື່ອມມູນຄ່າ			
ການລົງທຶນໃນຫຼັກຊັບ	10	7,287	2,301
ສ່ວນແບ່ງກຳໄລຈາກການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ			
ບໍລິສັດຮ່ວມທຶນ ຕາມວິທີສ່ວນໄດ້ສ່ວນເສຍ	19	(57,418)	(52,393)
ລາຍຈ່າຍຜົນປະໂຫຍດຂອງພະນັກງານຫຼັງອອກວຽກ		(52,650)	7,226
ຂາດທຶນຈາກການສະສາງຊັບສິນບັດຄົງທີ່		34	479
ລາຍຮັບດອກເບ້ຍ		(6,349,673)	(4,000,347)
ລາຍຈ່າຍດອກເບ້ຍ		2,697,389	2,262,158
ລາຍຮັບເງິນປັນຜົນ	9	-	(1,918)
ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການປ່ຽນແປງ			
ດ້ານຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**611,210**	**701,371**
ສ່ວນປ່ຽນແປງຂອງຊັບສິນໃນການດຳເນີນງານ			
ປ່ຽນແປງສຸດທິໃນຍອດເຫຼືອເງິນຝາກກັບທະນາຄານອື່ນ		(2,296,194)	(12,079,564)
ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ		(5,570,497)	(20,095,751)
ປ່ຽນແປງສຸດທິໃນຊັບສິນອື່ນໆ		(6,397,701)	(1,177,526)
ສ່ວນປ່ຽນແປງຂອງໜີ້ສິນໃນການດຳເນີນງານ			
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		(3,627,272)	2,849,098
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ		15,782,455	28,253,313
ປ່ຽນແປງສຸດທິໃນໜີ້ສິນອື່ນໆ		4,062,714	118,692
ສ່ວນປ່ຽນແປງເງິນສົດຈາກ /(ໃຊ້ໃນ) ການດຳເນີນງານ			
ອາກອນຊຳລະພາຍໃນປີ	27.3	(46,863)	(34,725)
ດອກເບ້ຍຈ່າຍ		(2,615,786)	(2,020,251)
ດອກເບ້ຍຮັບ	27.3	6,468,078	7,132,739
ກະແສເງິນສົດສຸດທິຈາກ ກິດຈະກຳການດຳເນີນງານ		**6,370,144**	**3,647,396**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບໄລຍະປີສິ້ນສຸດວັນທີ 31 ທັນວາ 2024

	ບົດອະທິບາຍ ຊ້ອນທ້າຍ	2024 ລ້ານກີບ	2023 ລ້ານກີບ
ກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່ ແລະ ຊັບສິນບັດພວມກໍ່ສ້າງ		(236,114)	(105,860)
ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ		(8,951)	(50,307)
ຊື້ສິດໃນການນຳໃຊ້ຊັບສິນ		(24,894)	(6,440)
ຊື້ຫຼັກຊັບປະເພດລົງທຶນ		(115,809,319)	(5,674,624)
ລາຍຮັບຈາກການຊຳລະຂອງການລົງທຶນໃນຫຼັກຊັບ		106,136,557	4,101,382
ຈ່າຍການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ		(9,597)	(12,000)
ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ		20,250	8,251
ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບ		-	1,918
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**(9,932,068)**	**(1,737,680)**
ກິດຈະກຳການຈັດຫາເງິນທຶນ			
ຮັບຈາກການກູ້ຢືມ		162,260	-
ລາຍຈ່າຍຈາກການກູ້ຢືມ		(282,603)	-
ຈ່າຍໜີ້ສິນຕ້ອງສົ່ງຕາມສັນຍາເຊົ່າ		(24,894)	(10,870)
ຈ່າຍເງິນປັນຜົນ		(62,317)	(20,771)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳຈັດຫາເງິນທຶນ		**(207,554)**	**(31,641)**
ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		(3,769,478)	1,878,075
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນໄລຍະ		37,593,145	35,715,070
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍໄລຍະ	**31**	**33,823,667**	**37,593,145**

ກະກຽມໂດຍ:

ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຫົນເພັດ ຈັນທະລັງສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພຸທສົງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ.

31 ມີນາ 2025

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ("ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ ໃບອະນຸຍາດສ້າງ ຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010 ທະນາຄານ ໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງ ຕາມ ໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິ ສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງ ການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດ ທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED ("COFIBRED"). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ເຊິ່ງເປັນ ທະນາຄານທີ່ ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມ ຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າ ໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີ ຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68,047,300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3,098,400 ຮຸ້ນ ໃນຕະຫຼາດຫຼັກ ຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງ ວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນ ວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355,728,500,000 ກີບ (ເທົ່າກັບ 71,145,700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ວັນທີ 11 ຕຸລາ 2019, ສຳນັກງານຄະນະກຳມະການຫຼັກຊັບລາວໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນທັ້ງຈາກການສະເໜີຂາຍ ຮຸ້ນໃຫ້ແກ່ປະຊາຊົນ ແລະ ສາທາລະນະ. ຈຸດປະສົງຂອງການຂາຍຮຸ້ນຂອງລັດຖະບານແມ່ນເພື່ອສະໜັບສະໜູນຜູ້ຖືຮຸ້ນທີ່ມີ ຄວາມຫຼາກຫຼາຍຫຼາຍຂຶ້ນ ເພື່ອພັດທະນາທະນາຄານໃນການຂະຫຍາຍທຸລະກິດ ແລະ ຄວາມຍືນຍົງ. ວັນທີ 29 ພະຈິກ 2019, ສຳນັກງານຄະນະກຳມະການຫຼັກຊັບລາວ ໄດ້ຢັ້ງຢືນວ່າທະນາຄານສະເໜີຂາຍຮຸ້ນ 10% ຂອງທະນາຄານສຳເລັດຜົນ.

ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	124,634,021	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20,772,359	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນ ຕ່າງປະເທດ	62,316,920	30%
	207,723,300	**100%**

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ (ຕໍ່)

ກິດຈະກຳຫຼັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມ ຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການ ການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2024 ແມ່ນ 1,038,617 ລ້ານກີບ (ນະວັນທີ 31 ທັນວາ 2023 : 1,038,617 ລ້ານ ກີບ).

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ທັນວາ 2024 ທະນາຄານມີໜຶ່ງ (01) ສຳນັກງານໃຫຍ່, ເຈັດ (07) ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມ ທຶນ, ຊາວ (20) ສາຂາຫຼັກ, ໜຶ່ງຮ້ອຍໜຶ່ງ (101) ໜ່ວຍບໍລິການ ແລະ ສິບສອງ (12) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີ ແລະ ນະວັນທີ ທີ່ອອກປົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ບຸນປອນ ວັນນະຈິດ	ປະທານ	ແຕ່ງຕັ້ງວັນທີ 27 ເມສາ 2023
ທ່ານ ປອ. ອາຄົມ ປຣະເສີດ	ຮອງປະທານ	ແຕ່ງຕັ້ງວັນທີ 29 ເມສາ 2024
ທ່ານ ຄຳສຸກ ສຸນດາລາ	ຮອງປະທານ	ແຕ່ງຕັ້ງວັນທີ 27 ເມສາ 2023 ລາອອກວັນທີ 29 ເມສາ 2024
ທ່ານ ປະສົມເພັດ ຄຳຕັນ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ສະຕີເຟັນ ມັງເຈຍອາກາ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ນ. ສາຍສະໜອນ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງວັນທີ 22 ພະຈິກ 2022
ທ່ານ ຣສ. ທອງເພັດ ຈັນທະນີວົງ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ນ. ລັດດາວັນ ຊົງວິໄລ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ສອນໄຊ ສີລາເພັດ	ສະມາຊິກ	ແຕ່ງຕັ້ງວັນທີ 29 ຕຸລາ 2021
ທ່ານ ວຽງສຸກ ຈຸນທະວົງ	ສະມາຊິກ	ແຕ່ງຕັ້ງວັນທີ 27 ເມສາ 2018 ລາອອກວັນທີ 30 ມີນາ 2024

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ພາຍໃນປີ ແລະ ນະວັນທີ ທີ່ອອກປົດລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 02 ສິງຫາ 2022
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 18 ກຸມພາ 2019 ລາອອກວັນທີ 30 ມີນາ 2024
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ນ. ພູແສງທອງ ອານຸລັກຄຳ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024
ທ່ານ ນາລິນ ສີລະວົງສິດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024

ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2024 ທະນາຄານມີ ເຈັດ (07) ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດເລກທີ*	*ຂະແໜງການ*	*% ຖືຮຸ້ນຂອງທະນາຄານ*
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	1079/ຫຈທ ລົງວັນທີ 10 ກໍລະກົດ 2019 ໂດຍກົມສົ່ງເສີມການລົງທຶນຂອງກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ.	ຫຼັກຊັບ	70%
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	732/ຫຈທ ລົງວັນທີ 29 ສິງຫາ 2016 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ.	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ ຈຳກັດ	0495/ຫຈທ ລົງວັນທີ 07 ມິຖຸນາ 2018 ໂດຍກະຊວງອຸດສາຫະກຳ ແລະ ການຄ້າ.	ການທະນາຄານ & ການເງິນ	30%
ບໍລິສັດປະກັນໄພ ລາວ -ຫວຽດ	3603/ຫຈທ ລົງວັນທີ 23 ກັນຍາ 2024 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ.	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	31.35%
ບໍລິສັດລາວເມເຊັນນໍ ເພເມັ້ນ ເນັດເວີກ ຈຳກັດ	0349/ຫຈທ ລົງວັນທີ 12 ມີນາ 2019 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ ກະຊວງອຸດສາຫະກຳ ແລະ ການຄ້າ.	ການຈັດການທຸລະກຳການຊຳລະ (ເອເລັກໂຕຣນິກ)	20%
ບໍລິສັດ ຕະຫຼາດ ແລກປ່ຽນເງິນຕາ ຕ່າງປະເທດລາວ ຈຳກັດ (ຕລຕ)	4016/ຫຈທ ລົງວັນທີ 22 ຕຸລາ 2024 ໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ສປປ ລາວ ກະຊວງອຸດສາຫະກຳ ແລະ ການຄ້າ.	ການບໍລິການ ແລກປ່ຽນເງິນຕາ ຕ່າງປະເທດ (ເອເລັກໂຕຣນິກ)	10%

ພະນັກງານ

ພະນັກງານ ທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2024 ແມ່ນ 2,183 ຄົນ (31 ທັນວາ 2023: 2,075 ຄົນ).

2. ພື້ນຖານໃນການກະກຽມ

ອີງຕາມກົດໝາຍການບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາຫົວໜ່ວຍທຸລະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ (“IFRS”) ໃນການກະກຽມລາຍງານການເງິນປະຈຳປີຂອງຕົນ. ອີງຕາມຈົດໝາຍທາງລັດຖະການ ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ຂອງກະຊວງການເງິນ ແລະ ສະບັບເລກທີ 295/ທຫລ, ລົງວັນທີ 16 ມິຖຸນາ 2021, ທະນາຄານທຸລະກິດອະນຸຍາດໃຫ້ເລື່ອນເວລາການປະຕິບັດ IFRS ໄປຈົນຮອດວັນທີ 1 ມັງກອນ 2026. ປະຈຸບັນກຳລັງກະກຽມແຜນການຈັດຕັ້ງປະຕິບັດ IFRSs ຕາມການປະກາດ.

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024, ທະນາຄານໄດ້ກະກຽມເອກະສານລາຍງານການເງິນ ໂດຍອີງຕາມນະໂຍບາຍບັນຊີ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 4 ຂອງເອກະສານລາຍງານການເງິນ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດ ຂອງທະນາຄານເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນແມ່ນໄດ້ກະກຽມເພື່ອຊ່ວຍຄະນະອຳນວຍການຂອງທະນາຄານໃນການປະຕິບັດຕາມຂໍ້ກຳນົດການລາຍງານຂອງຜູ້ຄຸ້ມຄອງ ແລະ ເຈົ້າຂອງ ແລະ ບໍ່ເໝາະສົມສຳລັບການເຜີຍແຜ່ ຫຼື ນຳໃຊ້ສຳລັບພາກສ່ວນອື່ນ.

ການລາຍງານການເງິນໃນເສດຖະກິດທີ່ມີພາວະເງິນເຟີ້ລະດັບສູງສຸດ

ນະວັນທີ 31 ທັນວາ 2024 ອັດຕາເງິນເຟີ້ສະສົມຂອງ ສ.ປ.ປ ລາວ ໃນໄລຍະ 36 ເດືອນຜ່ານມາເກີນ 100% ເຊິ່ງຖືເປັນປະເທດທີ່ຢູ່ໃນເສດຖະກິດທີ່ມີພາວະເງິນເຟີ້ລະດັບສູງສຸດ, ອີງຕາມບົດລາຍງານຂອງ ທະນາຄານແຫ່ງ ສປປ ລາວ (https://www.bol.gov.la/en/inflation). ໃນວັນທີ 26 ມີນາ 2025, ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງການສະບັບເລກທີ 0031/ກຫງ ໂດຍໃຫ້ທະນາຄານທຸລະກິດທີ່ໄດ້ຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແບບເຕັມສ່ວນແລ້ວ ຈັດຕັ້ງປະຕິບັດມາດຕະຖານບັນຊີສາກົນເລກທີ 29 (IAS 29) ໃນການບັນທຶກຜົນກະທົບຈາກພາວະອັດຕາເງິນເຟີ້ລະດັບສູງສຸດ. ເນື່ອງຈາກເອກະສານລາຍງານການເງິນຂອງທະນາຄານຍັງບໍ່ທັນປະຕິບັດມາດຕະຖານສາກົນໄດ້ຢ່າງເຕັມສ່ວນ, ທະນາຄານຈຶ່ງຍັງບໍ່ທັນໄດ້ຈັດຕັ້ງປະຕິບັດມາດຕະຖານດັ່ງກ່າວ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024.

ເອກະສານລາຍງານການເງິນແມ່ນໄດ້ກະກຽມບົນພື້ນຖານມູນຄ່າຕົ້ນທຶນເດີມ, ເວັ້ນແຕ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍ.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ເຊິ່ງເປັນສະກຸນເງິນຫຼັກຂອງທະນາຄານ ແລະ ໄດ້ສ້າງເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ.

ປີການບັນຊີ ຂອງທະນາຄານແມ່ນ ເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

3. ການນຳສະເໜີເອກະສານລາຍງານການເງິນ

ທະນາຄານໄດ້ນຳສະເໜີໃບລາຍງານຖານະການເງິນ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນແມ່ນໄດ້ຖືກລາຍງານເປັນມູນຄ່າລວມ ໃນໃບລາຍງານຖານະການເງິນ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ໃນເວລາທີ່ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງໃນທຸກໆກໍລະນີຂ້າງລຸ່ມນີ້:

- ທຸລະກິດໃນຊ່ວງປົກກະຕິ
- ໃນກໍລະນີທີ່ທຸລະກິດມີການກະທຳຄວາມຜິດ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງທະນາຄານແລະ/ຫຼື ຄູ່ຄ້າຂອງຕົນ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

4.1 ມາດຕະຖານໃໝ່ ແລະ ແກ້ໄຂເພີ່ມເຕີມ

ການແກ້ໄຂເພີ່ມເຕີມຕໍ່ກັບມາດຕະຖານການບັນຊີ IFRS ທີ່ມີຢູ່ຕອນນີ້ ມີຜົນບັງຄັບໃຊ້ສຳລັບການລາຍງານປະຈຳປີທີ່ເລີ່ມຕົ້ງແຕ່ວັນທີ 1 ມັງກອນ 2024:

- ການຈັດປະເພດໜີ້ສິນເປັນໜີ້ສິນໝຸນວຽນ ຫຼື ໜີ້ສິນບໍ່ໝຸນວຽນ ພ້ອມດ້ວຍເງື່ອນໄຂ - ການແກ້ໄຂເພີ່ມເຕີມໃນມາດຕະຖານການບັນຊີສາກົນເລກທີ 1 (IAS 1).

ການແກ້ໄຂເພີ່ມເຕີມເຫຼົ່ານີ້ຈະບໍ່ມີຜົນກະທົບຕໍ່ເອກະສານການລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

4.2 ການແປງຄ່າຂອງສະກຸນເງິນຕ່າງປະເທດ

ການເຮັດທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນ ເລີ່ມຕົ້ນຈາກການບັນທຶກໃນອັດຕາແລກປ່ຽນນະວັນທີ ທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທີ່ເປັນເງິນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ ແລກປ່ຽນຄືນເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນນະວັນທີຂອງບົດລາຍງານ (ເບິ່ງລາຍການຂອງອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດຄືນທີ່ໃຊ້ໃນການແລກປ່ຽນເປັນເງິນກີບ ນະວັນທີ 31 ທັນວາ 2024 ໃນບົດອະທິບາຍເລກທີ 38). ສ່ວນຜິດຕ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນມື້ສ້າງບົດລາຍງານແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

4.3 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ

4.3.1 ວັນທີຂອງການຮັບຮູ້

ຊັບສິນ ແລະ ໜີ້ສິນທາງການເງິນທັ້ງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັ້ງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີ ຂອງລູກຄ້າຮຽບຮ້ອຍແລ້ວ. ທະນາຄານຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອທະນາຄານໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

4.3.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັ້ງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນ ຕາມມູນຄ່າຍຸດຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸດຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

4.3.3 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ພາຍໃຕ້ IAS 39, ລາຍຮັບດອກເບ້ຍຖືກບັນທຶກໂດຍໃຊ້ວິທີການ EIR ສຳລັບຊັບສິນທາງການເງິນທັ້ງໝົດທີ່ວັດແທກດ້ວຍຄ່າເສື່ອມ. ຄ່າໃຊ້ຈ່າຍດອກເບ້ຍຍັງຖືກຄິດໄລ່ໂດຍໃຊ້ວິທີການ EIR ສຳລັບໜີ້ສິນທາງການເງິນທັ້ງໝົດທີ່ຖືຕົ້ນທຶນຄ່າເສື່ອມມູນຄ່າ. EIR ແມ່ນອັດຕາດອກເບ້ຍແທ້ຈິງໂດຍອີງຕາມກະແສເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຜ່ານອາຍຸການໃຊ້ງານທີ່ຄາດຄະເນໄວ້ຂອງຊັບສິນທາງການເງິນ ຫຼື ໜີ້ສິນ ຫຼື ເມື່ອເໝາະສົມ, ໄລຍະສັ້ນກວ່າ, ໃຫ້ເປັນມູນຄ່າຕາມບັນຊີທັ້ງໝົດຂອງຊັບສິນທາງການເງິນ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.3 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

4.3.3 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ (ຕໍ່)

EIR (ແລະ ດັ່ງນັ້ນ, ຄ່າເສື່ອມຂອງຊັບສິນທາງການເງິນ) ແມ່ນຄິດໄລ່ໂດຍການຄຳນຶງເຖິງຄ່າໃຊ້ຈ່າຍໃນການເຮັດທຸລະກຳ ແລະ ສ່ວນຫຼຸດ ຫຼື ຄ່ານິຍົມໃດໆກ່ຽວກັບການໄດ້ມາຂອງຊັບສິນທາງການເງິນ, ເຊັ່ນດຽວກັນກັບຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ເປັນສ່ວນໜຶ່ງຂອງ EIR. ທະນາຄານຮັບຮູ້ລາຍຮັບດອກເບ້ຍໂດຍໃຊ້ອັດຕາຜົນຕອບແທນທີ່ສະແດງເຖິງການປະເມີນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸທີ່ຄາດໄວ້ຂອງເງິນກູ້. ດັ່ງນັ້ນ, ການຄິດໄລ່ EIR ຍັງຄຳນຶງເຖິງຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນທີ່ອາດຈະຖືກຄິດຄ່າທຳນຽມໃນຂັ້ນທີ່ຄາດໄວ້ຂອງຊັບສິນທາງການເງິນ, ແລະ ລັກສະນະອື່ນໆຕາມອາຍຸຂອງຜະລິດຕະພັນ (ລວມທັງການຊຳລະລ່ວງໜ້າ, ດອກເບ້ຍປັບໄໝ ແລະ ຄ່າບໍລິການ).

ຖ້າມີການແກ້ໄຂອັດຕາຄົງທີ່ກະແສເງິນສົດຂອງຊັບສິນ ຫຼື ໜີ້ສິນທາງການເງິນດ້ວຍເຫດຜົນອື່ນນອກເໜືອຈາກຄວາມສ່ຽງດ້ານສິນເຊື່ອ, ຫຼັງຈາກນັ້ນການປ່ຽນແປງກະແສເງິນສົດຕາມສັນຍາໃນອະນາຄົດຈະຖືກຫຼຸດລົງຢູ່ທີ່ EIR ເດີມດ້ວຍການປັບມູນຄ່າຕາມບັນຊີຕົວຕາມລຳດັບ. ສ່ວນຕ່າງຈາກມູນຄ່າຕາມບັນຊີກ່ອນໜ້າແມ່ນຖືກບັນທຶກເປັນການປັບຕົວເປັນບວກ ຫຼື ລົບຕໍ່ຍອດມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ໜີ້ສິນໃນໃບດຸ່ນດ່ຽງດ້ວຍການເພີ່ມ ຫຼື ຫຼຸດທີ່ສອດຄ້ອງກັນຂອງ *ລາຍຮັບ/ລາຍຈ່າຍດອກເບ້ຍ ທີ່ຄິດໄລ່ໂດຍໃຊ້ວິທີດອກເບ້ຍທີ່ແທ້ຈິງ.*

ສຳລັບເຄື່ອງມືການເງິນແບບລອຍໂຕ, ການປະເມີນກະແສເງິນສົດຄືນເປັນແຕ່ລະໄລຍະເພື່ອສະທ້ອນເຖິງການເຄື່ອນໄຫວຂອງອັດຕາດອກເບ້ຍໃນຕະຫຼາດຈະເຮັດໃຫ້ອັດຕາດອກເບ້ຍທີ່ແທ້ຈິງມີການປ່ຽນແປງ, ແຕ່ເມື່ອເຄື່ອງມືຖືກຮັບຮູ້ໃນເບື້ອງຕົ້ນໃນຈຳນວນເທົ່າກັບເງິນຕົ້ນ, ການປະເມີນມູນຄ່າການຊຳລະດອກເບ້ຍໃນອະນາຄົດຄືນໃໝ່ຈະບໍ່ມີຜົນກະທົບຫຼາຍຕໍ່ກັບມູນຄ່າຕາມບັນຊີຂອງຊັບສິນ ຫຼື ໜີ້ສິນ.

- 4.2.6 ສຳລັບ 'ການລົງທຶນທີ່ຖືໄວ້ຈົນຄົບກຳນົດ'
- 4.2.7 ສຳລັບ 'ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ'
- 4.2.8 ສຳລັບ 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ'
- 4.4 ສຳລັບ 'ການເສື່ອມມູນຄ່າຂອງຊັບສິນທາງການເງິນ'
- 4.8 ສຳລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

4.3.4 'ມື້ທີ 1' ກຳໄລ ຫຼື ຂາດທຶນ

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫລາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫລາດ, ທະນາຄານຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ "ລາຍຮັບ/ລາຍຈ່າຍສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ". ໃນກໍລະນີທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

4.3.5 ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອການຄ້າ ຫຼື ຫຼັກຊັບທີ່ບັນທຶກມູນຄ່າຍຸດຕິທຳ ໂດຍຜ່ານ ກຳໄລ ແລະ ຂາດທຶນ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.3 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

4.3.5 ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ (ຕໍ່)

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫຼື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸດຕິທຳ.

ກຳໄລ ຫຼື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນການດຳເນີນງານນອກການທຸລະກິດ) ເປັນ "ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ວ່າແມ່ນ "ລາຍຮັບອື່ນໆຈາກການດຳເນີນງານ" ເມື່ອທະນາຄານລົງທຶນຫລາຍກວ່າໜຶ່ງລາຍການໂດຍນຳໃຊ້ຫຼັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫຼັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນທາງການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ" ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເສື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ວ່າເປັນ "ການຫັກຄ່າເສື່ອມການລົງທຶນທາງການເງິນ" ໂດຍປ່ຽນຈາກ "ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ".

4.3.6 ການລົງທຶນໃນຫຼັກຊັບປະເພດທີ່ຖືໄວ້ຈົນຄົບກຳນົດ

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫຼັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມຕົ້ນທຶນ ບວກໃຫ້ ລາຍຮັບ/ລາຍຈ່າຍດອກເບ້ຍຄ້າງຮັບ ໂດຍຄິດໄລ່ຕາມອັດຕາດອກເບ້ຍທີ່ແທ້ຈິງ. ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ຈະຖືກປະເມີນຄ່າເສື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເສື່ອມຂອງຫຼັກຊັບປະເພດນີ້ ຖ້າຫາກມູນຄ່າຍຸດຕິທຳມີການຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເສື່ອມທີ່ເກີດຈາກຫຼັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ໃນພາກສ່ວນຂອງ "ລາຍຈ່າຍຈາກຂາດທຶນສິນເຊື່ອ".

ຖ້າທະນາຄານຕ້ອງການຂາຍ ຫຼື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ) ລາຍການຄັງຫຼັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫຼັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນທາງການເງິນໃດໆໃຫ້ເປັນຊັບສິນທາງການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

4.3.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ແລະ ການລົງທຶນໃນຫຼັກຊັບ ລວມເຖິງຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນ ເຊິ່ງມີການຈ່າຍທີ່ແນ່ນອນ ຫຼື ກຳໜົດໄດ້ ເຊິ່ງບໍ່ໄດ້ລະບຸໃນຕະຫຼາດທີ່ມີການຊື້ຂາຍຄ່ອງ ນອກເໜືອຈາກ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ທະນາຄານສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ;
- ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດມູນຄ່າຂາຍ;
- ທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.3 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

4.3.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຕໍ່)

ຫຼັງຈາກການປະເມີນເບື້ອງຕົ້ນ, ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ແລະ ການລົງທຶນໃນຫຼັກຊັບ ຈະຖືກປະເມີນຕາມມູນຄ່າເສື່ອມໂດຍນຳບັນທຶກລົງບັນຊີນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (ອັດຕາດອກເບ້ຍທີ່ແທ້ຈິງ "EIR") ລົບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຕົ້ນທຶນທີ່ເປັນ ສ່ວນໜຶ່ງຂອງອັດຕາດອກເບ້ຍທີ່ແທ້ຈິງ. ເພາະສະນັ້ນ, ທະນາຄານໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້, ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນການຄິດໄລ່ຄ່າທຳນຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າບໍລິການ).

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ຄ່າເສື່ອມ ແລະ ຖືກບັນທຶກເປັນດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານ.

ທະນາຄານອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍ ທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສິ່ງໃຫ້ຄູ່ສັນຍາ).

4.3.8 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ

"ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ" ປະກອບມີຂໍ້ຕົກລົງຕາມສັນຍາທີ່ສົ່ງຜົນເຮັດໃຫ້ທະນາຄານມີພັນທະທີ່ ຕ້ອງຈ່າຍເງິນສົດ ຫຼື ຊັບສິນທາງການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງກູ້ຢືມອື່ນ' ຈະຖືກປະເມີນອີງຕາມການຫັກມູນຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ('EIR'). ມູນຄ່າເສື່ອມຖືກຄິດໄລ່ໂດຍອີງ ຕາມສ່ວນຫຼຸດ ແລະ ຄ່າທຳນຽມຂອງໜີ້ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.3 ເຄື່ອງມືທາງການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

4.3.9 ການຈັດປະເພດຊັບສິນທາງການເງິນຄືນໃໝ່

ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ບໍ່ແມ່ນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ໄປເປັນ "ຊັບສິນທີ່ມີໄວ້ເພື່ອຂາຍ", "ເງິນກູ້ ແລະ ໜີ້ຕ້ອງຮັບ", ຫຼື "ຊັບສິນທີ່ຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການເງິນທີ່ ນອກເໜືອຈາກ "ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ" ໄປເປັນ "ເງິນກູ້ ແລະ ໜີ້ຕ້ອງຮັບ". ການຈັດປະເພດຄືນໃໝ່ຈະຖືກບັນ ທຶກດ້ວຍມູນຄ່າຍຸດຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນທາງການເງິນທີ່ຖືກຈັດເປັນປະເພດອອກຈາກ "ຊັບສິນມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນເຈົ້າຂອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງ ເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ທຸກໆສ່ວນຜິດດ່ຽງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສເງິນສົດທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍຕົວຈິງ. ຖ້າຊັບສິນຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນເຈົ້າຂອງນັ້ນແມ່ນຈະຖືກນຳມາລາຍງານໃນໃບລາຍງານຜົນ ການເນີນງານ.

ໃນບາງກໍລະນີ ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ເປັນ ປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີ ເຈດຈຳນົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນ ສຳລັບເປັນຊັບສິນທີ່ຍຶດໄດ້ໃນອະນາຄົດ ຫຼື ຄອບຄອງໄວ້ ຈົນຄົບກຳນົດ. ຖ້າຊັບສິນທາງການເງິນຖືກຈັດປະເພດຄືນໃໝ່, ແລະ ຖ້າທະນາຄານໄດ້ຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດເພີ່ມໃນພາຍຫຼັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງ ການເພີ່ມຂຶ້ນນັ້ນ ແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍທີ່ແທ້ຈິງ ຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

4.4 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ

4.4.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນທາງການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນທາງການເງິນທີ່ຄ້າຍຄືກັນ) ຈະຖືກ ຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ຫມົດອາຍຸແລ້ວ. ນອກຈາກນີ້, ທະນາຄານ ຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດ ໃນອານາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.4 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

4.4.1 ຊັບສິນທາງການເງິນ (ຕໍ່)

ການຕິດພັນ ເປັນການເຮັດທຸລະກຳ ເມື່ອທະນາຄານຖືສິດຕາມສັນຍາ ເພື່ອຮັບກະແສເງິນສິດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊຳລະເງິນສິດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ທັນວາ 2024 ທະນາຄານບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ ຫຼື
- ທະນາຄານບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ຕາມທີ່ໄດ້ກ່າວມາຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສິດຈາກຊັບສິນທາງການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສະທ້ອນຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ການຢືມໃໝ່, ສ່ວນຜົດຕ່າງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດຳເນີນງານ.

4.4.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕ່ຳກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜົດຕ່າງ ຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.5 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນມື້ສ້າງໃບລາຍງາຍຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນທາງການເງິນ ຫຼື ກຸ່ມຂອງຊັບ ສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນຈະຖືວ່າມີຄວາມ ເສຍ ຫາຍຖ້າພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫລາຍເຫດການທີ່ປະກົດຂຶ້ນຫຼັງຈາກ ມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫລາຍເຫດການ) ໄດ້ສົ່ງຜົນກະທົບ ເຖິງ ການຄາດຄະເນກະແສເງິນສົດໃນອະນາຄົດ ຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ສາມາດຄາດຄະເນ ໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານ ການ ເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການ ປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຫຼຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

4.5.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ

ການຂາດທຶນຈາກການເສື່ອມມູນຄ່າ

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມຕົ້ນທຶນຄ່າເສື່ອມມູນຄ່າ (ເຊັ່ນ: ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫຼັກຖານການເສື່ອມ ຄ່າຂອງຊັບສິນທາງການເງິນນັ້ນສຳຄັນ ຫຼື ບໍ່ເພື່ອພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າການຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບ ສິນ ແລະ ຍອດເຫຼືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນ ໃນອະນາຄົດ). ຍອດ ຍົກມາຂອງຊັບ ສິນແມ່ນຫຼຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນໃບລາຍງານຜົນການ ດຳເນີນງານ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫຼຸດລົງ ແລະ ຖືກຄິດໄລ່ໂດຍນຳ ໃຊ້ອັດຕາດອກເບ້ຍ ກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກ ເບ້ຍຖືກລົງບັນຊີໃນ ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ ຄ້າຍຄືກັນ.

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອ ຫຼັກຊັບຄ້ຳ ປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫຼຸດລົງຍ້ອນວ່າມີເຫດການ ເກີດ ຂຶ້ນຫຼັງຈາກໄດ້ ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫຼຸດລົງໂດຍການດັດແກ້ໃນບັນຊີລາຍ ຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນ "ລາຍຮັບ".

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍທີ່ແທ້ຈິງຂອງ ຊັບສິນທາງການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫຼຸດສຳລັບການຕີມູນຄ່າຂອງ ຄ່າເສື່ອມມູນຄ່າແມ່ນ ອັດຕາດອກເບ້ຍທີ່ແທ້ຈິງໃນປະຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາ ສ່ວນຫຼຸດສຳລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງໃນປະຈຸບັນ.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫຼັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສ ເງິນສົດ ຊຶ່ງອາດເປັນຜົນມາຈາກຫຼັກຊັບຄ້ຳປະກັນທີ່ຍຶດມາໄດ້ລົບໃຫ້ຕົ້ນທຶນຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ ວ່າການຍຶດຫຼັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.5 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

4.5.1 ຊັບສິນທາງການເງິນທີ່ຮັບຮູ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ (ຕໍ່)

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນທາງການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງ ເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກ ປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ้ำປະກັນ, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ).

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນທາງການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານ ການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ ບົນພື້ນຖານຂໍ້ມູນທີ່ມີໃນປະຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປະຈຸບັນ ເຊິ່ງການເສື່ອມຄ່າຜ່ານມາ ແມ່ນ ເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປະຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາ ສິນຄ້າ, ເງື່ອນໄຂການຊຳລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫຼຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

4.5.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເສື່ອມມູນຄ່າຕໍ່ການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງ ໃນມູນຄ่ายุติธรรมที่ต่ำกว่าต้นทุน ຂໍ້ກຳນົດທີ່ “ສຳຄັນ” ຫຼື “ຍາວນານ” ຕ້ອງຖືກພິຈາລະນາມູນຄ่ายุติธรรมต่ำกว่าค่าใช้จ่าย, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໄຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ่ายุติธรรมที่ต่ำกว่าต้นทุน.

4.5.3 ການປະເມີນມູນຄ่าหลักประกัน

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ้ำປະກັນ, ຖ้าเป็นไปได้, ເພື່ອຫຼຸດຜ່ອນຄວາມສ່ຽງຂອງຊັບສິນທາງການເງິນ. ຫຼັກຊັບຄ้ำປະກັນอาจเป็นได้หลายรูปแบบ ເຊັ່ນ ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືค้ำประกัน, ອະສັງຫາລິມະຊັບ, ໜີ້ຕ้องรับ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ่ายุติธรรมของหลักประกันแม่นถือประเมินในมูนค่าต่ำสุดในมื้เริ่มต้น ແລະ ກຳນົດເວລາການລາຍງານประจำปีของทะนาคาน.

ເພື່ອກຳນົດຂອບເຂດທີ່ຄອນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫລາດສຳລັບປະເມີນຊັບສິນທາງການເງິນ ທີ່ໃຊ້ເປັນຫຼັກຊັບຄ้ำປະກັນ. ຊັບສິນທາງການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ่าตามท้องตะหลาด ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ้ำປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການ ເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.5 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

4.5.4 ຫຼັກຊັບຄ้ຳປะกันที่ถืกยึด

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ้ຳປะกัน. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດຄ່ອງກັບນະໂຍບາຍຂອງທະນາຄານ.

4.6 ການຫັກລ้ำเงื่องมืทางการเงิน

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ้ำกัน ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນສະເພາະກິດຈະການ, ຖ້າຫາກວ່າ ທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ่าสุดทิ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວกัน. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ่าด้อย ການຫັກລ้ำละหว่าง ຊັບສິນ - ໜີ້ສິນ ແລະ ຊັບສິນ - ໜີ້ສິນ ທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ่าลอมในใบลายงานถานะการเงิน.

4.7 ການລົງທຶນໃນบໍลิสัดธ่อมทุละกิด ແລะ บໍลิสัดธ่อมทึน

ທະນາຄານແມ່ນມີລາຍຮັບຈາกบໍลิสัดธ่อมทุละกิด, ເຊິ່ງທະນາຄານມີອິດທິພົນທີ່ສຳຄັນแต่บໍ่แม่นการถอบถุม ຫຼື ການຄອບຄຸມຮ่อมกัน. ການລົງທຶນໃນบໍลิสัดธ่อมทุละกิดแม่นถืดไล่เบี้ยงต้นด้อยต้นทึน ແລະ ການอัดแยกาตามหลัง ໂดยใช้อิทิทึน.

ທະนาถานแม่นมีลายธับจากบໍลิสัดธ่อมทึน ເຊິ่งแม่นหิอฆ่อยทุละกิดที่มีการถอบถุมธ่อมกัน, ดังนั้น ການธ่อมทึนแม่นได้มีข้ตึกลิงกัน กำนิดการถอบถุมธ่อมกันในการเถื่อนไหอทุละกิด. ข้ตึกลิงได้ตึกลิงเป็นเอกะสันกัน สำลับข้ตึกลิงทางการเงิน ແລะ ການดำเนินงานในการธ่อมทึน. ການลົงทຶนใบบໍลิสัดธ่อมทึนแม่นถืดไล่เบี้ยงต้นด้อยต้นทึน ແລะ ການอัดแยกาตามหลังโดยใช้อิทิทึน.

ນะวันที 31 ทันวา 2024, ทะนาถานธ่อมทุละกิดลาอ-หวยด มีเงินกู้จำนวนหนึ่งที่ได้ธับอะนุยาดการจัดชั้นเงินกู้ในชั้นปึกกะติ ຫຼື ชั้นถอนเอิาใจใส่ ອิงตามหนังสือทางการจาก ทหล ลิงวันที 16 กุมพา 2024, ແລะ อะนุยาดให้ ทะนาถานธ่อมทุละกิดลาอ-หวยด สืบต่ำธับรู้ลายธับดอกเบี้ยของเงินกู้ดังกล่าวได้.

พายใต้อิทิทึน, การลงทึนในบໍลิสัดธ่อมทึน ແລะ บໍลิสัดธ่อมทุละกิดแม่นได้ได้ธับรู้เบื้องต้นด้อยต้นทึนในใบลายงานถานะการเงิน บอกกับการป่ยนแปงชับสินสุดทิตามอัดตาส่อนของการลงทึนของทะนาถานในการการลงทึนในบໍลิสัดธ่อมทึน ແລะ บໍลิสัดธ่อมทุละกิดในพานหลัง.

ส่อนแบ่งกำไลของทะนาถานจากบໍลิสัดธ่อมทึน ແລะ บໍลิสัดธ่อมทุละกิด แม่นได้สะแดงให้เห็นยู่ในใบลายงานการดำเนินงาน. นี้แม่นผินกำไลที่เป็นผินมาจากการถือหุ้นในบໍลิสัดธ่อมทึน ຫຼື บໍลิสัดธ่อมทุละกิด ແລะ, ดังนั้น แม่นกำไลหลังอากอน ແລะ เป็นลายธับที่บໍ่สามาดถอบถุมได้บໍลิสัดในเถือของบໍลิสัดธ่อมทึน.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.7 ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ (ຕໍ່)

ຫລັງຈາກນຳໃຊ້ວິທີທຶນແລ້ວ, ທະນາຄານຈະພິຈາລະນາວ່າເຖິງການຮັບຮູ້ຄ່າເສື່ອມເພີ່ມເຕີມ ຂອງການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ. ທະນາຄານຈະພິຈາລະນາພະທຸກວັນທີ່ລາຍງານ ວ່າມີຫລັກຖານການເສື່ອມຄ່າຂອງການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ. ໃນສະຖານະການດັ່ງກ່າວ ທະນາຄານຈະຄິດໄລ່ຄ່າເສື່ອມມູນຄ່າ ເປັນສ່ວນຕ່າງລະຫວ່າງຈຳນວນເງິນທີ່ເກັບຄືນໄດ້ ແລະ ຍອດຍົກມາຂອງການລົງທຶນໃນບໍລິສັດຮ່ວມທຶນ ແລະ ບໍລິສັດຮ່ວມທຸລະກິດ ແລະ ຮັບຮູ້ສ່ວນຜິດດ່ຽງຢູ່ໃນໃບລາຍງານການດຳເນີນງານ.

4.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າທະນາຄານ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫຼັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

4.8.1 ລາຍຮັບ ແລະ ລາຍຈ່າຍ ດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸດຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສິດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ຊຶ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນຂາດທຶນສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສິດໃນອະນາຄົດສຳລັບ ເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

4.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫລາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມແມ່ນຖືກຮັບຮູ້ໃນຈຳນວນທີ່ສະແດງເຖິງການພິຈາລະນາທີ່ທະນາຄານຄາດວ່າຈະມີສິດແລກປ່ຽນໃນການໃຫ້ບໍລິການ. ພັນທະການປະຕິບັດ, ເຊັ່ນດຽວກັນກັບໄລຍະເວລາຂອງຄວາມພໍໃຈຂອງພວກເຂົາແມ່ນຈະຖືກລະບຸ ແລະ ກຳນົດໄວ້ໃນຕອນເລີ່ມຕົ້ນຂອງສັນຍາ. ໂດຍທົ່ວໄປແລ້ວ ສັນຍາລາຍຮັບຂອງທະນາຄານບໍ່ລວມພັນທະການປະຕິບັດຫຼາຍອັນ, ດັ່ງທີ່ໄດ້ອະທິບາຍຕື່ມອີກໃນ 4.8.2.1 ແລະ 4.8.2.2 ຂ້າງລຸ່ມນີ້. ເມື່ອທະນາຄານໃຫ້ບໍລິການແກ່ລູກຄ້າ ຄ່າທຳນຽມຈະຖືກຮຽກເກັບ ແລະ ໂດຍທົ່ວໄປແລ້ວຈະຈ່າຍທັນທີທີ່ທາງທະນາຄານພໍໃຈທີ່ສະໜອງໃຫ້ໃນຊ່ວງເວລາໃດໜຶ່ງ ຫຼື ໃນຕອນທ້າຍຂອງໄລຍະສັນຍາສຳລັບການບໍລິການທີ່ສະໜອງໃຫ້ໃນໄລຍະເວລາໜຶ່ງ (ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນໃນ 4.8.2.1. ແລະ 4.8.2.2 ຂ້າງລຸ່ມນີ້). ໂດຍທົ່ວໄປທະນາຄານໄດ້ສະຫຼຸບແລ້ວວ່າທະນາຄານເປັນຜູ້ຮັບຜິດຊອບຫຼັກໃນຂໍ້ຕົກລົງດ້ານລາຍໄດ້ ເນື່ອງຈາກທະນາຄານຈະເປັນຜູ້ຄວບຄຸມບໍລິການທີ່ຈະມອບໃຫ້ແກ່ລູກຄ້າດັ່ງກ່າວ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ (ຕໍ່)

4.8.2.1 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ຖືກຊຳລະຕາມໄລຍະເວລາທີ່ກຳນົດ

ພັນທະການປະຕິບັດງານທີ່ຕ້ອງໄດ້ຮັບການຕອບສະໜອງໃນແຕ່ລະຄັ້ງລວມເຖິງການຄຸ້ມຄອງຊັບສິນ, ການເບິ່ງແຍງດູແລ ແລະການບໍລິການອື່ນໆ, ບ່ອນທີ່ລູກຄ້າໄດ້ຮັບ ແລະ ໃຊ້ຜົນປະໂຫຍດໃນຂະນະທີ່ທະນາຄານດຳເນີນການ.

4.8.7.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການທີ່ເປັນສ່ວນໜຶ່ງທີ່ຖືກຊຳລະນະເວລາໃດໜຶ່ງ

ການບໍລິການທີ່ສະໜອງໃຫ້ເຊິ່ງມີພັນທະດ້ານການດຳເນີນການຂອງທາງທະນາຄານໄດ້ຖືກປະຕິບັດຕາມໃນເວລາໃດໜຶ່ງຖືກຮັບຮູ້ເມື່ອການຄວບຄຸມການບໍລິການຖືກໂອນໄປໃຫ້ລູກຄ້າ. ນີ້ແມ່ນປົກກະຕິກ່ຽວກັບການສຳເລັດການເຮັດທຸລະກຳ ຫຼື ການບໍລິການທີ່ຕິດພັນ ຫຼື ສຳລັບຄ່າທຳນຽມ ຫຼື ອົງປະກອບຂອງຄ່າທຳນຽມທີ່ຕິດພັນກັບການດຳເນີນການບາງຢ່າງ, ທີ່ຈະເກີດຂຶ້ນຫຼັງຈາກປະຕິບັດຕາມເງື່ອນໄຂທີ່ສອດຄ້ອງກັນ. ສິ່ງເຫຼົ່ານີ້ລວມມີຄ່າທຳນຽມ ແລະ ບໍລິການທີ່ເກີດຈາກການເຈລະຈາ ຫຼື ເຂົ້າຮ່ວມການເຈລະຈາທຸລະກຳຂອງບຸກຄົນທີສາມ ເຊັ່ນ: ການຈັດການ/ການເຂົ້າຮ່ວມ ຫຼື ການເຈລະຈາການຊື້ຮຸ້ນ ຫຼື ຫຼັກຊັບອື່ນໆ, ຫຼືການຊື້ ຫຼື ຂາຍທຸລະກິດ, ຄ່ານາຍໜ້າ ແລະ ຄ່າທຳນຽມການຮັບປະກັນ.

4.8.3 ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການຮັບການຊຳລະ.

4.8.4 ລາຍຮັບ/ລາຍຈ່າຍສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

ເປັນຜົນທີ່ເກີດຂຶ້ນຈາກກິດຈະກຳການຄ້າປະກອບດ້ວຍທຸກກຳໄລ ແລະ ຂາດທຶນຈາກການປ່ຽນແປງໃນມູນຄ່າຍຸດຕິທຳ ແລະ ລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນສຳລັບຊັບສິນ ແລະ ໜີ້ສິນທາງການເງິນ 'ຖືໄວ້ເພື່ອການຄ້າ'. ນີ້ປະກອບມີການບໍ່ມີປະສິດທິພາບທີ່ໄດ້ບັນທຶກໃນການເຮັດທຸລະກຳປ້ອງກັນຄວາມສ່ຽງ.

4.9 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເຊິ່ງເປັນປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ.

4.10 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນ (ລວມມີ ອຸປະກອນພາຍໃຕ້ສັນຍາເຊົ່າໃນການທຸລະກິດທີ່ທະນາຄານໄດ້ເຊົ່າ) ແມ່ນໄດ້ລາຍງານຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນຳໃຊ້ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.10 ຊັບສິນຢັດ ແລະ ອຸປະກອນ (ຕໍ່)

ຄ່າຫຼ້ຽຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຽຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນຢັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

	ອັດຕາຄ່າຫຼ້ຽຍຫ້ຽນ
ອາຄານ ແລະ ການປັບປຸງ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນິເຈີ ແລະ ຕິດຕັ້ງ	10-20%
ພາຫະນະ	20%

ຊັບສິນຢັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນຢັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນຢັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນຢັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານຂອງປີທີ່ຊັບສິນຢັດໄດ້ຖືກສະສາງອອກ.

4.11 ຊັບສິນຢັດຄົງທີ່ບໍ່ມີຕົວຕົນ

ຊັບສິນຢັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊອບແວ.

ຊັບສິນຢັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນຢັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສິນຢັດຄົງທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນຢັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາ ຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸດຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນຢັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນ ໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນຢັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີການຫັກຄ່າເສື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເສື່ອມ, ຕາມຄວາມ ເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມຂອງຊັບສິນຢັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

	ອັດຕາຄ່າຫຼ້ຽຍຫ້ຽນ
ສິດການນຳໃຊ້ທີ່ດິນ (*)	ບໍ່ມີຄ່າເສື່ອມ
ຊອບແວ	20%

(*) ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງການເງິນ

ທະນາຄານປະເມີນນະມື້ສ້າງເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳ ຂອງຫົວໜ່ວຍຊັບສິນທີ່ກ່ຳໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫລາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫລາດໃນປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະ ສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດຮ່ວມທຸລະກິດ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປົ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລ້ຽຫ້ຽນ, ບໍ່ມີຄ່າ ເສື່ອມຂອງຊັບສິນໃນປີຜ່ານມາ. ການປົ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

4.13 ການຄ້ຳປະກັນທາງການເງິນ

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸດຕິທຳ, ພ້ອມຄ່າທຳນຽມ. ພາຍຫຼັງການຮັບຮູ້ ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານການເງິນ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

4.14 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດຂອງພະນັກງານຫຼັງອອກວຽກ

ຜົນປະໂຫຍດພາຍຫຼັງອອກວຽກ ຈະຈ່າຍໃຫ້ແກ່ພະນັກງານທີ່ກະສຽນອາຍຸຂອງພະນັກງານຂອງທະນາຄານ ເມື່ອເວລາທີ່ກະສຽນອາຍຸ ໂດຍເອົາຈຳນວນລັນ ເທົ່າກັບ (ເງິນເດືອນພື້ນຖານຄັ້ງລ່າສຸດ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ (ຖ້າມີ) + 25% ຂອງຜົນປະໂຫຍດອື່ນໆ) x 1.5 x ປີການເຮັດວຽກ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.14 ຜົນປະໂຫຍດຂອງພະນັກງານ (ຕໍ່)

ກອງທຶນເພື່ອຜົນປະໂຫຍດພາຍຫຼັງອອກວຽກ ແມ່ນມາຈາກ:

(i) ຄັງສຳຮອງກະສຽນອາຍຸທີ່ສົມທົບຈາກພະນັກງານ, ເຊິ່ງທະນາຄານໄດ້ຫັກເງິນເດືອນຂອງພະນັກງານ (5.5%) ຂອງ ຈຳນວນເງິນ (ເທົ່າກັບເງິນເດືອນພື້ນຖານ + ຄ່າແຮງງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງ ຜົນປະໂຫຍດອື່ນໆ);
(ii) ເງິນສົມທົບຈາກທະນາຄານເປັນລາຍເດືອນ ເຊິ່ງເທົ່າກັບ 6% ຂອງຈຳນວນເງິນ (ເທົ່າກັບ ເງິນເດືອນພື້ນຖານ + ຄ່າແຮງ ງານ + 25% ຂອງເງິນເບ້ຍລ້ຽງ + 25% ຂອງຜົນປະໂຫຍດອື່ນໆ)

ຕົ້ນທຶນໃນການສະໜອງຜົນປະໂຫຍດພາຍໃຕ້ແຜນດັ່ງກ່າວທີ່ກຳນົດແມ່ນຖືກກຳນົດການນຳໃຊ້ວິທີການຄິດໄລ່ແບບຄາດ ຄະເນສິນເຊື່ອ.

ການປະເມີນຄືນ, ປະກອບມີກຳໄລ ແລະ ຂາດທຶນຕົວຈິງ ບໍ່ລວມດອກເບ້ຍທີ່ລວມເຂົ້າໃນດອກເບ້ຍສຸດທິໃນຜົນປະໂຫຍດ ໜີ້ສິນທີ່ໄດ້ກຳນົດໄວ້ຈະບັນທຶກທັນທີໂດຍທັນທີໃນໃບລາຍງານຖານະການເງິນພ້ອມກັບ ຈັດໝວດ ຫຼື ມີ ທີ່ກ່ຽວຂ້ອງກັບກຳໄລ ສະສົມໂດຍຜ່ານໃບລາຍງານຜົນການດຳເນີນງານນອກການທຸລະກິດໃນປີທີ່ເກີດຂຶ້ນ. ການປະເມີນຄືນ ແມ່ນບໍ່ໄດ້ຈັດປະເພດ ຄືນເຂົ້າກຳໄລ ແລະ ຂາດທຶນໃນໄລຍະຕໍ່ມາ.

ດອກເບ້ຍສຸດທິທີ່ຄິດໄລ່ໂດຍໃຊ້ອັດຕາສ່ວນຫຼຸດຂອງຊັບສິນ ຫຼື ໜີ້ສິນສຸດທິທີ່ກຳນົດໄວ້.

ທະນາຄານຮັບຮູ້ຜົນການດຳເນີນງານທີ່ປ່ຽນແປງໄປໃນພັນທະທີ່ຜູກພັນກັບຜົນປະໂຫຍດສຸດທິພາຍໃຕ້ "ລາຍຈ່າຍໃຫ້ແກ່ ພະນັກງານ" ໃນໃບລາຍງານຜົນການດຳເນີນງານ:

- ຄ່າໃຊ້ຈ່າຍໃນການບໍລິການປະກອບມີຄ່າໃຊ້ຈ່າຍໃນການບໍລິການໃນປະຈຸບັນ, ຄ່າໃຊ້ຈ່າຍໃນການບໍລິການຜ່ານມາ, ກຳ ໄລ ແລະ ຂາດທຶນ ໃນການຕັດຫັກລົບ ແລະ ການຊຳລະທີ່ບໍ່ເກີດຂຶ້ນເປັນປະຈຳ, ແລະ
- ລາຍຮັບ ຫຼື ລາຍຈ່າຍດອກເບ້ຍສຸດທິ

ຜົນປະໂຫຍດຫຼັງການຍົກເລີກສັນຍາຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງ ວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກ ງານ ພື້ນຖານການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກ. ນະວັນທີ 31 ທັນວາ 2024 ບໍ່ມີພະນັກງານທະນາຄານຜູ້ທີ່ເລີກຈ້າງເກີດຂຶ້ນດັ່ງທີ່ກ່າວຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບ ການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.15 ເງິນແຮ

ເງິນແຮ ຈະຖືກຮັບຮູ້ ກ່ຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີກລົງ) ເນື່ອງມາ ຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວ ຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດ ກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ຊຶ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານພາຍຫຼັງໄດ້ຮັບເງິນຄືນ.

4.16 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນ ສຳລັບປີປະຈຸບັນ ແລະ ປີທີ່ຜ່ານມາ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນ ສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງ ເສຍອາກອນ.

ອາກອນລາຍໄດ້ພາຍໃນປີ ທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການ ບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງ ຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນລໍຖ້າສະສາງ

ອາກອນລໍຖ້າສະສາງແມ່ນຖືກຄິດໄລ່ ຈາກສ່ວນຜິດຊົ່ງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນ ອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນລໍຖ້າສະສາງແມ່ນຖືກຮັບຮູ້ເປັນສ່ວນຕ່າງ ອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນ ການເຄື່ອນໄຫວທີ່ບໍ່ແມ່ນການສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທາງອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າ ຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງ ຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນໄລຍະ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍ ສ່ວຍສາອາກອນ) ທີ່ໄດ້ ປະກາດໃຊ້ນະມື້ສ້າງໃບລາຍງານຖານະການເງິນ.

ອາກອນພາຍໃນໄລຍະ ແລະ ອາກອນລໍຖ້າສະສາງຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນ ໄດ້ຮັບ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດຊົ່ງ ອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ຊຶ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນ ເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນເຍື້ອນຊຳ ລະ. ທະນາຄານຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງການເງິນ ທີ່ຖືກຈັດປະເພດ ເປັນທຶນເຈົ້າຂອງ.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.16 ອາກອນກຳໄລ (ຕໍ່)

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າສະສາງແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກລ້າງຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

4.17 ຊັບສິນທີ່ໄດ້ຮັບມອບໝາຍອຳນາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກຳມະສິດ)

ທະນາຄານໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວ ບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນຂອງທະນາຄານ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງທະນາຄານ.

4.18 ຄັງສຳຮອງທຶນເຈົ້າຂອງ

ຄັງສຳຮອງຖືກບັນທຶກເປັນທຶນ ໃນເອກະສານລາຍງານການເງິນ ຂອງທະນາຄານ, ເຊິ່ງລວມມີ:

- ຄັງສຳຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢູ່ບົດອະທິບາຍເລກທີ 30.

4.19 ມາດຕະຖານທີ່ໄດ້ອອກມາແລ້ວແຕ່ຍັງບໍ່ທັນມີຜົນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍໃໝ່ ຫຼື ທີ່ມີການແກ້ໄຂທີ່ໄດ້ອອກມາແລ້ວແຕ່ຍັງບໍ່ທັນມີຜົນບັງຄັບໃຊ້ ກຳລັງຢູ່ໃນລະຫວ່າງການປະເມີນໂດຍທະນາຄານ ເພື່ອກວດສອບຜົນກະທົບຕໍ່ເອກະສານລາຍງານການເງິນຂອງທະນາຄານ. ດັ່ງທີ່ໄດ້ອະທິບາຍໄວ້ຂ້າງຕົ້ນ ເຊິ່ງລວມທັງມາດຕະຖານ ແລະ ການແກ້ໄຂທີ່ໄດ້ມີຜົນບັງຄັບໃຊ້ມາດຕະຖານ ຫຼື ການແກ້ໄຂໃໝ່ ແຕ່ຍັງຢູ່ໃນຂັ້ນຕອນການຮັບຮອງໃນທ້ອງຖິ່ນ ຫຼື ເຮັດໃຫ້ມີອັນທີ່ມີຜົນບັງຄັບໃຊ້ທີ່ລ່າຊ້າກວ່າເກົ່າ.

4.19.1 ມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ

ໃນເດືອນ ເມສາ 2024, IASB ໄດ້ອອກມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ ເຊິ່ງມາແທນທີ່ IAS 1 ຂອງການນຳສະເໜີເອກະສານລາຍງານການເງິນ. IFRS 18 ນຳຂໍ້ກຳນົດໃໝ່ສຳລັບການນຳສະເໜີໃນໃບລາຍງານກຳໄລ ຫຼື ຂາດທຶນ ເຊິ່ງລວມທັງຍອດທັງໝົດ ແລະ ຍອດຍ່ອຍທີ່ກຳນົດໄວ້. ນອກຈາກນີ້ ວິສາຫະກິດຕ່າງໆ ຕ້ອງຈັດປະເພດລາຍຮັບ ແລະ ລາຍຈ່າຍທັງໝົດທີ່ຢູ່ໃນໃບລາຍງານກຳໄລ ຫຼື ຂາດທຶນເປັນ 1 ໃນ 5 ປະເພດ ໄດ້ແກ່: ການດຳເນີນງານ, ການລົງທຶນ, ການເງິນ, ອາກອນລາຍໄດ້ ແລະ ການດຳເນີນງານທີ່ຍົກເລີກໄປແລ້ວ, ເຊິ່ງໃນ 3 ປະເພດທຳອິດນັ້ນເປັນປະເພດໃໝ່. ທັ້ງນີ້ ມາດຕະຖານນີ້ຍັງມີຂໍ້ກຳນົດສະເພາະສຳລັບການນຳສະເໜີ ແລະ ຕົວເລືອກສຳລັບວິສາຫະກິດ ເຊັ່ນວ່າ: Good Bank ທີ່ມີກິດຈະກຳທຸລະກິດຫຼັກທີ່ລະບຸໄວ້ (ບໍ່ວ່າຈະເປັນການໃຫ້ບໍລິການທາງການເງິນແກ່ລູກຄ້າ ຫຼື ການລົງທຶນໃນຊັບສິນປະເພດສະເພາະ ຫຼື ທັງສອງຢ່າງ).

ນອກຈາກນີ້ ຍັງມີຂໍ້ກຳນົດໃຫ້ເປີດເຜີຍຂໍ້ມູນກ່ຽວກັບ ວັດແທກຜົນການດຳເນີນງານທີ່ກຳນົດໂດຍຜູ້ບໍລິຫານ ເຊິ່ງເປັນຍອດຍ່ອຍຂອງລາຍໄດ້ ແລະ ຄ່າໃຊ້ຈ່າຍ ລວມທັງຂໍ້ກຳນົດໃໝ່ສຳລັບການລວມ ແລະ ການແຍກລາຍລະອຽດຂໍ້ມູນທາງການເງິນໂດຍອີງຕາມ “ບົດບາດ”ຂອງເອກະສານລາຍງານການເງິນຫຼັກ ແລະ ບົດອະທິບາຍຊ້ອນທ້າຍ.

ມີການແກ້ໄຂຂອບເຂດສະເພາະສຳລັບ IAS 7 ໃບລາຍງານກະແສເງິນສົດ ເຊິ່ງລວມທັງການປ່ຽນຈຸດເລີ່ມຕົ້ນສຳລັບການພິຈາລະນາກະແສເງິນສົດຈາກການດຳເນີນງານພາຍໃຕ້ວິທີທາງອ້ອມ “ກຳໄລ ຫຼື ຂາດທຶນ” ເປັນ “ກຳໄລ ຫຼື ຂາດທຶນຈາກການດຳເນີນງານ”ແລະ ຍົກເລີກຕົວເລືອກກ່ຽວກັບການຈັດປະເພດກະແສເງິນສົດຈາກເງິນປັນຜົນ ແລະ ດອກເບ້ຍ, ນອກຈາກນີ້ ຍັງມີການແກ້ໄຂມາດຕະຖານອື່ນໆ ທີ່ກ່ຽວຂ້ອງອີກຫຼາຍຂໍ້.

4. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

4.19 ມາດຕະຖານທີ່ໄດ້ນຳສະເໜີແຕ່ຍັງບໍ່ທັນມີຜົນບັງຄັບໃຊ້ (ຕໍ່)

4.19.1 ມາດຕະຖານ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ (ຕໍ່)

IFRS 18 ແລະ ການແກ້ໄຂມາດຕະຖານອື່ນໆ ຈະມີຜົນບັງຄັບໃຊ້ສຳລັບ ການລາຍງານປະຈຳປີທີ່ເລີ່ມຕົ້ງແຕ່ ຫຼື ຫຼັງຈາກວັນທີ 1 ມັງກອນ 2027, ໂດຍອະນຸຍາດໃຫ້ສາມາດນຳໄປໃຊ້ກ່ອນກຳນົດໄດ້ ແຕ່ຕ້ອງເປີດເຜີຍຂໍ້ມູນດັ່ງກ່າວ ແລະ IFRS 18 ຈະຖືກນຳໄປໃຊ້ຍ້ອນຫຼັງ. ຂະນະນີ້ ທະນາຄານພວມດຳເນີນການເພື່ອລະບຸຜົນກະທົບທັງໝົດທີ່ການແກ້ໄຂເພີ່ມເຕີມຈະມີຕໍ່ເອກະສານລາຍງານການເງິນຫຼັກ ແລະ ບົດອະທິບາຍໃນເອກະສານລາຍງານການເງິນ.

5. ການຄາດຄະແນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນ ຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫລາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນໄລຍະການເງິນ ຕໍ່ໜ້າ. ທະນາຄານໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງການເງິນທີ່ຖືກກະກຽມ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫລາດ ຫຼື ສະພາບການທີ່ຄວບຄຸມທະນາຄານ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

5.1 ຄວາມສົບເນື່ອງໃນການດຳເນີນທຸລະກິດ

ຄະນະບໍລິຫານຂອງທະນາຄານໄດ້ປະເມີນຄວາມອາດສາມາດຂອງທະນາຄານ ກໍ່ຄືຄວາມສົບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າທະນາຄານມີແຫລ່ງທຶນ ເພື່ອສົບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງທະນາຄານ ເພື່ອສົບຕໍ່ດຳເນີນງານກໍ່ຄືຄວາມສົບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນ ຍັງສົບຕໍ່ກະກຽມຂຶ້ນບົນພື້ນຖານ ຄວາມສົບເນື່ອງໃນການດຳເນີນທຸລະກິດ.

5.2 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 4.3.3, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

5. ການຄາດຄະແນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

5.3 ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ການເສື່ອມມູນຄ່າສະເພາະຕາມຄວາມສຳຄັນແບບລາຍການ ຫຼື ຊັບສິນສ່ຽງທີ່ຖືກກຳນົດວ່າສຳຄັນ;
- ການເສື່ອມມູນຄ່າເປັນກຸ່ມ.

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍ ເລກທີ 4.5.1 ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະບໍລິຫານ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

5.4 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານທົບທວນຄືນຫຼັກຊັບຂອງຕົນທີ່ໄດ້ຈັດປະເພດເປັນ ຫຼັກຊັບທີ່ມີໄວ້ເພື່ອຂາຍນະແຕ່ລະວັນທີ່ລາຍງານ ເພື່ອປະເມີນວ່າຫຼັກຊັບເຫຼົ່ານັ້ນມີການເສື່ອມຄ່າ ຫຼື ບໍ່ ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 4.5.2.

ການປະເມີນນີ້ ປະກອບມີການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ນຳໃຊ້ອື່ນໆ ເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງເຄື່ອງມືທຶນ, ການຕີຄວາມໝາຍວ່າ 'ສຳຄັນ' ຫຼື 'ຍືດອາຍຸ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈນີ້, ທະນາຄານປະເມີນ ບັນດາປັດໄຈ, ການເໜັງຕີງຂອງລາຄາຮຸ້ນໃນອະດີດ ແລະ ໄລຍະ ແລະ ຂອບເຂດຂອງມູນຄ່າຍຸດຕິທຳຂອງຫຼັກຊັບແມ່ນໜ້ອຍກວ່າຕົ້ນທຶນຂອງຫຼັກຊັບ.

5.5 ຊັບສິນອາກອນລໍຖ້າສະສາງ

ຊັບສິນອາກອນລໍຖ້າສະສາງແມ່ນຖືກຮັບຮູ້ໃນແງ່ຂອງການຂາດທຶນອາກອນຫາກມີຄວາມເປັນໄປໄດ້ທີ່ວ່າ ອາກອນກຳໄລໃນອະນາຄົດແມ່ນຈະຍັງມີຢູ່ ທີ່ຂາດທຶນສາມາດນຳໃຊ້ໄດ້. ການຕັດສິນໃຈແມ່ນຮຽກຮ້ອງເພື່ອກຳນົດຈຳນວນຂອງຊັບສິນອາກອນລໍຖ້າສະສາງທີ່ສາມາດຮັບຮູ້ໄດ້ໂດຍອີງຕາມແນວໂນ້ມຂອງໄລຍະເວລາ ແລະ ລະດັບຂອງອາກອນກຳໄລໃນອະນາຄົດ ພ້ອມກັນກັບຍຸດທະສາດແຜນການທາງອາກອນ.

6. ລາຍຮັບສຸດທິດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2024 *ລ້ານກີບ*	*2023* *ລ້ານກີບ*
ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຈາກ:		
ລາຍຮັບດອກເບ້ຍເງິນກູ້ຢືມໃຫ້ລູກຄ້າ	4,032,517	3,118,426
ລາຍຮັບດອກເບ້ຍເງິນຝາກຢູ່ທະນາຄານອື່ນໆ	1,055,998	461,111
ອື່ນໆ		
- ລາຍຮັບດອກເບ້ຍການລົງທຶນໃນຫຼັກຊັບ	*1,261,158*	420,810
	6,349,673	**4,000,347**
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບ:		
ລາຍຈ່າຍດອກເບ້ຍໃຫ້ແກ່ທະນາຄານ	(362,284)	(249,531)
ລາຍຈ່າຍດອກເບ້ຍໃຫ້ແກ່ລູກຄ້າ	(2,335,105)	(2,012,627)
	(2,697,389)	**(2,262,158)**
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	**3,652,284**	**1,738,189**

7. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2024 *ລ້ານກີບ*	*2023* *ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ຄ່າບໍລິການຊຳລະສະສາງ	833,063	582,628
ກິດຈະກຳທາງສິນເຊື່ອ	746,710	14,963
ກິດຈະກຳອື່ນໆ	117,524	327,442
	1,697,297	**925,033**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ຄ່າບໍລິການຊຳລະສະສາງ	(195,239)	(110,122)
ກິດຈະກຳທາງການເງິນ	(671,074)	(261,705)
	(866,313)	**(371,827)**
ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ	**830,984**	**553,206**

8. ລາຍຮັບສຸດທິຈາກການຊື້-ຂາຍເງິນຕາຕ່າງປະເທດ

	2024 *ລ້ານກີບ*	*2023* *ລ້ານກີບ*
ກຳໄລຈາກການແລກປ່ຽນເງິນຕາ	17,885,179	15,392,519
ຂາດທຶນຈາກການແລກປ່ຽນເງິນຕາ	(17,641,098)	(15,001,593)
	244,081	**390,926**

9. ລາຍຮັບອື່ນໆຈາກການດຳເນີນງານ

	2024 *ລ້ານກີບ*	*2023* *ລ້ານກີບ*
ເກັບຄືນໜີ້ເສຍທີ່ຖືກສະສາງອອກ	460,642	429,990
ລາຍຮັບເງິນປັນຜົນ	-	1,918
ລາຍຮັບອື່ນໆ	45,874	14,049
	506,516	**445,957**

10. ຄ່າເສື່ອມມູນຄ່າສຳລັບການລົງທຶນທາງການເງິນ

	2024 *ລ້ານກີບ*	*2023* *ລ້ານກີບ*
ຂາດທຶນຄ່າເສື່ອມມູນຄ່າສຳລັບການລົງທຶນໃນຫຼັກຊັບຖືໄວ້ເພື່ອຂາຍ (ບົດເອກະສານຊ້ອນທ້າຍ ເລກທີ 17)	(7,287)	(2,301)
	(7,287)	**(2,301)**

11. ລາຍຈ່າຍພະນັກງານ

	2024 *ລ້ານກີບ*	*2023* *ລ້ານກີບ*
ລາຍຈ່າຍເງິນເດືອນ ແລະ ຄ່າຈ້າງ	233,754	179,493
ເງິນອຸດໜຸນ ແລະ ຜົນປະໂຫຍດອື່ນໆໃຫ້ແກ່ພະນັກງານ	247,704	169,167
ເງິນອຸດໜຸນພາຍຫຼັງອອກວຽກ	106,360	45,643
ອັດຕາກຳມະນັກງານ	5,909	5,057
ລາຍຈ່າຍຄ່າຝຶກອົບຮົມ	1,421	174
	595,148	**399,534**

12. ລາຍຈ່າຍອື່ນໆຈາກການດຳເນີນງານ

	2024 *ລ້ານກີບ*	*2023* *ລ້ານກີບ*
ຄ່າສ້ອມແປງ ແລະ ບຳລຸງຮັກສາ	43,420	32,774
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	30,680	25,531
ຄ່າຝຶກອົບຮົມ, ການປະຊຸມ ແລະ ການສຳມະນາ	24,696	18,553
ສາທາລະນູປະໂພກ	15,016	12,817
ຄ່າສື່ສານ	14,480	9,466
ລາຍຈ່າຍປະກັນໄພ	8,676	9,416
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	11,367	9,037
ຄ່າເຊົ່າຫ້ອງການ	8,180	6,759
ລາຍຈ່າຍນ້ຳມັນ	6,325	5,712
ລາຍຈ່າຍຄ່າກວດສອບ	1,125	1,064
ຄ່າທຳນຽມທີ່ປຶກສາ ແລະ ບໍລິການດ້ານການເງິນ	514	645
ຄ່າອາກອນ ແລະ ພາສີອື່ນໆ	3,308	1,406
ລາຍຈ່າຍດອກເບ້ຍໜີ້ສິນຕາມສັນຍາເຊົ່າ	1,698	757
ຈ່າຍຄ່າຄຸ້ມຄອງເງິນຝາກໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	117,244	90,619
ລາຍຈ່າຍອື່ນໆ	35,878	70,415
	322,607	**294,971**

13. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ເງິນສົດໃນຄັງເປັນເງິນກີບ	2,415,523	2,343,586
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	2,907,950	2,827,492
ຍອດເຫຼືອຢູ່ ທຫລ:		
- ເງິນຝາກກະແສລາຍວັນ	10,367,826	15,450,480
- ເງິນຝາກແຮບັງຄັບ (*)	9,600,243	6,228,255
- ເງິນຝາກມີກຳນົດ (**)	7,427,163	4,834,330
	32,718,705	**31,684,143**

ເງິນຝາກຢູ່ກັບ ທຫລ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກພາກບັງຄັບ. ເງິນຝາກປະເພດນີ້ເປັນເງິນຝາກທີ່ບໍ່ມີດອກເບ້ຍ.

(*) ອີງຕາມລະບຽບການຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາເງິນສົດສຳຮອງຢູ່ກັບ ທຫລ ໃນຮູບແບບຂອງເງິນຝາກແຮບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 8.00% ສຳລັບເງິນກີບ ແລະ 11.00% ສຳລັບເງິນຕາຕ່າງປະເທດ (2023: 8.00% ສຳລັບເງິນກີບ ແລະ 10.00% ສຳລັບເງິນຕາຕ່າງປະເທດ) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດໜ້ອຍກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາເງິນຝາກບັງຄັບ ໂດຍສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

13. ເງິນສິດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") (ຕໍ່)

(**) ລາຍລະອຽດຂອງເງິນຝາກມີກຳນົດຢູ່ທະນາຄານ ແຫ່ງ ສປປ ລາວ ຕາມມື້ຄົບກຳນົດມີດັ່ງນີ້:

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*
ຕ່ຳກວ່າ 1 ເດືອນ	-	1,000,142
3 ຫາ 6 ເດືອນ	4,769,890	1,916,475
6 ຫາ 9 ເດືອນ	1,262,003	1,277,829
9 ຫາ 12 ເດືອນ	1,395,270	639,884
	7,427,163	**4,834,330**

ລາຍລະອຽດຂອງເງິນຝາກມີກຳນົດຢູ່ທະນາຄານ ແຫ່ງ ສປປ ລາວ ຕາມອັດຕາດອກເບ້ຍມີດັ່ງນີ້:

	2024	*2023*
	%ຕໍ່ປີ	% ຕໍ່ປີ
ຕ່ຳກວ່າ 1 ເດືອນ	-	0.74
3 ຫາ 6 ເດືອນ	0.10 - 4.50	2.04
6 ຫາ 9 ເດືອນ	2.59	2.59
9 ຫາ 12 ເດືອນ	3.14 - 5.00	3.14

14. ໜີ້ຕ້ອງຮັບຈາກທະນາຄານອື່ນ

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*
ເງິນຝາກກະແສລາຍ ແລະ ເງິນຝາກປະຢັດ	**11,345,576**	**11,804,977**
- ສະກຸນເງິນກີບ	144	10,945
- ສະກຸນເງິນຕາຕ່າງປະເທດ	11,345,432	11,794,032
ເງິນຝາກມີກຳນົດ	**9,166,939**	**10,159,378**
- ສະກຸນເງິນກີບ	3,686,919	4,198,037
- ສະກຸນເງິນຕາຕ່າງປະເທດ	5,480,020	5,961,341
	20,512,515	**21,964,355**

14. ໜີ້ຕ້ອງຮັບຈາກທະນາຄານອື່ນ (ຕໍ່)

ອັດຕາດອກເບ້ຍສຳຫຼັບໜີ້ຕ້ອງຮັບຈາກທະນາຄານອື່ນພາຍໃນປີ ມີດັ່ງນີ້:

	2024 % ຕໍ່ປີ	*2023* % ຕໍ່ປີ
ເງິນຝາກກະແສລາຍວັນ	0.07 - 3.30	0.15 - 1.20
ເງິນຝາກປະຢັດ	0.10 - 2.16	0.07 - 2.16
ເງິນຝາກມີກຳນົດ	4.30 - 13.00	0.15 - 7.70

15. ເງິນກູ້ຢືມໃຫ້ລູກຄ້າ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ເງິນກູ້ຢືມໃຫ້ລູກຄ້າ	62,162,622	55,580,276
ຫັກ: ເງິນແຮສຳລັບການເສື່ອມມູນຄ່າ	(2,220,822)	(1,687,920)
	59,941,800	**53,892,356**

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນປີມີ ດັ່ງລຸ່ມນີ້:

	2024 *ອັດຕາດອກເບ້ຍ* *% ຕໍ່ປີ*	*2023* *ອັດຕາດອກເບ້ຍ* *% ຕໍ່ປີ*
ເງິນກູ້ເປັນເງິນ ກີບ	3.00 - 17.00	3.00 - 17.00
ເງິນກູ້ເປັນເງິນ ໂດລາ	5.80 - 16.00	5.80 - 16.00
ເງິນກູ້ເປັນເງິນ ບາດ	6.00 - 9.25	6.00 - 11.50

15. ເງິນກູ້ຢືມໃຫ້ລູກຄ້າ (ຕໍ່)

ເງິນກູ້ແຍກຕາມສະກຸນເງິນ:

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ (*)	*ລ້ານກີບ (*)*
ເງິນກູ້ເປັນເງິນ ກີບ	22,106,133	19,153,975
ເງິນກູ້ເປັນເງິນ ໂດລາ	29,869,645	30,272,378
ເງິນກູ້ເປັນເງິນ ບາດ	10,186,844	6,153,923
	62,162,622	**55,580,276**

(*) ການແຍກປະເພດເງິນກູ້ແມ່ນໄດ້ສະແດງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ເງິນກູ້ແຍກຕາມມື້ຄົບກຳນົດເດີມ:

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ (*)	*ລ້ານກີບ (*)*
ເງິນກູ້ໄລຍະສັ້ນ	7,782,836	4,048,836
ເງິນກູ້ໄລຍະກາງ	38,267,013	36,502,379
ເງິນກູ້ໄລຍະຍາວ	16,112,773	15,029,061
	62,162,622	**55,580,276**

(*) ການແຍກປະເພດເງິນກູ້ແມ່ນໄດ້ສະແດງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ຄັງເງິນກູ້ແຍກຕາມແຕ່ລະຂະແໜງທຸລະກິດ ດັ່ງລຸ່ມນີ້:

	31 ທັນວາ 2024 (*)		*31 ທັນວາ 2023 (*)*	
	ລ້ານກີບ	*%*	*ລ້ານກີບ*	*%*
ຂະແໜງອຸດສາຫະກຳ	37,341,192	60.07	31,581,226	56.82
ຂະແໜງກໍ່ສ້າງ	6,389,390	10.28	6,766,094	12.17
ຂະແໜງປະກອບອັດຖຸເຕັກນິກ	1,710,799	2.75	1,083,309	1.95
ຂະແໜງກະສິກຳ ແລະ ປ່າໄມ້	512,125	0.82	250,749	0.45
ຂະແໜງການຄ້າ	9,425,757	15.16	6,929,002	12.47
ຂະແໜງຂົນສົ່ງໄປສະນີ	230,923	0.37	2,230,823	4.01
ຂະແໜງບໍລິການ	5,333,145	8.58	5,949,430	10.70
ຂະແໜງຫັດຖະກຳ	11,624	0.02	138,520	0.25
ຂະແໜງອື່ນໆ	1,207,667	1.94	651,123	1.17
	62,162,622	**100**	**55,580,276**	**100**

(*) ການແຍກປະເພດເງິນກູ້ແມ່ນໄດ້ສະແດງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

16. ເງິນແຮສຳລັບການເສື່ອມມູນຄ່າ

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ຢືມໃຫ້ລູກຄ້າ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງລຸ່ມນີ້:

	ຄ່າເສື່ອມມູນຄ່າເງິນກູ້ຢືມ ໃຫ້ລູກຄ້າ ລ້ານກີບ
ຍອດເຫຼືອ ນະວັນທີ 1 ມັງກອນ 2024	**1,687,920**
ສ່ວນປ່ຽນແປງສຸດທິພາຍໃນປີ	3,553,571
ສະສາງເງິນກູ້ບໍ່ເກີດດອກອອກຜົນ	(3,037,234)
ສ່ວນຕ່າງຈາກອັດຕາແລກປ່ຽນ	16,565
ຍອດເຫຼືອນະວັນທີ 31 ທັນວາ 2024	**2,220,822**

ລາຍລະອຽດເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ຢືມໃຫ້ລູກຄ້າ ນະວັນທີ 31 ທັນວາ 2024 ແລະ ວັນທີ 31 ທັນວາ 2023 ມີດັ່ງລຸ່ມນີ້:

	31 ທັນວາ 2024		*31 ທັນວາ 2023*	
	ຍອດເຫຼືອທ້າຍ (*) ລ້ານກີບ	*ຄ່າເສື່ອມ ລ້ານກີບ*	*ຍອດເຫຼືອທ້າຍ (*) ລ້ານກີບ*	*ຄ່າເສື່ອມ ລ້ານກີບ*
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	23,896,043	1,837,770	6,484,088	1,388,525
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	38,266,579	383,052	49,096,188	299,395
	62,162,622	**2,220,822**	**55,580,276**	**1,687,920**

(*) ການແຍກປະເພດເງິນກູ້ແມ່ນໄດ້ສະແດງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

17. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ຮຸ້ນຈົດທະບຽນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ	80,535	87,822
	80,535	**87,822**

(*) ນະວັນທີ 31 ທັນວາ 2024, ຮຸ້ນດັ່ງກ່າວໄດ້ຫັກເງິນແຮ ຄ່າເສື່ອມມູນຄ່າຈຳນວນ 100,669 ລ້ານກີບ ເຊິ່ງຕ່ຳກວ່າມູນຄ່າ ຕົ້ນທຶນ 181,204 ລ້ານກີບ

18. ການລົງທຶນປະເພດຖືໄວ້ຈົນເຖິງມື້ຄົບກຳນົດ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ຕົ້ນທຶນຄ່າເສື່ອມມູນຄ່າຈາກພັນທະບັດ ອອກໂດຍກະຊວງ ການເງິນ (*)	9,849,870	6,611,379
ຕົ້ນທຶນຄ່າເສື່ອມມູນຄ່າຈາກພັນທະບັດຄັງເງິນ ອອກໂດຍ ກະຊວງການເງິນ	5,853,010	4,258,674
ຕົ້ນທຶນຄ່າເສື່ອມມູນຄ່າຈາກພັນທະບັດ ອອກໂດຍທະນາຄານ ແຫ່ງ ສປປ ລາວ	9,298,819	4,228,042
	25,001,699	**15,098,095**

(*) ໃນນີ້ລວມມີພັນທະບັດທີ່ອອກໂດຍກະຊວງການເງິນມູນຄ່າ 9,900,000 ໂດລາສະຫະລັດ ເຊິ່ງໄດ້ມີການຕໍ່ອາຍຸ ພັນທະບັດອອກໄປຕື່ມອີກ 1 ປີ ອີງຕາມໜັງສືທາງການຈາກກະຊວງການເງິນ ເລກທີ 2243 ລົງວັນທີ 30 ທັນວາ 2024.

18. ການລົງທຶນປະເພດຖືໄວ້ຈົນເຖິງມື້ຄົບກຳນົດ (ຕໍ່)

18.1 ພັນທະບັດຄັງເງິນອອກໂດຍກະຊວງການເງິນ

ພັນທະບັດຄັງເງິນອອກໂດຍກະຊວງການເງິນ ນະວັນທີ 31 ທັນວາ 2024 ລວມມີ:

ໄລຍະເວລາ	*ມື້ເລີ່ມຕົ້ນ*	*ມື້ຄົບກຳນົດ*	*ສະກຸນເງິນ*	*ມູນຄ່າໜ້າບັດ ລ້ານກີບ*	*ຕົ້ນທຶນຄ່າເສື່ອມມູນຄ່າ ລ້ານກີບ*	*ອັດຕາດອກເບ້ຍ % ຕໍ່ປີ*
1 ປີ	28 ມີນາ 2024	28 ມີນາ 2025	ກີບ	95,748	99,949	5.80
1 ປີ	28 ມີນາ 2024	28 ມີນາ 2025	ໂດລາ	1,929,831	2,002,895	5.00
1 ປີ	19 ກັນຍາ 2024	19 ກັນຍາ 2025	ບາດ	1,869,000	1,894,911	5.00
1 ປີ	03 ກໍລະກົດ 2024	03 ກໍລະກົດ 2025	ບາດ	1,246,000	1,276,514	5.00
1 ປີ	24 ທັນວາ 2024	24 ທັນວາ 2025	ຢວນ	578,200	578,741	5.00
				5,718,779	**5,853,010**	

18. ການລົງທຶນປະເພດຖືໄວ້ຈົນເຖິງມື້ຄົບກຳນົດ (ຕໍ່)

18.2 *ພັນທະບັດທີ່ອອກໂດຍກະຊວງການເງິນ*

- ລາຍລະອຽດຂອງພັນທະບັດອື່ນໆອີງຕາມມື້ຄົບກຳນົດຕາມສັນຍາມີດັ່ງນີ້:

	ມູນຄ່າໜ້າບັດ ລ້ານກີບ	*ຕົ້ນທຶນຄ່າເສື່ອມມູນຄ່າ ລ້ານກີບ*
ພາຍໃນ 1 ປີ	3,912,443	3,980,034
1 ຫາ 5 ປີ	10,354,164	10,349,952
ຫຼາຍກວ່າ 5 ປີ	4,857,423	4,818,703
	19,124,030	**19,148,689**

- ລາຍລະອຽດຂອງບັນດາພັນທະບັດອື່ນໆໂດຍອັດຕາດອກເບ້ຍມີດັ່ງລຸ່ມນີ້:

	2024 % ຕໍ່ປີ	*2023 % ຕໍ່ປີ*
ພາຍໃນ 1 ປີ	4.50 - 11.54	0.10 - 5.80
1 ຫາ 5 ປີ	0.10 - 6.90	0.10 - 6.90
ຫຼາຍກວ່າ 5 ປີ	4.20 - 7.50	5.50 - 6.00

19. ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ

ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ - ຕາມວິທີທຶນສ່ວນໄດ້ສ່ວນເສຍ

ຫົວໜ່ວຍ: ລ້ານກີບ

	ບໍລິສັດຫຼັກຊັບ ທຄຕລ-ภทห ຈຳກັດ	*ທະນາຄານຮ່ວມ ທຸລະກິດ ลาอ-ทอฐด*	*ທະນາຄານລາວ-ฝรั่ง ຈຳກັດ*	*ທະນາຄານ ลาอ-จีน ຈຳກັດ*	*ບໍລິສັດປະກັນໄພ ลาอ-ทอฐด*	*ບໍລິສັດລາວເຊ່ຍນໍ ເພເມັ້ນ ເມັ້ດເອີກ ຈຳກັດ*	ບໍລິສັດ ຕະຫຼາດ ແລກປ່ຽນເງິນຕາ ຕ່າງປະເທດລາວ ຈຳກັດ	***ลอม***
ວັນທີ 1 ມັງກອນ 2024	**79,765**	**268,772**	**175,985**	**196,536**	**16,452**	**9,713**	**-**	**747,223**
ການລົງທຶນເພີ່ມເຕີມ	-	-	-	6,265	1,332	-	2,000	9,597
ລາຍຮັບສຸດທິ ຈາກແບ່ງສ່ວນກຳໄລຕາມວິທີ ທຶນສ່ວນໄດ້ສ່ວນເສຍ	5,891	12,715	16,078	11,797	5,036	5,814	87	57,418
ຫັກ:								
ຮັບເງິນປັນຜົນສຸດທິ ພາຍໃນປີ	(4,140)	-	-	(11,268)	(4,842)	-	-	(20,250)
ນะวันที่ 31 ทันวา 2024	**81,516**	**281,487**	**192,063**	**203,330**	**17,978**	**15,527**	**2,087**	**793,988**

19. ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ (ຕໍ່)

ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ - ຕາມເປີເຊັນຄວາມເປັນເຈົ້າຂອງ ດັ່ງລຸ່ມນີ້:

	31 ທັນວາ 2024		*31 ທັນວາ 2023*	
	ມູນຄ່າຕາມບັນຊີ ລ້ານກີບ	*ທະນາຄານຖືຮຸ້ນ %*	*ມູນຄ່າຕາມບັນຊີ ລ້ານກີບ*	*ທະນາຄານຖືຮຸ້ນ %*
ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ				
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70,000	70%	70,000	70%
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	197,839	25%	197,839	25%
ທະນາຄານລາວ-ຝຣັ່ງ ຈຳກັດ	150,000	30%	150,000	30%
ບໍລິສັດປະກັນໄພ ລາວ-ຫວຽດ	10,500	35%	9,168	35%
ທະນາຄານ ລາວ-ຈີນ ຈຳກັດ	157,723	31.35%	151,458	39.87%
ບໍລິສັດລາວເມເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ	6,800	20%	6,800	20%
ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ	2,000	10%	-	-
	594,862		**585,265**	

19. ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ (ຕໍ່)

- ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ເປັນທຸລະກິດໜຶ່ງທີ່ຈົດທະບຽນຢູ່ ສປປ ລາວ ແລະ ດຳເນີນທຸລະກິດ ພາຍໃຕ້ໃບທະບຽນວິສະຫະກິດເລກທີ 180-10 ລົງວັນທີ 14 ທັນວາ 2010 ອອກໂດຍກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແຫ່ງ ສປປ ລາວ, ວຽກງານຕົ້ນຕໍຂອງບໍລິສັດດັ່ງກ່າວ ແມ່ນສະໜອງການບໍລິການທາງດ້ານນາຍໜ້າ, ການຄ້ຳກຳມະສິດ, ໃຫ້ຄຳປຶກສາດ້ານການເງິນ ແລະ ການລົງທຶນໃນຫຼັກຊັບ, ບໍລິການທາງດ້ານການຄຸ້ມຄອງ, ຄ້ຳປະກັນ ການອອກຮຸ້ນ ແລະ ບໍລິການອື່ນໆ.

- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານ ໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມ ທຶນກັບທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນ ທຸລະກິດຢູ່ ສສ ຫວຽດນາມ. LVB ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, LVB ປະກອບທຶນເພີ່ມຈຳນວນ 791,357,560,000 ກີບ. ອັດຕາສ່ວນຮຸ້ນສ່ວນທີ່ທະນາຄານຖືຄອງເພື່ອຫຼັງການປະກອບທຶນເພີ່ມແມ່ນ 25% ອີງຕາມ ໃບທະບຽນວິສາຫະກິດ ເລກທີ 004-15/KH-DDT4 ອອກໂດຍກະຊວງແຜນການ ແລະ ການລົງທຶນ ລົງວັນທີ 24 ສິງຫາ 2015, ທຽບເທົ່າ 197,839,390,000 ກີບ.

- ທະນາຄານລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍ ໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. ການຮ່ວມທຶນໄດ້ຮັບໃບທະບຽນທະນາຄານຊົ່ວຄາວ ໃນວັນທີ 01 ຕຸລາ 2009 ແລະ ໃບທະບຽນ ຖາວອນ ວັນທີ 16 ກໍລະກົດ 2010 ໂດຍທະນາຄານແຫ່ງ ສປປ ລາວ. ນະວັນທີ 31 ທັນວາ 2024, ທຶນທີ່ປະກອບທັງ ໝົດຂອງທະນາຄານເຂົ້າໃນການລົງທຶນແມ່ນ 150,000 ລ້ານກີບ (2023: 150,000 ລ້ານກີບ).

16. ການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ (ຕໍ່)

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການຄຸ້ມຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຮຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ທຶນຈົດທະບຽນຂອງບໍລິສັດ ແມ່ນ 3,000,000 ໂດລາ ແລະ ໄດ້ຮັບປະກອບທຶນໂດຍຂາຮຸ້ນຢ່າງເຕັມສ່ວນ ໃນວັນທີ 17 ກໍລະກົດ 2008. ໃນປີ 2013, ທະນາຄານໄດ້ປະກອບທຶນເພີ່ມເຕີມ 180,000 ໂດລາ ໃນວັນທີ 02 ກັນຍາ 2013. ນະວັນທີ 31 ທັນວາ 2024, ທຶນຈົນທະບຽນປະກອບແລ້ວຂອງທະນາຄານໃນບໍລິສັດດັ່ງກ່າວລວມມີ 10,500 ລ້ານກີບ.

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບທະບຽນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນປີ 2024, LCNB ເພີ່ມທຶນຈາກ 1,229 ຮຸ້ນເປັນ 1,563 ຮຸ້ນ ແຕ່ BCEL ໄດ້ຍິນຍອມທີ່ຈະຮັກສາອັດຕາສ່ວນຄວາມເປັນເຈົ້າຂອງເດີມ 490 ຮຸ້ນ ແລະ ບໍ່ມີການຊຳລະເພີ່ມເຕີມສຳລັບການເພີ່ມທຶນດັ່ງກ່າວ ເຮັດໃຫ້ອັດຕາສ່ວນຮ້ອຍການຄວາມເປັນເຈົ້າຂອງຂອງ BCEL ຫຼຸດລົງຈາກ 39.87% ເປັນ 31.35%. ນະວັນທີ 31 ທັນວາ 2024, ມູນຄ່າການລົງທຶນທັງໝົດແມ່ນ 157,723 ລ້ານກີບ.

- ບໍລິສັດລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ດຳເນີນທຸລະກິດຢູ່ ສປປ ລາວພາຍໃຕ້ໃບທະບຽນວິສາຫະກິດເລກທີ 0349 ອອກໂດຍກົມທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າຂອງ ສປປ ລາວ ລົງວັນທີ 12 ມີນາ 2019 ແລະ ດຳເນີນກ່ຽວກັບການບໍລິການດ້ານການເງິນ. ເປັນການຮ່ວມທຶນລະຫວ່າງທະນາຄານ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມພັດທະນາ, ທະນາຄານລາວ-ຫວຽດ. ທຶນຈົດທະບຽນລວມມີ 34,000 ລ້ານກີບ. ນະວັນທີ 31 ທັນວາ 2024, ທຶນຈົນທະບຽນປະກອບແລ້ວຂອງທະນາຄານໃນບໍລິສັດດັ່ງກ່າວລວມມີ 6,800 ລ້ານກີບ (2023: 6,800 ລ້ານກີບ).

- ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ) (LFX) ໄດ້ສ້າງຕັ້ງຢູ່ໃນ ສປປ ລາວ ພາຍໃຕ້ໃບທະບຽນວິສາຫະກິດ ສະບັບເລກທີ 4016 ທີ່ອອກໂດຍກົມທະບຽນວິສາຫະກິດ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 22 ຕຸລາ 2024 ແລະ ດຳເນີນທຸລະກິດດ້ານການບໍລິການດ້ານການເງິນ. ເປັນສະມາຄົມລະຫວ່າງທະນາຄານແຫ່ງ ສປປ ລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານ ເອັສທີ ຈຳກັດ, ທະນາຄານ ອຸດສາຫະກຳການຄ້າຈີນ ຈຳກັດ, ທະນາຄານຮ່ວມທຸລະກິດລາວຫວຽດ, ທະນາຄານພັດທະນາລາວ, ທະນາຄານອິນດູຈີນ, ທະນາຄານ ລາວ-ຝຣັ່ງ ຈຳກັດ, ທະນາຄານ ພັດທະນາລາວ ຈຳກັດ, ທະນາຄານ ພີງ ສະຫວັນ, ທະນາຄານ ມາຮູຮານ ເຈແປນ ລາວ. ທຶນຈົດທະບຽນ ຕາມກົດໝາຍແມ່ນ 20,000 ລ້ານກີບ. ນະວັນທີ 31 ທັນວາ 2024, ທຶນຈົນທະບຽນປະກອບແລ້ວຂອງທະນາຄານໃນບໍລິສັດນີ້ແມ່ນ 2,000 ລ້ານກີບ.

20. ຊັບສິນບັດ ແລະ ອຸປະກອນ ແລະ ຊັບສິນບັດຖືກທີ່ມີຕົວຕົນ

20.1 ຊັບສິນບັດພວມກໍ່ສ້າງ

ຊັບສິນບັດພວມຊື້ ພວມກໍ່ສ້າງ ແລະ ຊັບສິນບັດຖືກທີ່ພວມເຄື່ອນຍ້າຍ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີລາຍ ລະອຽດດັ່ງນີ້:

	ລວມ ລ້ານກີບ
ນະວັນທີ 01 ມັງກອນ 2024	171,204
ຊື້ເຂົ້າໃໝ່	208,532
ໂອນໄປເຂົ້າຊັບສິນຖືກທີ່	(152,694)
ນະວັນທີ 31 ທັນວາ 2024	**227,042**

20.2 ຊັບສິນບັດຖືກທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຖືກທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງນີ້:

	ອາຄານ ແລະ ການປັບປຸງ ລ້ານກີບ	*ອຸປະກອນ ຫ້ອງການ ລ້ານກີບ*	*ເຟີນິເຈີ ແລະ ສິ່ງຕິດຕັ້ງ ລ້ານກີບ*	*ພາຫະນະ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:					
ນະວັນທີ 01 ມັງກອນ 2024	556,973	303,787	36,680	25,365	922,805
ຊື້ເຂົ້າໃໝ່	2,643	19,675	1,908	3,356	27,582
ໂອນຈາກຊັບສິນພວມຊື້-ພວມ ກໍ່ສ້າງ ແລະ ຊັບສິນບັດຖືກທີ່					
ລໍຖ້າໂອນ	17,621	108,038	-	18,084	143,743
ສະສາງອອກ	(794)	(641)	(285)	-	(1,720)
ນະວັນທີ 31 ທັນວາ 2024	576,443	430,859	38,303	46,805	1,092,410
ຄ່າຫຼຸ້ຍຫ້ຽນສະສົມ					
ນະວັນທີ 01 ມັງກອນ 2024	264,090	213,940	28,440	19,435	525,905
ຫັກຄ່າຫຼຸ້ຍຫ້ຽນໃນໄລຍະ	31,693	51,932	3,354	3,977	90,956
ສະສາງອອກ	(794)	(607)	(285)	-	(1,686)
ນະວັນ 31 ທັນວາ 2024	294,989	265,265	31,509	23,412	615,175
ມູນຄ່າສຸດທິຕາມບັນຊີ					
ນະວັນທີ 01 ມັງກອນ 2024	292,883	89,847	8,240	5,930	396,900
ນະວັນທີ 31 ທັນວາ 2024	281,454	165,594	6,794	23,393	477,235

21. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດບໍ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

	ສິດນຳໃຊ້ທີ່ດິນ ລ້ານກີບ	*ຊອບແວ ລ້ານກີບ*	*ລວມ ລ້ານກີບ*
ຕົ້ນທຶນ:			
ນະວັນທີ 01 ມັງກອນ 2024	289,324	68,002	357,326
ໂອນຈາກຊັບສິນພວມຊື້-ພວມກໍ່ສ້າງ ແລະ ຊັບສິນບັດຄົງທີ່ລໍຖ້າໂອນ	-	8,951	8,951
ຈັດປະເພດຄືນໃໝ່	(850)	-	(850)
ນະວັນທີ 31 ທັນວາ 2024	288,474	76,953	365,427
ຄ່າຫຼ້ຍຫ້ຽນສະສົມ:			
ນະວັນທີ 01 ມັງກອນ 2024	-	35,592	35,592
ຫັກຄ່າເສື່ອມພາຍໃນໄລຍະ		13,322	13,322
ນະວັນທີ 31 ທັນວາ 2024	-	48,914	48,914
ມູນຄ່າສຸດທິຕາມບັນຊີ			
ນະວັນທີ 01 ມັງກອນ 2024	289,324	32,410	321,734
ນະວັນທີ 31 ທັນວາ 2024	288,474	28,039	316,513

22. ສິດນຳໃຊ້ຊັບສິນ

ການເຄື່ອນໄຫວຂອງສິດນຳໃຊ້ຊັບສິນ ພາຍໃນປີມີລາຍລະອຽດດັ່ງນີ້:

	ລວມ ລ້ານກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2024	87,995
ຮັບຮູ້ເຂົ້າໃໝ່	32,730
ສະສາງອອກ	(2,780)
ນະວັນທີ 31 ທັນວາ 2024	117,945
ຄ່າຫຼ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2024	34,495
ຫັກຄ່າຫຼ້ຍຫ້ຽນໃນປີ	13,881
ສະສາງອອກ	(2,497)
ນະວັນທີ 31 ທັນວາ 2024	45,879
ມູນຄ່າສຸດທິຕາມບັນຊີ	
ນະວັນທີ 1 ມັງກອນ 2024	53,500
ນະວັນທີ 31 ທັນວາ 2024	72,066

22. ສິດນຳໃຊ້ຊັບສິນ (ຕໍ່)

ໜີ້ສິນສັນຍາເຊົ່າ

ສະແດງຂ້າງລຸ່ມນີ້ແມ່ນມູນຄ່າຕາມບັນຊີຂອງໜີ້ສິນຕາມສັນຍາເຊົ່າ ແລະ ການເຄື່ອນໄຫວພາຍໃນປີ:

	31 ທັນວາ 2024 *ລ້ານກີບ*
ນະວັນທີ 1 ມັງກອນ 2024	**29,285**
ຮັບຮູ້ເຂົ້າໃໝ່	30,758
ດອກເບ້ຍຄ້າງຈ່າຍ	1,698
ຊຳລະ	(24,894)
ສ່ວນຕ່າງອັດຕາແລກປ່ຽນ	10,212
ນະວັນທີ 31 ທັນວາ 2024	**47,059**

23. ຊັບສິນອື່ນໆ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ຊັບສິນລໍຖ້າຂາຍ (i)	1,270,177	1,459,456
ຊັບສິນອື່ນໆລໍຖ້າໂອນ ຫຼື ຊຳລະ (ii)	309,265	207,958
ເງິນລ່ວງໜ້າສຳລັບການຕື່ມມູນຄ່າໂທ (iii)	148,386	106,637
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	35,192	32,000
ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ	27,949	21,130
ເງິນລ່ວງໜ້າໃຫ້ຜູ້ສະໜອງ	12,736	8,749
ອື່ນໆ	19,281	77,684
	1,822,986	**1,913,614**

(i) ຊັບລໍຖ້າຂາຍ ສະແດງເຖິງທີ່ດິນທີ່ທະນາຄານໄດ້ຮັບຈາກການຊຳລະໜີ້ຂອງລູກໜີ້ເງິນກູ້.

(ii) ຊັບສິນອື່ນໆລໍຖ້າໂອນ ຫຼື ຊຳລະສະແດງເຖິງທຸລະກຳເຊັ່ນ: ການໂອນລະຫວ່າງທະນາຄານ, ເຮັດທຸລະກຳບັດຜ່ານສູນ ບັດ, ຫຼື ກິດຈະກຳການເງິນອື່ນໆ. ທຸລະກຳດັ່ງກ່າວໄດ້ຖືກດຳເນີນການ ແຕ່ຍັງບໍ່ທັນສຳເລັດການຊຳລະສະສາງ ແລະ ສົມ ທຽບຍອດກັງກັນລະຫວ່າງສອງຝ່າຍ, ລໍຖ້າສະສາງກັບພາກສ່ວນກ່ຽວຂ້ອງ.

(iii) ເງິນລ່ວງໜ້າສຳລັບການເຕີມມູນຄ່າໂທສະແດງເຖິງການຈ່າຍເງິນລ່ວງໜ້າ ສຳລັບການຊື້ມູນຄ່າໂທເຄືອຂ່າຍໂທລະຄົມສຳ ລັບຈຸດປະສົງໃຫ້ບໍລິການເຕີມມູນຄ່າໂທໃຫ້ແກ່ລູກຄ້າທະນາຄານ.

24. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ເງິນຝາກກະແສລາຍວັນ	**5,132,985**	**8,139,312**
- ສະກຸນເງິນກີບ	1,673,971	2,554,055
- ສະກຸນເງິນຕາຕ່າງປະເທດ	3,459,014	5,585,256
ເງິນຝາກປະຢັດ	**264,995**	**400,856**
- ສະກຸນເງິນກີບ	133,878	154,788
- ສະກຸນເງິນຕາຕ່າງປະເທດ	131,117	246,068
ເງິນຝາກມີກຳນົດ	**672,419**	**882,819**
- ສະກຸນເງິນກີບ	202,229	202,170
- ສະກຸນເງິນຕາຕ່າງປະເທດ	470,190	680,649
ອື່ນໆ	**127,729**	**40,130**
- ສະກຸນເງິນກີບ	85,376	40,130
- ສະກຸນເງິນຕາຕ່າງປະເທດ	42,353	-
	6,198,128	**9,463,117**

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານອື່ນ ແລະ ສະຖາບັນການເງິນໃນປີ ມີດັ່ງລຸ່ມນີ້:

	2024 *% ຕໍ່ປີ*	*2023* *% ຕໍ່ປີ*
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດ	0.00 - 1.25	ບໍ່ມີດອກເບ້ຍ
ເງິກຝາກມີກຳນົດ	1.15 - 6.00	0.56 – 6.65

25. ເງິນຝາກຈາກລູກຄ້າ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ເງິນຝາກກະແສລາຍວັນ	**16,286,689**	**16,773,450**
ເງິນຝາກກະແສລາຍວັນເປັນເງິນກີບ	5,319,700	4,990,191
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	10,966,989	11,783,259
ເງິນຝາກປະຢັດ	**74,275,298**	**59,833,533**
ເງິນຝາກປະຢັດເປັນເງິນກີບ	27,378,425	23,185,552
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	46,896,873	36,647,981
ເງິນຝາກກຳນົດ	**36,283,976**	**32,279,286**
ເງິນຝາກມີກຳນົດເປັນເງິນກີບ	10,820,412	9,323,976
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	25,463,564	22,955,310
ເງິນຝາກມັດຈຳ	**219,425**	**210,254**
ເງິນຝາກມັດຈຳເປັນເງິນກີບ	45,068	32,218
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	174,357	178,036
ໜີ້ຕ້ອງສົ່ງອື່ນໆ	**523,889**	**375,194**
	127,589,277	**109,471,717**

ອັດຕາດອກເບ້ຍສຳລັບເງິນຝາກຈາກລູກຄ້າ ພາຍໃນປີມີດັ່ງລຸ່ມນີ້:

	2024 *% ຕໍ່ປີ*	*2023* *% ຕໍ່ປີ*
ເງິນຝາກກະແສລາຍວັນ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນສະກຸນເງິນກີບ	1.25 - 1.60	1.25 - 1.89
ເງິກຝາກມີກຳນົດເປັນສະກຸນເງິນໂດລາ	0.60 - 1.00	0.90 - 1.15
ເງິກຝາກມີກຳນົດເປັນສະກຸນເງິນບາດ	0.45 - 0.55	0.45 - 0.70
ເງິນຝາກມັດຈຳ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກປະຢັດເປັນສະກຸນເງິນກີບ	3.16 - 10.05	3.16 - 12.15
ເງິກຝາກມີກຳນົດເປັນສະກຸນເງິນໂດລາ	1.35 - 7.00	1.65 - 7.75
ເງິກຝາກມີກຳນົດເປັນສະກຸນເງິນບາດ	1.10 - 7.55	1.10 - 7.75

26. ເງິນກູ້ຢືມຈາກ ທະນາຄານອື່ນ

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	4,329,468	4,316,134
ເງິນກູ້ຢືມຈາກສະຖາບັນການເງິນອື່ນ	126,771	62,260
	4,456,239	**4,378,394**

26. ເງິນກູ້ຢືມຈາກ ທະນາຄານອື່ນ (ຕໍ່)

ເງິນກູ້ຢືມຈາກ ທຫລ ນະວັນທີ 31 ທັນວາ 2024 ລວມມີ:

- ເງິນກູ້ໄລຍະຍາວທີ່ມີຍອດເຫຼືອຈຳນວນ 84,854,000 ໂດລາ (ເງິນກູ້ເບື້ອງຕົ້ນຈຳນວນ 100,000,000 ໂດລາ ໃນ ອັດຕາດອກເບ້ຍ 5.50% ຕໍ່ປີ). ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບ ສະໜູນຈາກລັດຖະບານ. ສັນຍາເງິນກູ້ ນັບຕັ້ງແຕ່ 27 ສິງຫາ 2015 ຫາ 27 ສິງຫາ 2025. . ດອກເບ້ຍແມ່ນຊຳລະ 4 ຄັ້ງຕໍ່ປີ.

- ເງິນກູ້ໄລຍະຍາວຈາກທີ່ມີຍອດເຫຼືອຈຳນວນ 97,900,000 ໂດລາ (ເງິນກູ້ເບື້ອງຕົ້ນຈຳນວນ 100,000,000 ໂດລາ ໃນ ອັດຕາດອກເບ້ຍ 5.30% ຕໍ່ປີ). ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບ ສະໜູນຈາກລັດຖະບານ. ສັນຍາເງິນກູ້ເລີ່ມຈາກ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຊຳລະ 4 ຄັ້ງຕໍ່ປີ.

- ເງິນກູ້ໄລຍະຍາວ 2,835,000,000 ກີບ (ວົງເງິນກູ້ 4,050,000,000 ກີບ ໃນອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຕາມລະບຽບຂອງທະນາຄານແຫ່ງ ສປປ ລາວ ເລກທີ 318/ທຫຫລ, ລົງວັນທີ 19 ພຶດສະພາ 2020. ການຊຳລະຕົ້ນທຶນ ເງິນກູ້ແມ່ນ 3 ຄັ້ງເຊັ່ນ: ຄັ້ງທຳອິດໃນປີ 2024 ສຳລັບ 30% ຂອງຕົ້ນທຶນເງິນກູ້, ຄັ້ງທີສອງຈະຖືກ 30% ຂອງຕົ້ນທຶນ ເງິນກູ້ໃນປີ 2025, ແລະ ຄັ້ງທີສາມຊຳລະ 40% ຂອງຕົ້ນທຶນເງິນກູ້ໃນປີ 2026. ດອກເບ້ຍແມ່ນຈ່າຍສອງຄັ້ງຕໍ່ປີ (ໃນ ເດືອນ ມິຖຸນາ ແລະ ເດືອນ ທັນວາ). ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 18 ສິງຫາ 2020 ຫາ 18 ສິງຫາ 2026.

- ເງິນກູ້ໄລຍະຍາວ 2,881,659,900 ກີບ (ວົງເງິນກູ້ 4,200,000,000 ກີບ ໃນອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ນ້ອຍ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຕາມ ລະບຽບຂອງທະນາຄານແຫ່ງ ສປປ ລາວ ເລກທີ 318/ທຫຫລ, ລົງວັນທີ 19 ພຶດສະພາ 2020. ການຊຳລະຕົ້ນທຶນເງິນ ກູ້ແມ່ນ 3 ຄັ້ງເຊັ່ນ: ຄັ້ງທຳອິດໃນປີ 2024 ສຳລັບ 30% ຂອງຕົ້ນທຶນເງິນກູ້, ຄັ້ງທີສອງຈະຖືກ 30% ຂອງຕົ້ນທຶນເງິນກູ້ ໃນປີ 2025, ແລະ ຄັ້ງທີສາມຊຳລະ 40% ຂອງຕົ້ນທຶນເງິນກູ້ໃນປີ 2026. ດອກເບ້ຍແມ່ນຈ່າຍສອງຄັ້ງຕໍ່ປີ (ໃນເດືອນ ມິຖຸນາ ແລະ ເດືອນ ທັນວາ). ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 3 ພະຈິກ 2020 ຫາ 3 ພະຈິກ 2026.

- ເງິນກູ້ໄລຍະຍາວ 2,100,000,000 ກີບ (ວົງເງິນກູ້ 3,080,000,000 ກີບ ໃນອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອສະ ໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຕາມ ລະບຽບຂອງທະນາຄານແຫ່ງ ສປປ ລາວ ເລກທີ 318/ທຫຫລ, ລົງວັນທີ 19 ພຶດສະພາ 2020. ການຊຳລະຕົ້ນທຶນເງິນ ກູ້ແມ່ນ 3 ຄັ້ງເຊັ່ນ: ຄັ້ງທຳອິດໃນປີ 2024 ສຳລັບ 30% ຂອງຕົ້ນທຶນເງິນກູ້, ຄັ້ງທີສອງຈະຖືກ 30% ຂອງຕົ້ນທຶນເງິນກູ້ ໃນປີ 2025, ແລະ ຄັ້ງທີສາມຊຳລະ 40% ຂອງຕົ້ນທຶນເງິນກູ້ໃນປີ 2026. ດອກເບ້ຍແມ່ນຈ່າຍສອງຄັ້ງຕໍ່ປີ (ໃນເດືອນ ມິຖຸນາ ແລະ ເດືອນ ທັນວາ). ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 22 ທັນວາ 2020 ຫາ 22 ທັນວາ 2026.

- ເງິນກູ້ໄລຍະຍາວ 10,050,000,000 ກີບ (ວົງເງິນກູ້ 15,050,000,000 ກີບ ໃນອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອ ແນໃສ່ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄ ວິດ-19 ຕາມ ລະບຽບຂອງທະນາຄານແຫ່ງ ສປປ ລາວ ເລກທີ 318/ທຫຫລ, ລົງວັນທີ 19 ພຶດສະພາ 2020. ການຊຳ ລະຕົ້ນທຶນເງິນກູ້ແມ່ນ 3 ຄັ້ງເຊັ່ນ: ຄັ້ງທຳອິດໃນປີ 2025 ສຳລັບ 30% ຂອງຕົ້ນທຶນເງິນກູ້, ຄັ້ງທີສອງຈະຖືກ 30% ຂອງຕົ້ນທຶນເງິນກູ້ໃນປີ 2026, ແລະ ຄັ້ງທີສາມຊຳລະ 40% ຂອງຕົ້ນທຶນເງິນກູ້ໃນປີ 2027. ດອກເບ້ຍແມ່ນຈ່າຍສອງ ຄັ້ງຕໍ່ປີ ປີ (ໃນເດືອນ ມິຖຸນາ ແລະ ເດືອນ ທັນວາ). ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 15 ມີນາ 2021 ຫາ 15 ມີນາ 2027.

26. ເງິນກູ້ຢືມຈາກ ທະນາຄານອື່ນ (ຕໍ່)

- ເງິນກູ້ໄລຍະຍາວ 110,000,000,000 ກີບ (ວົງເງິນກູ້ 110,000,000,000 ກີບ ອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອ ແນໃສ່ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄ ວິດ-19 ຕາມ ລະບຽບຂອງທະນາຄານແຫ່ງ ສປປ ລາວ ເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020. ການຊຳ ຕົ້ນທຶນເງິນກູ້ແມ່ນ 2 ຄັ້ງເຊັ່ນ: ຊຳລະຄັ້ງທຳອິດໃນປີ 2026 ສຳລັບ 40% ຂອງຕົ້ນທຶນເງິນກູ້ ແລະ ຄັ້ງທີສອງຈະຖືກ ຊຳລະ 60% ຂອງຕົ້ນທຶນເງິນກູ້ໃນປີ 2027. ດອກເບ້ຍແມ່ນຈ່າຍສອງຄັ້ງຕໍ່ປີ (ໃນເດືອນ ມິຖຸນາ ແລະ ເດືອນ ທັນວາ). ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 3 ພະຈິກ 2022 ຫາ 3 ພະຈິກ 2027.

- ເງິນກູ້ໄລຍະຍາວ 120,000,000,000 ກີບ (ວົງເງິນສິນເຊື່ອ 120,000,000,000 ກີບ ອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອສະໜອງສິນເຊື່ອໃຫ້ບໍລິສັດເປັນທຶນລົງທຶນພັດທະນາເຕັກນິກການແພດ ແລະ ຢາ (ຊື້ອຸປະກອນການຜະລິດ, ວັດຖຸດິບ ເພື່ອພັດທະນາພະນັກງານ) ເຂົ້າໃນການຜະລິດ ແລະ ກໍ່ສ້າງ; . ການຊຳລະຕົ້ນທຶນເງິນກູ້ແມ່ນ 4 ຄັ້ງຕໍ່ປີ ໂດຍຊຳລະຄືນ ແມ່ນ 25% ຕໍ່ປີ ເຊິ່ງການຊຳລະຄືນຄັ້ງທຳອິດແມ່ນໃນປີ 2025. ດອກເບ້ຍແມ່ນຮັບການຊຳລະ 4 ຄັ້ງ ຕໍ່ປີ. ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 27 ທັນວາ 2021 ຫາ 27 ທັນວາ 2028.

- ເງິນກູ້ໄລຍະຍາວ 97,879,500,000 ກີບ (ວົງເງິນສິນເຊື່ອ 106,790,000,000 ກີບ ອັດຕາດອກເບ້ຍ 2.50%) ເພື່ອ ແນໃສ່ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ຕົ້ນທຶນກູ້ຢືມ ແມ່ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະກູ້ຢືມນີ້ແມ່ນເລີ່ມແຕ່ປີ 2024 ຫາ 2029.

ການກູ້ຢືມຈາກສະຖາບັນການເງິນອື່ນໆນະວັນທີ 31 ທັນວາ 2024 ລວມມີ:

- ເງິນກູ້ໄລຍະຍາວ 21,000,000,000 ກີບ (ວົງເງິນສິນເຊື່ອ 21,00,000,000 ກີບ ອັດຕາດອກເບ້ຍ 0%) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຄົນລາວເປັນເຈົ້າຂອງ 100% ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ຕົ້ນທຶນກູ້ຢືມ ແມ່ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນ ທີ 6 ທັນວາ 2022 ຫາ 6 ທັນວາ 2033.

- ເງິນກູ້ໄລຍະຍາວ 30,260,000,000 ກີບ (ວົງເງິນສິນເຊື່ອ 30,260,000,000 ກີບ ອັດຕາດອກເບ້ຍ 0%) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດ, ບໍລິສັດຂະໜາດນ້ອຍ ແລະ ກາງ ທີ່ຄົນລາວເປັນເຈົ້າຂອງ 100% ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ຕົ້ນທຶນກູ້ຢືມ ແມ່ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 13 ທັນວາ 2023 ຫາ 20 ຕຸລາ 2034.

- ເງິນກູ້ໄລຍະຍາວ 11,000,000,000 ກີບ (ວົງເງິນສິນເຊື່ອ 11,000,000,000 ກີບ ອັດຕາດອກເບ້ຍ 0%) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດ, ບໍລິສັດຂະໜາດນ້ອຍ ແລະ ກາງ ທີ່ຄົນລາວເປັນເຈົ້າຂອງ 100% ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ຕົ້ນທຶນກູ້ຢືມ ແມ່ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະກູ້ຢືມນີ້ແມ່ນເລີ່ມແຕ່ວັນທີ 8 ທັນວາ 2023 ຫາ 08 ທັນວາ 2034.

- ເງິນກູ້ໄລຍະຍາວ 64,380,000,000 ກີບ (ວົງເງິນສິນເຊື່ອ 64,380,000,000 ກີບ ອັດຕາດອກເບ້ຍ 0%) ເພື່ອແນໃສ່ ສະໜອງສິນເຊື່ອໃຫ້ແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຄົນລາວເປັນເຈົ້າຂອງ 100% ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ຕົ້ນທຶນກູ້ຢືມ ແມ່ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາກູ້ຢືມນີ້ແມ່ນເລີ່ມແຕ່ວັນ ທີ 29 ພະຈິກ 2024 ຫາ 29 ພະຈິກ 2035.

27. ອາກອນ

27.1 ອາກອນກຳໄລ

ສ່ວນປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	2024	*2023*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍອາກອນກຳໄລພາຍໃນປີ	154,509	40,272
ລາຍຮັບອາກອນກຳໄລລໍຖ້າສະສາງ	90,439	11,440
ລາຍຈ່າຍອາກອນທັງໝົດພາຍໃນປີ	**244,948**	**51,712**

27.2 ໜີ້ຕ້ອງສົ່ງອາກອນ

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*
ອາກອນກຳໄລຕ້ອງມອບ	135,100	27,454
ອາກອນມູນຄ່າເພີ່ມຕ້ອງມອບ	59,643	52,746
ອາກອນເງິນເດືອນ	604	261
	195,347	**80,461**

27. ອາກອນ (ຕໍ່)

27.3 ອາກອນກຳໄລໃນປີ

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນອາກອນທັງໝົດໃນໄລຍະ ອີງຕາມກົດໝາຍ ສ່ວຍສາອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ແຕ່ ຫຼື ຫຼັງຈາກວັນທີ 01 ມັງກອນ 2020.

	2024 ລ້ານກີບ	*2023 ລ້ານກີບ*
ກຳໄລສຸດທິ ກ່ອນອາກອນໃນປີອີງຕາມ IFRS	**694,511**	**283,120**
ດັດແກ້ສ່ວນຕ່າງຊື່ອຄາວລະຫວ່າງ IFRS ແລະ LAS	7,309	62,596
ກຳໄລສຸດທິ ກ່ອນອາກອນໃນປີອີງຕາມ LAS	**701,820**	**345,716**
ເພີ່ມຂຶ້ນ/(ຫຼຸດລົງ)		
- ລາຍຮັບທີ່ຍົກເວັ້ນຈາກອາກອນກຳໄລ	(17,356,755)	(15,098,701)
- ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ	17,427,480	14,940,290
ກຳໄລທາງອາກອນອີງຕາມ LAS	**772,545**	**187,305**
ອາກອນກຳໄລໃນອັດຕາ 20%	**154,509**	**37,461**
ການດັດແກ້ອື່ນໆ	-	2811
ອາກອນກຳໄລໃນປີ	**154,509**	**40,272**
ໜີ້ຕ້ອງສົ່ງອາກອນຕົ້ນປີ	27,454	21,907
ອາກອນຈ່າຍພາຍໃນປີ	(46,863)	(34,725)
ອາກອນຕ້ອງຈ່າຍໃນທ້າຍປີ	**135,100**	**27,454**

ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງ ຂອງເຈົ້າໜ້າທີ່ສ່ວຍສາອາກອນ.

27.4 ຊັບສິນ/(ໜີ້ສິນ) ອາກອນລໍຖ້າສະສາງ

	ໃນລາຍງານຖານະການເງິນ		*ໃນລາຍງານຜົນການດຳເນີນງານ*		*ໃນລາຍງານຜົນການດຳເນີນງານນອກການທຸລະກິດ*	
	2024 ລ້ານກີບ	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*	*2024 ລ້ານກີບ*	*2023 ລ້ານກີບ*
ຊັບສິນອາກອນລໍຖ້າສະສາງ	226,165	140,398	75,237	18,783	10,530	-
ໜີ້ສິນອາກອນລໍຖ້າສະສາງ	(203,260)	(37,585)	(165,676)	(30,223)	-	(2,267)
ຊັບສິນອາກອນລໍຖ້າສະສາງ, ສຸດທິ	**22,905**	**102,813**				
ອາກອນລໍຖ້າສະສາງສຸດທິທີ່ບັນທຶກໃນໃບລາຍງານຜົນການດຳເນີນງານ			**(90,439)**	**(11,440)**		
ອາກອນລໍຖ້າສະສາງສຸດທິທີ່ບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານນອກການທຸລະກິດ					**10,530**	**(2,267)**

27. ອາກອນ (ຕໍ່)

27.4 ຊັບສິນ(ໜີ້ສິນ) ອາກອນລໍຖ້າສະສາງ (ຕໍ່)

ລາຍລະອຽດຂອງຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງມີລຸ່ມນີ້:

	31 ທັນວາ 2024 *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*
ສ່ວນຕ່າງຊົ່ວຄາວສາມາດຫັກໄດ້	**1,130,823**	**701,991**
ໃນນັ້ນ:		
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຂອງເງິນຝາກມີກຳນົດ ກັບທະນາຄານອື່ນ	7,025	-
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີພາຍໃຕ້ LAS ແລະ ຕົ້ນທຶນຄ່າເສື່ອມມູນຄ່າພາຍໃຕ້ຂອບຂ່າຍການລາຍງານຈຸດປະສົງພິເສດ ຂອງການລົງທຶນ	-	10,795
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີພາຍໃຕ້ LAS ແລະ ຕົ້ນທຶນຄ່າເສື່ອມມູນຄ່າພາຍໃຕ້ຂອບຂ່າຍການລາຍງານຈຸດປະສົງພິເສດ ຂອງເງິນກູ້ຢືມໃຫ້ລູກຄ້າ	-	225,775
ສ່ວນຕ່າງລາຍຈ່າຍເງິນແຮຄ່າເສື່ອມມູນຄ່າລະຫວ່າງ LAS ແລະ ຂອບຂ່າຍການລາຍງານຈຸດປະສົງພິເສດ ຂອງການລົງທຶນ	1,082,481	452,640
ສ່ວນຕ່າງລາຍຈ່າຍພີນປະໂຫຍດຂອງພະນັກງານລະຫວ່າງ LAS ແລະ ຂອບຂ່າຍການລາຍງານຈຸດປະສົງພິເສດ	41,317	12,781
ຊັບສິນອາກອນລໍຖ້າສະສາງ (ໃນອັດຕາອາກອນ 20%)	**226,165**	**140,398**
ສ່ວນຕ່າງຊົ່ວຄາວສາມາດຫັກໄດ້	**(1,020,663)**	**(187,925)**
ໃນນັ້ນ:		
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີພາຍໃຕ້ LAS ແລະ ຕົ້ນທຶນຄ່າເສື່ອມມູນຄ່າພາຍໃຕ້ຂອບຂ່າຍການລາຍງານຈຸດປະສົງພິເສດ ຂອງການລົງທຶນ	(781,370)	-
ສ່ວນຕ່າງລາຍຈ່າຍພີນປະໂຫຍດຂອງພະນັກງານລະຫວ່າງ LAS ແລະ ຂອບຂ່າຍການລາຍງານຈຸດປະສົງພິເສດ	(5,285)	-
ສ່ວນຕ່າງຂອງການຮັບຮູ້ໃນເຄື່ອງມືທຶນລະຫວ່າງພື້ນຖານອາກອນ ແລະ ພື້ນຖານບັນຊີ	(199,126)	(187,925)
ສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີພາຍໃຕ້ LAS ແລະ ຕົ້ນທຶນຄ່າເສື່ອມມູນຄ່າພາຍໃຕ້ຂອບຂ່າຍການລາຍງານຈຸດປະສົງພິເສດ ຂອງເງິນກູ້ຢືມ	(30,522)	-
ໜີ້ສິນອາກອນລໍຖ້າສະສາງ (ໃນອັດຕາອາກອນ 20%)	**(203,260)**	**(37,585)**

28. ໜີ້ສິນອື່ນໆ

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*
ລາຍການລໍຖ້າຊຳລະສະສາງ (i)	277,305	250,712
ກຳນົດຜົນປະໂຫຍດຫຼັງອອກວຽກ (ii)	127,555	63,216
ໜີ້ຕ້ອງສົ່ງພະນັກງານ	83,311	34,357
ໜີ້ຕ້ອງສົ່ງຜູ້ສະໜອງ	63,246	34,354
ອື່ນໆ	27,733	50,482
	579,150	**433,121**

(i) ໜີ້ສິນອື່ນໆທີ່ລໍຖ້າການໂອນ ຫຼືການຊຳລະບັນຊີເປັນຕົວແທນຂອງທຸລະກຳເຊັ່ນ: ການໂອນເງິນລະຫວ່າງທະນາຄານ, ທຸລະກຳບັດທີ່ປະມວນຜົນຜ່ານສູນລະຫວ່າງບັດ, ຫຼືການເຄື່ອນໄຫວທາງການເງິນອື່ນໆ. ທຸລະກຳເຫຼົ່ານີ້ໄດ້ຖືກລິເລີ່ມ ແຕ່ຍັງບໍ່ທັນໄດ້ຕົກລົງຢ່າງເຕັມສ່ວນ ແລະ ຄົນດີລະຫວ່າງຫນ່ວຍງານທີ່ແຕກຕ່າງກັນ, ລໍຖ້າການແກ້ໄຂກັບຫນ່ວຍງານທີ່ກ່ຽວຂ້ອງ.

(ii) ສ່ວນແປງປຽນທາງດ້ານຜົນປະໂຫຍດພະນັກງານ ມີດັ່ງລຸ່ມນີ້:

	2024	*2023*
	ລ້ານກີບ	*ລ້ານກີບ*
ຍອດຍົກມາ	**63,216**	**75,310**
ຄ່າບໍລິການໃນອະດີດ	37,603	-
ຄ່າບໍລິການນະປະຈຸບັນ	7,226	3,146
ຕົ້ນທຶນດອກເບ້ຍ	6,820	4,080
ການປ່ຽນແປງທາງດ້ານສະຖິຕິທີ່ເກີດຂຶ້ນຈາກການປ່ຽນແປງ ສົມມຸດຕິຖານທາງການເງິນ	19,726	(11,334)
ຜົນປະໂຫຍດທີ່ຈ່າຍ	(7,036)	(7,986)
ຍອດເຫຼືອທ້າຍ	**127,555**	**63,216**

ຄ່າໃຊ້ຈ່າຍຜົນປະໂຫຍດສຸດທິ (ຮັບຮູ້ໃນກຳໄລ ຫຼື ຂາດທຶນ):

	2024	*2023*
	ລ້ານກີບ	*ລ້ານກີບ*
ຄ່າບໍລິການນະປະຈຸບັນ	7,226	3,146
ຕົ້ນທຶນດອກເບ້ຍ	6,820	4,080
	14,046	**7,226**

29. ທຶນຈົດທະບຽນ

ບໍ່ມີການປ່ຽນແປງໃນທຶນຈົດທະບຽນໃນປີທີ່ສິ້ນສຸດວັນທີ 31 ທັນວາ 2024.

30. ຖ້ຽສະສົມຕາມລະບຽບການ ແລະ ຖ້ຽສະສົມອື່ນໆ

	ຖ້ຽສະສົມ ຕາມລະບຽບການ ລ້ານກີບ	*ຖ້ຽຂະຫຍາຍທຸລະກິດ ລ້ານກີບ*	*ລວມ ລ້ານກີບ*
ວັນທີ 1 ມັງກອນ 2024	**238,214**	**673,487**	**911,701**
ແບ່ງສ່ວນເຂົ້າຖ້ຽສະສົມສຳລັບປີ 2023	30,544	212,583	243,127
ນະວັນທີ 31 ທັນວາ 2024	**268,758**	**886,070**	**1,154,828**

ພາຍໄຕ້ຂໍ້ກຳນົດຂອງກົດໝາຍທະນາຄານທຸລະກິດ, ສະບັບລົງວັນທີ 16 ມັງກອນ 2007 ໄດ້ກຳນົດໃຫ້ ທະນາຄານທຸລະກິດຕ່າງໆຕ້ອງໄດ້ແບ່ງສ່ວນຂອງກຳໄລຫຼັງອາກອນເພື່ອເຂົ້າຖ້ຽແຮຕ່າງໆດັ່ງນີ້:

- ຖ້ຽສະສົມຕາມລະບຽບການ
- ຖ້ຽຂະຫຍາຍທຸລະກິດ ແລະ ຖ້ຽອື່ນໆ

ອີງຕາມມາດຕາ 156 ຂອງກົດໝາຍວິສະຫະກິດ ລົງວັນທີ 26 ທັນວາ 2013, ທະນາຄານແມ່ນໄດ້ຖືກຮຽກຮ້ອງໃຫ້ແບ່ງປັນ 10 % ຂອງກຳໄລ ຫຼັງຈາກເສຍອາກອນຂອງແຕ່ລະປີ ເຂົ້າຖ້ຽສະສົມຕາມລະບຽບການ, ພາຍຫຼັງຫັກຂາດທຶນສະສົມ, ຖ້າມີ. ເມື່ອຖ້ຽສະສົມຕາມລະບຽບການດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ, ທະນາຄານຈະຢຸດສະສົມເງິນແຮດັ່ງກ່າວ, ຍົກເວັ້ນກໍລະນີທີ່ກົດໝາຍກຳນົດໄວ້ຢ່າງອື່ນ.

ທຶນຂະຫຍາຍທຸລະກິດ ແລະ ທຶນອື່ນໆ ຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງ ຄະນະອຳນວຍການ.

31. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດສຳລັບປີ ປະກອບມີມູນຄ່າຂອງເອກະສານລາຍງານຖານະການເງິນ ເຊິ່ງມີລາຍລະອຽດດັ່ງນີ້:

	31 ທັນວາ 2024 ລ້ານກີບ	*31 ທັນວາ 2023 ລ້ານກີບ*
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	5,323,473	5,171,078
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	10,367,826	15,450,480
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	11,345,576	11,804,977
ເງິນຝາກມີກຳນົດ ໝົດກຳນົດພາຍໃນ 3 ເດືອນ	6,786,792	5,166,610
	33,823,667	**37,593,145**

32. ໜີ້ສິນ ແລະ ຄຳໝັ້ນສັນຍາທີ່ອາດເກີດຂຶ້ນ

	31 ທັນວາ 2024	*31 ທັນວາ 2023*
	ລ້ານກີບ	*ລ້ານກີບ*
ໜັງສືຄ້ຳປະກັນທາງການເງິນ	8,729,738	8,711,150
ໜັງສືສິນເຊື່ອກັບທີ່	93,078	36,000
ໜັງສືສິນເຊື່ອ	1,225,435	1,816,363
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ	109,137,313	60,083,507
ວົງເງິນສິນເຊື່ອໃຫ້ແກ່ທະນາຄານ	233,394	238,279
	119,418,958	**70,885,299**

ການຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃບລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ແມ່ນມີຄວາມສ່ຽງຫລາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

ສັນຍາເຊົ່າຊື້

ນະວັນທີ 31 ທັນວາ 2024, ທະນາຄານບໍ່ໄດ້ເຊັນສັນຍາເຊົ່າໃນນາມທີ່ເປັນທັງຜູ້ໃຫ້ເຊົ່າ ຫຼື ຜູ້ເຊົ່າ ທີ່ຈະມີຜົນຕໍ່ກະແສເງິນສົດເຂົ້າ - ອອກ ໃນອະນາຄົດ.

33. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ລວມເອົາທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນໆ ເຊິ່ງ ມີສາຍພົວພັນກັບບໍລິສັດ, ພາກສ່ວນທີ່ຈະກ່ຽວຂ້ອງກັບບໍລິສັດຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ► ມີການຄວບຄຸມຖືກຄວບຄຸມໂດຍ, ຫຼື ຢູ່ພາຍໃຕ້ການຄວບຄຸມໂດຍ ບໍລິສັດ (ໃນນີ້ລວມມີ ບໍລິສັດແມ່, ບໍລິສັດ ໃນເຄືອ ແລະ ບໍລິສັດໃນເຄືອລາຍຍ່ອຍ);
- ► ມີຜົນປະໂຫຍດນຳກັນກັບບໍລິສັດ ເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບ ບໍລິສັດ; ຫຼື
- ► ມີການຄວບຄຸມຮ່ວມກັບບໍລິສັດ;

(ຂ) ພາກສ່ວນດັ່ງກ່າວແມ່ນເປັນບໍລິສັດຮ່ວມທຶນ ເຊິ່ງບໍລິສັດເປັນຜູ້ຮ່ວມທຶນ;

(ຄ) ພາກສ່ວນດັ່ງກ່າວແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງ ບໍລິສັດ ຫຼື ບໍລິສັດແມ່;

(ງ) ພາກສ່ວນດັ່ງກ່າວແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນດັ່ງກ່າວກໍ່ແມ່ນຜູ້ທີ່ຄວບຄຸມ ບໍລິສັດ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິ ອຳນາດໃນການອອກສຽງສ່ວນໃຫຍ່ຕໍ່ໜ່ວຍງານທີ່ດຳເນີນທຸລະກິດຢູ່ໂດຍທາງກົງ ຫຼື ທາງອ້ອມ ທຸກໆພາກສ່ວນທີ່ໄດ້ ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນດັ່ງກ່າວທີ່ມີແຜນໄດ້ຮັບຜົນປະໂຫຍດພາຍຫຼັງອອກວຽກສຳລັບພະນັກງານຂອງບໍລິສັດ ຫຼື ໜ່ວຍງານອື່ນໆທີ່ ມີສາຍພົວພັນກັບ ບໍລິສັດ.

ຜົນປະໂຫຍດໃຫ້ແກ່ຄະນະອຳນວຍການ ແລະ ສະມາຊິກສະພາບໍລິຫານມີດັ່ງນີ້:

	2024 *ລ້ານກີບ*	*2023* *ລ້ານກີບ*
ເງິນເດືອນ	2,685	2,028
ເງິນໂບນັດ	290	39
ເງິນເບ້ຍລ້ຽງຕຳແໜ່ງ	1,053	988
	4,028	**3,055**

33. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ທຸລະກຳທີ່ສຳຄັນທີ່ກ່ຽວກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີ ມີລາຍລະອຽດຄືດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ໝາຍເຫດ*	*ລາຍການເຄື່ອນໄຫວ*	*ລາຍຮັບ ລ້ານກີບ*	*ລາຍຈ່າຍ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	(i)	ດອກເບ້ຍຈາກການກູ້ຢືມຈາກ ທຫລ	248,132	216,633
		ດອກເບ້ຍຈາກເງິນຝາກມີກຳນົດຈາກ ທຫລ	202,192	30,723
		ດອກເບ້ຍຈາກການລົງທຶນໃນ ພັນທະບັດຂອງ ທຫລ	276,982	42,218
ກະຊວງການເງິນແຫ່ງ ສປປ ລາວ	(ii)	ດອກເບ້ຍຈາກການລົງທຶນໃນ ພັນທະບັດຂອງກະຊວງການເງິນ	968,095	381,768

ຍອດເຫຼືອທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2024 ມີລາຍລະອຽດຄືດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ໝາຍເຫດ*	*ລາຍການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	(i)	ເງິນກູ້ຢືມຈາກ ທຫລ	-	4,329,468
		ເງິນຝາກກະແສລາຍວັນ ຢູ່ ທຫລ	10,367,826	-
		ເງິນຝາກພາກບັງຄັບ ຢູ່ ທຫລ	9,600,243	-
		ເງິນຝາກມີກຳນົດ ຢູ່ ທຫລ	7,427,163	-
		ການລົງທຶນໃນພັນທະບັດຂອງ ທຫລ	9,298,819	-
ກະຊວງການເງິນແຫ່ງ ສປປ ລາວ	(ii)	ການລົງທຶນໃນພັນທະບັດຂອງກະຊວງ ການເງິນ	15,702,881	-
ບໍລິສັດ ຫຼັກຊັບ ທຄຕລ-ກທ	(iii)	ບັນຊີເງິນຝາກກະແສລາຍວັນ	-	162
		ບັນຊີເງິນຝາກປະຢັດ	-	1,013
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	(iii)	ບັນຊີເງິນຝາກກະແສລາຍວັນ	1,438,312	7,406
		ບັນຊີເງິນຝາກມີກຳນົດ	1,007,405	-
ທະນາຄານ ລາວ-ຝຣັ່ງ	(iii)	ບັນຊີເງິນຝາກກະແສລາຍວັນ	9,071	502
ບໍລິສັດປະກັນໄພ ລາວ -ຫວຽດ	(iii)	ບັນຊີເງິນຝາກກະແສລາຍວັນ	-	2,233
ທະນາຄານ ລາວ-ຈີນ	(iii)	ບັນຊີເງິນຝາກກະແສລາຍວັນ	24,255	36,999
ບໍລິສັດລາວເມເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ	(iii)	ບັນຊີເງິນຝາກກະແສລາຍວັນ	-	7
ບໍລິສັດຕະຫຼາດແລກປ່ຽນເງິນຕາ	(iii)	ບັນຊີເງິນຝາກກະແສລາຍວັນ	-	12,073

33. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2024 ມີລາຍລະອຽດຄືດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ໝາຍເຫດ*	*ລາຍການເຄື່ອນໄຫວ*	*ໜີ້ຕ້ອງຮັບ ລ້ານກີບ*	*ໜີ້ຕ້ອງສົ່ງ ລ້ານກີບ*
ທະນາຄານ ແຫ່ງ ສປປ ລາວ	(i)	ເງິນກູ້ຢືມຈາກ ທຫລ	-	4,316,134
		ເງິນຝາກກະແສລາຍວັນຢຸ່ ທຫລ	15,450,480	-
		ເງິນຝາກພາກບັງຄັບຢຸ່ ທຫລ	6,228,256	-
		ເງິນຝາກມີກຳນົດຢຸ່ ທຫລ	4,834,330	-
		ການລົງທຶນໃນພັນທະບັດ	4,228,042	-
ກະຊວງການເງິນແຫ່ງ ສປປ ລາວ	(ii)	ການລົງທຶນໃນພັນທະບັດຂອງ ກະຊວງການເງິນ	10,870,053	-
ບໍລິສັດ ຫຼັກຊັບ ທຄຕລ-ການ	(iii)	ບັນຊີເງິນຝາກກະແສລາຍວັນ	-	2,819
		ບັນຊີເງິນຝາກປະຢັດ	-	3,062
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	(iii)	ບັນຊີເງິນຝາກປະຢັດ	2,028,764	538,290
		ບັນຊີເງິນຝາກມີກຳນົດ	913,835	-
ທະນາຄານ ລາວ-ຝຣັ່ງ	(iii)	ບັນຊີເງິນຝາກກະແສລາຍວັນ	-	10,921
ບໍລິສັດປະກັນໄພ ລາວ -ຫວຽດ		ບັນຊີເງິນຝາກກະແສລາຍວັນ	-	869
ທະນາຄານ ລາວ-ຈີນ	(iii)	ບັນຊີເງິນຝາກກະແສລາຍວັນ	64,907	18,203
		ບັນຊີເງິນຝາກມີກຳນົດ	50,311	-

(i) ຜູ້ຄຸ້ມຄອງໂດຍກົງ
(ii) ເຈົ້າຂອງໂດຍກົງ
(iii) ບໍລິສັດຮ່ວມທຶນ

34. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນປີ.

ລາຍການດັ່ງລຸ່ມນີ້ສະແດງໃຫ້ເຫັນຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ລາຍໄດ້ຕໍ່ຮຸ້ນ:

	2024	*2023*
ກຳໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນທົ່ວໄປ (ລ້ານກີບ)	449,563	231,408
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບລາຍໄດ້ພື້ນຖານຕໍ່ຮຸ້ນ (ຮຸ້ນ)	207,723,300	207,723,300
ກຳໄລຕໍ່ຮຸ້ນ(ກີບ)	2,164	1,114

35. ນະໂຍບາຍບໍລິຫານຄວາມສ່ຽງ

ຄຳນຳ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກຳຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສຳຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສຳຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ຄະນະບໍລິຫານ ແລະ ຄະນະອຳນວຍການ, ພ້ອມດ້ວຍການສະໜັບສະໜຸນຈາກຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກຳລັງກຳນົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ສະພາໄດ້ແຕ່ງຕັ້ງຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫລາດ ແລະ ຫຼັງຈາກນັ້ນ ໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

35. ນະໂຍບາຍບໍລິຫານຄວາມສ່ຽງ (ຕໍ່)

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດ ກົນລະຍຸດ ແລະ ຫຼັກການບໍລິຫານຄວາມສ່ຽງ.

ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫຼັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈຳປີ. ເຊິ່ງຜ່ານການ ກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ຫຼືບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລື ຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະກຳມະການກວດກາ.

36. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸດຕິທຳໝາຍເຖິງ ມູນຄ່າທີ່ຊັບສິນສາມາດແລກປ່ຽນເປັນເງິນ ຫຼື ການຊຳລະສະສາງໜີ້ສິນບົນພື້ນຖານລາຍການເຄື່ອນໄຫວໃນເງື່ອນໄຂຕົກລົງກັນ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້. ດັ່ງນັ້ນ, ມູນຄ່າຍຸດຕິທຳຈຶ່ງຖືກປະເມີນຕາມການຕັ້ງຂໍ້ສົມມຸດຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນທີ່ຢູ່ໃນໃບລາຍງານຖານະການເງິນແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸດຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານ ສົມມຸດຖານວ່າ ໜີ້ຕ້ອງຮັບສັນຍາເຊົ່າຊື້ສ່ວນໃຫຍ່ຖືຈົນຄົບກຳນົດ ດ້ວຍມູນຄ່າຍຸດຕິທຳເທົ່າກັບມູນຄ່າຕາມບັນຊີທີ່ຖືກດັດແກ້ເງິນແຮຈາກຄ່າເສື່ອມໜີ້ເສຍ.

37. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2024 ທີ່ສົ່ງຜົນກະທົບຕໍ່ການເປີດເຜີຍເອກະສານລາຍງານການເງິນ ແບບແຍກກິດຈະການຂອງທະນາຄານ.

38. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕ່າງປະເທດ ທຽບເທົ່າເງິນກີບລາວສຳລັບໄລຍະສິ້ນສຸດ

	31 ທັນວາ 2024	*31 ທັນວາ 2023*
ໂດລາສະຫາລັດ	21,481.00	20,468.00
ເອີໂຣ	22,520.00	22,603.00
ໄທບາດ	623.00	635.51
ປອນອັງກິດ	27,147.00	25,723.00
ເຢັນຍີ່ປຸ່ນ	137.64	144.10
ໂດລາອົດສະຕາລີ	13,427.00	13,871.00
ຢວນ	2,891.00	2,954.00

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ເພັດສະໄໝ ໄຊຍະມຸງຄຸນ	ທ່ານ ຫົນເພັດ ຈັນທະລັງສີ	ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2025

ແຜນດຳເນີນງານຂອງ ທຄຕລ ປະຈຳປີ 2025 ໂດຍສັງເຂບ

ປີ 2025 ເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ຍັງຈະສືບຕໍ່ປະເຊີນກັບສິ່ງທ້າທາຍຫຍຸ້ງຍາກຫຼາຍດ້ານ ຈາກຜົນກະທົບໂດຍລວມຂອງສະພາບເສດຖະກິດໂລກ, ພາກພື້ນ ແລະ ເສດຖະກິດມະຫາພາກ ທີ່ປ່ຽນແປງຢ່າງສະຫຼັບສັບຊ້ອນ ແລະ ຄາດເດົາໄດ້ຍາກ. ສະນັ້ນ, ການສ້າງແຜນດຳເນີນທຸລະກິດປະຈຳປີ 2025 ຂອງ ທຄຕລ ແມ່ນໄດ້ອີງໃສ່ທ່າແຮງທີ່ມີ ແລະ ສະພາບທຸລະກິດຂອງ ທຄຕລ ໃນໄລຍະຜ່ານມາເປັນຫຼັກ ເພື່ອໄລ່ລຽງກຳນົດບັນດາຕົວເລກແຜນການດ້ານຕ່າງໆ ບວກກັບການໄລ່ລຽງທາງດ້ານເສດຖະກິດທັງພາຍໃນ ແລະ ພາກພື້ນສາກົນ ທັງນີ້ກໍ່ເພື່ອຮັບປະກັນໃຫ້ການດຳເນີນທຸລະກິດຂອງ ທຄຕລ ມີລັກສະນະຍືນຍົງ ທັງສາມາດແກ້ໄຂບັນຫາທີ່ບິ່ມຊ້ອນໃນການດຳເນີນທຸລະກິດໃນໄລຍະຜ່ານມາໄປເທື່ອລະກ້າວ, ເຊິ່ງສາມາດກຳນົດເປັນເປົ້າໝາຍສູ້ຊົນໄດ້ດັ່ງລາຍລະອຽດລຸ່ມນີ້:

1. ວິໄສທັດ ທຄຕລ

ທຄຕລ ໄດ້ກຳນົດວິໄສທັດລວມຂອງຕົນຕາມແຜນຍຸດທະສາດໄລຍະຍາວ ແຕ່ປີ 2025 – 2029 ຄື "**ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ**".

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ສາມາດບັນລຸຕາມວິໄສທັດ ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ແມ່ນ ພັດທະນາປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່ ໂດຍຖືເອົາລູກຄ້າເປັນໃຈກາງ; ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການ Basel II; ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດ ຫັນສູ່ຮູບແບບ Digital Banking ຢ່າງເຕັມຮູບແບບ; ພັດທະນາລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ Cyber Security ໄດ້ມາດຕະຖານສາກົນ; ພັດທະນາບຸກຄະລາກອນໃນແຕ່ລະດ້ານໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ; ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ; ສ້າງຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ; ສ້າງບັນດາເງື່ອນໄຂດ້ານຕ່າງໆ ເພື່ອປະຕິບັດໄດ້ບັນດາມາດຕະຖານຕ່າງໆຂອງສາກົນ.

3. ແຜນຖານະການເງິນທີ່ສຳຄັນປະຈຳປີ 2025

ໃນປີ 2025 ທຄຕລ ຍັງຈະສືບຕໍ່ກຳນົດທິດທາງດຳເນີນທຸລະກິດຂອງຕົນເອງໃຫ້ມີລັກສະນະສູ້ຊົນ ແລະ ກ້າວໜ້າ, ທັງນີ້ກໍ່ເພື່ອເຮັດໃຫ້ຜົນການດຳເນີນທຸລະກິດໂດຍລວມອອກມາມີປະສິດທິຜົນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຖືຮຸ້ນ ເຊິ່ງລາຍລະອຽດມີດັ່ງນີ້:

- **ຍອດຊັບສິນ:** ບໍ່ໜ້ອຍ 150,620 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 5.93%;
- **ຍອດເງິນຝາກ:** ບໍ່ໜ້ອຍ 138,000 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 3.65%;
- **ຍອດເງິນກູ້ທັງໝົດ:** ບໍ່ໜ້ອຍ 65,700 ຕື້ກີບ ທຽບໃສ່ທ້າຍປີ 2024 ເພີ່ມຂຶ້ນ 5.69%;
- **ໜີ້ NPL ທັງໝົດ:** ບໍ່ເກີນ 3% ຂອງຍອດເງິນກູ້ທັງໝົດ;
- **ກຳໄລສຸດທິ:** ບໍ່ໜ້ອຍ 550 ຕື້ກີບ ທຽບໃສ່ຈັດຕັ້ງປະຕິບັດປີ 2024 ເພີ່ມຂຶ້ນ 22.34%.

4. ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ອີງໃສ່ແຫຼ່ງທຶນຂະຫຍາຍທຸລະກິດມີຈຳກັດ ສະນັ້ນການປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຈະເນັ້ນໃສ່ສືບຕໍ່ບັນດາໂຄງການທີ່ຍັງບໍ່ສຳເລັດ, ປ່ຽນແທນສິ່ງເກົ່າທີ່ເປ່ເພ ແລະ ປະກອບເພີ່ມໃໝ່ສິ່ງທີ່ຈຳເປັນ ລວມທັງໝົດຈຳນວນ 804.67 ຕື້ກີບ ເຊິ່ງຢູ່ໃນຂອບເຂດຂອງແຫຼ່ງທຶນທີ່ມີ.

5. ແຜນຂະຫຍາຍໜ່ວຍບໍລິການ

ການຂະຫຍາຍຕາໜ່າງບໍລິການພາຍໃນປີ 2025 ແມ່ນຈະສືບຕໍ່ຂະຫຍາຍບັນດາໜ່ວຍບໍລິການທີ່ກຳລັງຢູ່ໃນຂັ້ນຕອນການດຳເນີນການບໍ່ສຳເລັດ ທີ່ໄດ້ຮັບຮອງມາກ່ອນໜ້ານີ້ ແລະ ສຸມໃສ່ຂະຫຍາຍຕາໜ່າງໃນເຂດເສດຖະກິດທີ່ມີຄວາມເໝາະສົມ ລວມເຖິງເຂດຈຸດສຸມທີ່ທາງຂັ້ນເທິງມີທິດຊີ້ນຳໃນແຕ່ລະໄລຍະ, ເຊິ່ງປະກອບມີແຜນສ້າງຕັ້ງສາຂາ 1 ແຫ່ງ, ຂະຫຍາຍໜ່ວຍບໍລິການໃໝ່ 13 ແຫ່ງ ແລະ ຍົກຍ້າຍສະຖານທີ່ໜ່ວຍບໍລິການ 2 ແຫ່ງ ລາຍລະອຽດມີດັ່ງນີ້:

ລ/ດ	ປະເພດ	ສາຂາ	ຊື່	ໝາຍເຫດ
ສ້າງຕັ້ງສາຂາ				
1	ສາຂາ	ໄຊສົມບູນ	ສາຂາໄຊສົມບູນ	ຍົກລະດັບໜ່ວຍບໍລິການເປັນສາຂາ
ສ້າງຕັ້ງໜ່ວຍບໍລິການ				
1	ໜ່ວຍບໍລິການ	ໄຊຍະບູລີ	ໜ່ວຍບໍລິການຊຽງຮ່ອນ	ສືບຕໍ່ແຜນປີ 2024
2	ໜ່ວຍບໍລິການ	ນະຄອນຫຼວງວຽງຈັນ	ໜ່ວຍບໍລິການສະໜາມບິນສາກົນວັດໄຕ	ສືບຕໍ່ແຜນປີ 2024
3	ໜ່ວຍບໍລິການ	ຄຳມ່ວນ	ໜ່ວຍບໍລິການດົງໃຕ້	ເຂດອຸດສາຫະກຳອາຊີ - ໂປຕາສ ສາກົນ
4	ໜ່ວຍບໍລິການ	ສະຫວັນນະເຂດ	ໜ່ວຍບໍລິການເຊໂນ	ຍົກລະດັບຫ້ອງແລກປ່ຽນເປັນໜ່ວຍບໍລິການ
5	ໜ່ວຍບໍລິການ	ຜົ້ງສາລີ	ໜ່ວຍບໍລິການຍອດອູ	
6	ໜ່ວຍບໍລິການ	ຫຼວງນ້ຳທາ	ໜ່ວຍບໍລິການວຽງພູຄາ	
7	ໜ່ວຍບໍລິການ	ຊຽງຂວາງ	ໜ່ວຍບໍລິການໝອງແຮດ	
8	ໜ່ວຍບໍລິການ	ບໍລິຄຳໄຊ	ໜ່ວຍບໍລິການທ່າບົກ	
9	ໜ່ວຍບໍລິການ	ບໍລິຄຳໄຊ	ໜ່ວຍບໍລິການຂົວມິດຕະພາບ ລາວ-ໄທ ແຫ່ງທີ 5	
10	ໜ່ວຍບໍລິການ	ຫົວພັນ	ໜ່ວຍບໍລິການເມືອງແອດ	
11	ໜ່ວຍບໍລິການ	ອຸດົມໄຊ	ໜ່ວຍບໍລິການເມືອງແບງ	
12	ໜ່ວຍບໍລິການ	ເຊກອງ	ໜ່ວຍບໍລິການເມືອງກະລຶມ	
13	ໜ່ວຍບໍລິການ	ແຂວງວຽງຈັນ	ໜ່ວຍບໍລິການບ້ານວັ້ງ	
ຍົກຍ້າຍສະຖານທີ່ໜ່ວຍບໍລິການ				
1	ໜ່ວຍບໍລິການ	ໄຊເສດຖາ	ໜ່ວຍບໍລິການດົງຄຳຊ້າງ	ສືບຕໍ່ແຜນປີ 2024 ຍ້າຍຈາກໜ່ວຍບໍລິການຕະຫຼາດຫຼັກຊັບລາວ ມາເປັນໜ່ວຍບໍລິການດົງຄຳຊ້າງ

2	ໜ່ວຍບໍລິການ	ດົງໂດກ	ໜ່ວຍບໍລິການຫຼັກ 21	ຍ້າຍຈາກໜ່ວຍບໍລິການ ເຂດເສດຖະກິດກອມລອມໄຊເສດຖາມາເປັນໜ່ວຍບໍລິການຫຼັກ 21

6. ແຜນຮັບພະນັກງານໃໝ່

ສຳລັບປີ 2025 ທຄຕລ ໄດ້ຂຶ້ນແຜນຮັບພະນັກງານໃໝ່ ໂດຍພິຈາລະນາຄວາມຕ້ອງການພະນັກງານຈາກບັນດາພະແນກ, ສູນ, ສາຂາ ໃນທົ່ວລະບົບ ທີ່ມີຄວາມຈຳເປັນ. ສຳລັບການປະກອບພະນັກງານໃໝ່ແມ່ນໄດ້ຄົ້ນຄວ້າບົນພື້ນຖານການໄລ່ລຽງທາງທຸລະກິດເປັນຕົ້ນຕໍ ເປັນຕົ້ນແມ່ນເພື່ອຮອງຮັບວຽກງານສະເພາະດ້ານທີ່ຈຳເປັນ ບໍ່ສາມາດສັບຊ້ອນພະນັກງານພາຍໃນໄດ້, ປະກອບເຂົ້າໃນໂຄງຮ່າງການຈັດຕັ້ງ ແລະ ຕາໜ່າງບໍລິການທີ່ຂະຫຍາຍໃໝ່. ພ້ອມນັ້ນ, ທຄຕລ ແມ່ນຈະຍັງສືບຕໍ່ວຽກງານການສັບຊ້ອນ, ຈັດວາງພະນັກງານພາຍໃນໃຫ້ມີຄວາມເໝາະສົມ ເພື່ອເຮັດໃຫ້ກົງຈັກການຈັດຕັ້ງມີຄວາມກະທັດຮັດ ແລະ ມີປະສິດທິພາບ, ຊຶ່ງແຜນການຮັບພະນັກງານໃໝ່ປະຈຳປີ 2025 ມີຈຳນວນທັງໝົດ 84 ຄົນ.

ແຜນຍຸດທະສາດພັດທະນາ ທຄຕລ ປີ 2025 – 2029 (ຄັດຫຍໍ້)

1. ຈຸດປະສົງ

ເພື່ອເຮັດໃຫ້ ທຄຕລ ໄດ້ຮັບການພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນໃນລະບົບທະນາຄານ ໃນ ສປປ ລາວ. ໂດຍສອດຄ່ອງກັບ ຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ໄລຍະ 10 ປີ (2026-2035) ແລະ ວິໄສທັດຮອດປີ 2040.

2. ວິໄສທັດ

“ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ”

3. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ບັນລຸຕາມວິໄສທັດ ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ແມ່ນ ພັດທະນາປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່ ໂດຍຖືເອົາລູກຄ້າເປັນໃຈກາງ; ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການ BASEL II; ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດ ຫັນສູ່ຮູບແບບ Digital Banking ຢ່າງເຕັມຮູບແບບ; ພັດທະນາລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ Cyber Security ໄດ້ມາດຕະຖານສາກົນ; ພັດທະນາບຸກຄະລາກອນໃນແຕ່ລະດ້ານໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ; ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ; ສ້າງຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ; ສ້າງບັນດາເງື່ອນໄຂດ້ານຕ່າງໆ ເພື່ອປະຕິບັດໄດ້ບັນດາມາດຕະຖານຕ່າງໆຂອງສາກົນ.

4. ຄຸນຄ່າຫຼັກ (Core Value)

ຄຸນຄ່າຫຼັກ (Core Value) ເປັນຫຼັກການຜຶດຕິກຳຊີ້ນຳ ທີ່ສະແດງເຖິງຄວາມຄາດຫວັງຂອງ ທຄຕລ ເພື່ອໃຫ້ບັນດາຜູ້ບໍລິຫານທຸກຂັ້ນ ແລະ ພະນັກງານ ທຄຕລ ທຸກຄົນ ຕ້ອງປະຜຶດ, ປະຕິບັດໃຫ້ຖືກຕ້ອງ ແລະ ມີຄວາມເປັນເອກະພາບກັນ ທັງນີ້ກໍເພື່ອໃຫ້ ທຄຕລ ບັນລຸວິໄສທັດ, ພາລະກິດ ແລະ ເປົ້າໝາຍທີ່ວາງໃວ້ ຊຶ່ງຄຸນຄ່າຫຼັກປະກອບມີ 5 ຫຼັກການທີ່ສຳຄັນຄື:

- ຖືລູກຄ້າເປັນຈຸດສູນກາງ (Customer Centric)
- ຄວາມຊື່ສັດ (Integrity)
- ເນັ້ນປະສິດທິພາບການດຳເນີນທຸລະກິດ (Effective Work)
- ຮັບຮູ້ການເປີດກ້ວາງ (Embracing Change)
- ຄວາມຮັບຜິດຊອບຕໍ່ສັງຄົມ (Social Responsibility)

5. ຍຸດທະສາດພັດທະນາຂອງ ທຄຕລ

5.1 ສ້າງຄວາມເຂັ້ມແຂງໃຫ້ອົງກອນ

5.1.1. ບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດ

❖ **ບໍລິຫານການເງິນ ແລະ ເປົ້າໝາຍທາງດ້ານການເງິນ**

- **ການບໍລິຫານການເງິນ:** ການບໍລິຫານການເງິນແມ່ນໜຶ່ງໃນພາລະກິດທີ່ສຳຄັນຂອງທະນາຄານ ສຸມໃສ່ການພັດທະນາຫຼາຍດ້ານ ເພື່ອສ້າງຄວາມເຂັ້ມແຂງທາງການເງິນ ເປັນຕົ້ນແມ່ນ ການລະດົມທຶນ ແລະ ບໍລິຫານໂຄງສ້າງທຶນ, ພັດທະນາວຽກງານການລະດົມທຶນໃນຮູບແບບຕ່າງໆ ທີ່ສອດຄ່ອງຕາມເງື່ອນໄຂຕົວຈິງ, ປັບປຸງໂຄງສ້າງທຶນໃຫ້ເໝາະສົມເພື່ອຍົກລະດັບຄວາມໜ້າເຊື່ອຖື ແລະ ພັດທະນາການຮ່ວມທຶນກັບພາກສ່ວນອື່ນ ເພື່ອເພີ່ມປະສິດທິພາບທາງທຸລະກິດ. ພ້ອມນີ້, ກຳນົດຍຸດທະສາດການບໍລິຫານທຶນ ແລະ ສິນເຊື່ອໃຫ້ສອດຄ່ອງກັນ, ການຫັນຊັບສິນໃຫ້ເປັນທຶນຢ່າງມີປະສິດທິພາບ ແລະ ຫຼຸດຜ່ອນການຊື້ຊັບສິນບັດຄົງທີ່ໂດຍຫັນມາໃຊ້ວິທີການເຊົ່າຊື້ ພ້ອມທັງພັດທະນາສ້າງລາຍຮັບໃຫ້ມີຄວາມຫຼາກຫຼາຍ ແລະ ບໍລິຫານຄວບຄຸມລາຍຈ່າຍໃຫ້ມີປະສິດທິພາບ. ໂດຍລວມແລ້ວ, ການບໍລິຫານການເງິນທີ່ມີປະສິດທິພາບຈະຊ່ວຍສ້າງຄວາມເຂັ້ມແຂງທາງການເງິນ, ເພີ່ມຄວາມໜ້າເຊື່ອຖື ແລະ ຮັບປະກັນການເຕີບໂຕທີ່ຍືນຍົງຂອງທະນາຄານ.
- **ເປົ້າໝາຍທາງການເງິນ**

ເປົ້າໝາຍທາງດ້ານການເງິນ ໃນໄລະ 2025-2029

Financial Target 2025 - 2029	**FY 2025**	**FY 2026**	**FY 2027**	**FY 2028**	**FY 2029**
Asset Growth	5-9%	5-9%	5-9%	5-9%	5-9%
Deposit Growth	5-10%	5-10%	5-10%	5-10%	5-10%
Loan Growth	5-7%	5-7%	5-7%	5-7%	5-7%
ROA	0.32%	0.35%	0.40%	0.45%	0.51%
ROE	11.92%	13.49%	15.80%	17.57%	19.74%
NPL	< 3%	< 3%	< 3%	< 3%	< 3%
NIM	1.5-3%	1.5-3%	1.5-3%	1.5-3%	1.5-3%
CAR	≥ 8%	≥ 8%	≥ 8%	≥ 8%	≥ 8%

❖ **ການຄຸ້ມຄອງບໍລິຫານທຶນ:** ແມ່ນຈະເນັ້ນໃສ່ການບໍລິຫານທຶນແບບລວມສູນ ໂດຍນຳໃຊ້ລະບົບເຂົ້າຊ່ວຍໃນການບໍລິຫານທຶນໃຫ້ມີປະສິດທິພາບ ເພີ່ມໂອກາດໃນການລົງທຶນ ແລະ ຫຼຸດຜ່ອນຄວາມສ່ຽງໃຫ້ເຫຼືອໜ້ອຍທີ່ສຸດ ໄປຄຽງຄູ່ກັບການປັບປຸງການກຳນົດເພດານສາມາດຄຸ້ມຄອງຄວາມສ່ຽງ ໂດຍອີງໃສ່ອັດຕາສ່ວນທາງດ້ານການເງິນ ແລະ ລະບຽບການຕາມຄວາມເໝາະສົມ ທີ່ສາມາດຈັດຕັ້ງປະຕິບັດໄດ້.

❖ **ການບໍລິຫານຊັບສິນບັດຄົງທີ່:** ເພື່ອຮັບປະກັນການນຳໃຊ້ຊັບສິນໃຫ້ເກີດປະສິດທິພາບສູງສຸດ ແລະ ມີຄວາມຍືນຍົງ ການຄຸ້ມຄອງບໍລິຫານຊັບສິນບັດຄົງທີ່ ທີ່ມີປະສິດທິພາບຈະຊ່ວຍໃຫ້ອົງກອນສາມາດໃຊ້ປະໂຫຍດຈາກຊັບສິນຢ່າງເຕັມທີ່ຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ຮັບປະກັນການດຳເນີນງານທີ່ມີປະສິດທິພາບ, ໂດຍ ທຄຕລ ຈະໄດ້ຄຸ້ມຄອງຊັບສິນບັດ ບໍ່ໃຫ້ກະທົບຕໍ່ຖານະການເງິນ ເຊິ່ງຕ້ອງໄດ້ມີການຄົ້ນຄວ້າແຜນຮັບຊັບສິນບັດປະເພດຕ່າງໆ ໃຫ້ສອດຄ່ອງກັບແຜນງົບປະມານ ແລະ ຄວາມສາມາດທາງການເງິນໃນແຕ່ລະປີ, ສ້າງແຜນຈຳໜ່າຍຊັບສິນທີ່ບໍ່ຈຳເປັນ ຫຼື ບໍ່ໄດ້ໝູນໃຊ້ໃນທຸລະກິດ. ນອກຈາກນັ້ນ, ຈະຕ້ອງສືບຕໍ່

ນຳໃຊ້ລະບົບເຕັກໂນໂລຢີເຂົ້າໃນການຄຸ້ມຄອງຂໍ້ມູນຊັບສິນບັດໃຫ້ສອດຄ່ອງກັບມາດ ຖານ IFRS ທີ່ ວາງອອກໃນແຕ່ລະໄລຍະ ພ້ອມທັງຫັນສູ່ການເຊົ່າຊື້, ການວ່າຈ້າງຜູ້ສະໜອງທາງນອກ ແທນການລົງທຶນ ເອງ.

- **ພັດທະນາວຽກງານການຕະຫຼາດ ແລະ ການຂາຍຜະລິດຕະພັນ:** ວຽກງານການຕະຫຼາດເປັນ ປັດໄຈສຳຄັນ ແລະ ເປັນປັດໄຈຫລັກໃນການຂັບເຄື່ອນການຂະຫຍາຍຕົວຂອງຖານລູກຄ້າ, ສ້າງການເຕີບ ໃຫຍ່ ແລະ ຄວາມໝັ້ນຄົງຂອງພາບລັກ ໂດຍ ທຄຕລ ຈະເນັ້ນໃສ່ການຄົ້ນຄວ້າເພີ່ມຊ່ອງທາງ ແລະ ພັດທະນາຮູບແບບການໂຄສະນາຕາມສື່ຕ່າງໆທັງ Online ແລະ Offline ໃຫ້ມີຄວາມຫຼາກຫຼາຍ ເພື່ອ ເປັນການນຳສະເໜີຜະລິດຕະພັນ ແລະ ການບໍລິການຂອງ ທຄຕລ ອອກສູ່ສັງຄົມໃຫ້ທົ່ວເຖິງຢ່າງມີ ປະສິດທິພາບ; ວິໄຈ ແລະ ວິເຄາະຕະຫຼາດ ລົງເລິກສຶກສາພຶດຕິກຳ, ວິເຄາະພຶດຕິກຳການນຳໃຊ້; ສ້າງພາບ ລັກ (Branding) ໃຫ້ໂດດເດັ່ນຂຶ້ນ ແລະ ມີຄວາມແຕກຕ່າງໃນການດຶງດູດແຕ່ລະກຸ່ມລູກຄ້າທີ່ເປັນເປົ້າໝາ ຍ ໂດຍສະທ້ອນໃຫ້ເຫັນຄຸນຄ່າຂອງ ທຄຕລ; ໃຊ້ເຄື່ອງມືອີເລັກໂທນິກ AI ແລະ Machine Learning ເຂົ້າໃນວຽກງານການຕະຫຼາດໃຫ້ຫຼາຍຂຶ້ນ, ເພີ່ມປະສິດທິພາບການຂາຍໂດຍນຳໃຊ້ Digital Marketing Analytics ຈັດການໂຄສະນາແບບເຈາະຈົງກຸ່ມລູກຄ້າເປົ້າໝາຍ, ທົບທວນວຽກງານ ແລະ ປັບປຸງຊ່ອງ ທາງການສື່ສານກັບລູກຄ້າ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຕອບໂຈດກັບລູກຄ້າຫຼາຍທີ່ສຸດ. ພ້ອມນັ້ນ, ຍຸດ ທະສາດການຂາຍຍຸກໃໝ່ ແມ່ນຖືເອົາຍຸດທະສາດຂາຍເຊີງບຸກ ທີ່ມີຈຸດສຸມ.
- **ຄົ້ນຄວ້າຮ່ວມມື ແລະ ພົວພັນກັບພາຍນອກ ເພື່ອເພີ່ມໂອກາດທາງທຸລະກິດ:** ການຮ່ວມມື ລະຫວ່າງທະນາຄານ ທັງພາຍໃນປະເທດ ແລະ ລະດັບສາກົນ ໄດ້ມີບົດບາດສຳຄັນຕໍ່ການພັດທະນາ ເສດຖະກິດ ແລະ ເສີມສ້າງຄວາມໝັ້ນຄົງທາງການເງິນໃນຫຼາຍມິຕິ ໂດຍສະເພາະແມ່ນ ເສີມສ້າງສະຖຽນ ລະພາບທາງການເງິນ, ສິ່ງເສີມການພັດທະນາບໍລິການທີ່ທັນສະໄໝ, ອຳນວຍຄວາມສະດວກໃນການເຮັດ ທຸລະກຳຂ້າມປະເທດ, ສ້າງຄວາມເຊື່ອໝັ້ນ ຊຶ່ງສະແດງອອກຈາກການເຊື່ອມໂຍງ ທີ່ອຳນວຍຄວາມ ສະດວກໃຫ້ກັບລູກຄ້າເຊັ່ນ: SWIFT, Payment Network ຫຼື ການຊຳລະສະສາງຂ້າມແດນຜ່ານມືຖື ກັບບັນດາປະເທດໃນຂົງເຂດ. ນອກນັ້ນ ການຮ່ວມມື ຍັງມີຄວາມສຳຄັນ ໃນການອຳນວຍຄວາມ ສະດວກ ແລະ ເຂົ້າເຖິງໄດ້ງ່າຍ ໃຫ້ກັບລູກຄ້າ ແລະ ຕອບສະໜອງຄວາມຕ້ອງການ ຂອງລູກຄ້າໃນຍຸກທີ່ ເທັກໂນໂລຊີ ແລະ ເສດຖະກິດ ມີການປ່ຽນແປງຢ່າງໄວວາ. ສະນັ້ນ, ທຄຕລ ໄດ້ວາງຍຸດທະສາດການ ຮ່ວມມື ອອກເປັນ 2 ລະດັບຄື: ການຮ່ວມມືພາຍໃນປະເທດ ແລະ ສາກົນ ເຊິ່ງຈະມີການກຳນົດລາຍ ລະອຽດໃນການຮ່ວມມືແຕ່ລະລະດັບທີ່ແຕກຕ່າງກັນ ແລະ ສອດຄ່ອງກັບສະພາບການໃນແຕ່ລະໄລຍະ.
- **ສ້າງລະບຽບ, ຄຳແນະນຳ, ຄູມື ຫຼື ປັບປຸງບັນດານິຕິກຳຕ່າງ:** ທຄຕລ ຈະສືບຕໍ່ສ້າງ ແລະ ປັບປຸງ ບັນດານິຕິກຳຕ່າງໆ ເພື່ອຮັບປະກັນການປະຕິບັດວຽກງານໃຫ້ເອກະພາບເປັນໄປຕາມຂັ້ນຕອນ-ວິທີການ ແລະ ທັງເປັນການຫລຸດຜ່ອນຄວາມສ່ຽງທີ່ອາດເກີດຂຶ້ນ ຈາກການປະຕິບັດງານທີ່ບໍ່ຖືກຕ້ອງສອດຄ່ອງ ຕາມລະບຽບການ.

5.1.2. ຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອຢ່າງມີປະສິດທິພາບ

ການຂະຫຍາຍສິນເຊື່ອຢ່າງມີປະສິດທິພາບ ເປັນຍຸດທະສາດໜຶ່ງທີ່ສຳຄັນຂອງທະນາຄານ ເພື່ອເຮັດໃຫ້ ວຽກງານສິນເຊື່ອມີຄວາມເຂັ້ມແຂງ ແລະ ຍືນຍົງ ເຊິ່ງ ທຄຕລ ຈະມີມາດຕະການຄວບຄຸມ, ປະເມີນຄຸນນະພາບສິນ ເຊື່ອຢ່າງຮອບດ້ານ ແລະ ທົບທວນນະໂຍບາຍເປັນປະຈຳເພື່ອໃຫ້ສອດຄ່ອງກັບສະພາບການປ່ຽນແປງໃນແຕ່ລະ ໄລຍະ; ການຂະຫຍາຍສິນເຊື່ອໃໝ່ຕ້ອງໄດ້ຄຳນຶງເຖິງກຸ່ມເປົ້າໝາຍທີ່ຫຼາກຫຼາຍ ລວມທັງທຸລະກິດຂະໜາດໃຫຍ່ທີ່ ເປັນກຸ່ມລູກຄ້າຫຼັກຂອງ ທຄຕລ ໃນປະຈຸບັນ ແລະ ສຸມໃສ່ຂະຫຍາຍສິນເຊື່ອໃນວິສາຫະກິດຂະໜາດນ້ອຍ ແລະ ກາງ (SME), ລູກຄ້າລາຍຍ່ອຍ ແລະ ໂຄງການພັດທະນາຕ່າງໆ ບົນພື້ນຖານໃຫ້ມີຄວາມຮັດກຸມ, ຖືກຕ້ອງ ແລະ ສອດຄ່ອງຕາມນະໂຍບາຍລະບຽບຫຼັກການທີ່ກຳນົດໄວ້.

ຄຸ້ມຄອງບໍລິຫານສິນເຊື່ອ ເພື່ອຮັບປະກັນຄຸນນະພາບສິນເຊື່ອ ແລະ ການເຕີບໂຕຢ່າງຍືນຍົງຂອງ ທະນາຄານ ທຄຕລ ຕ້ອງໄດ້ປັບປຸງດ້ານການບໍລິຫານຄວາມສ່ຽງ ໂດຍການຄວບຄຸມອັດຕາສ່ວນການປ່ອຍສິນເຊື່ອ ຫຼື ເພດານຄວາມສ່ຽງຢ່າງຈະແຈ້ງໃນແຕ່ລະຂະແໜງການເສດຖະກິດ ໃຫ້ນອນຢູ່ໃນຂອບເຂດອັດຕາສ່ວນຕົວຊີ້ວັດ ລະດັບຄວາມສ່ຽງຍອມຮັບໄດ້. ຄຽງຄູ່ກັນນີ້, ຕ້ອງໄດ້ມີການປັບປຸງລະບຽບກ່ຽວກັບການຄຸ້ມຄອງສິນເຊື່ອ ແລະ ຜະລິດຕະພັນສິນເຊື່ອ ໃຫ້ສອດຄ່ອງແຕ່ລະໄລຍະ ເຊິ່ງການຄຸ້ມຄອງບໍລິຫານສິນເຊື່ອຈະຊ່ວຍໃຫ້ທະນາຄານສາມາດ ຄວບຄຸມຄຸນນະພາບສິນເຊື່ອ ແລະ ຫຼຸດຜ່ອນບັນດາຄວາມສ່ຽງຕໍ່ການດຳເນີນທຸລະກິດໄດ້.

5.1.3. ພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ

ການສ້າງຄວາມເຂັ້ມແຂງດ້ານວຽກງານບຸກຄະລະກອນ ຖືເປັນປັດໄຈທີ່ສຳຄັນຢ່າງຍິ່ງຕໍ່ການພັດທະນາ ແລະ ການເຕີບໂຕຂອງອົງກອນ. ໃນສະພາບການປະຈຸບັນທີ່ມີການແຂ່ງຂັນສູງ ແລະ ການປ່ຽນແປງທາງເຕັກໂນໂລຊີທີ່ວ່ອງໄວ, ການມີບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ແລະ ທັກສະທີ່ເໝາະສົມ ແມ່ນກາຍເປັນ ຄວາມຈຳເປັນພື້ນຖານຂອງທຸກອົງກອນ. ການສ້າງຄວາມເຂັ້ມແຂງວຽກງານບຸກຄະລະກອນ ຊ່ວຍສ້າງຄວາມໄດ້ ປຽບໃນການແຂ່ງຂັນ ເນື່ອງຈາກບຸກຄະລາກອນທີ່ມີຄວາມສາມາດ ແລະ ມີຄວາມຊຳນານງານ ຈະສາມາດສ້າງ ນະວັດຕະກຳ, ປັບປຸງປະສິດທິພາບການເຮັດວຽກ ແລະ ຍົກລະດັບຄຸນນະພາບການບໍລິການ ເຊິ່ງ ທຄຕລ ສຸມໃສ່ 4 ດ້ານຫຼັກຄື:

1) ສ້າງຄວາມເຂັ້ມແຂງທາງດ້ານລະບຽບຫຼັກການ, ນະໂຍບາຍ ໃນການບໍລິຫານ-ຄຸ້ມຄອງພະນັກງານ;
2) ສ້າງຄວາມເຂັ້ມແຂງທາງດ້ານຄວາມຮູ້, ຄວາມສາມາດ ແລະ ການກໍ່ສ້າງພະນັກງານ ດ້ວຍການຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງຄົ້ນຄວ້າສ້າງສູນຝຶກອົບຮົມວຽກວິຊາງານວິຊາສະເພາະ ໃຫ້ພະນັກງານພາຍໃນແຕ່ລະດ້ານເປັນຂອງ ທຄຕລ;
3) ສ້າງຄວາມເຂັ້ມແຂງຂອງໂຄງຮ່າງການຈັດຕັ້ງ ແລະ ຈັດສັນພະນັກງານໃຫ້ແທດ ເໝາະໃນແຕ່ລະ ໄລຍະ;
4) ສ້າງຄວາມເຂັ້ມແຂງດ້ານວັດທະນາທຳຂອງອົງກອນ.

5.1.4. ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ເຂັ້ມແຂງ

1) ສ້າງພື້ນຖານວຽກງານການຄຸ້ມຄອງຄວາມສ່ຽງ ໂດຍແນໃສ່ຄຸ້ມຄອງຄວາມສ່ຽງອົງກອນໃຫ້ມີ ປະສິດທິພາບ ແລະ ຮັບປະກັນຄວາມເຂັ້ມແຂງ ແລະ ສອດຄ່ອງດ້ານການຈັດຕັ້ງປະຕິບັດຕາມ ມາດຕະຖານສາກົນ ໂດຍສະເພາະ ຫຼັກການ BASEL II;
2) ສ້າງພື້ນຖານວຽກງານການສະກັດກັ້ນການຟອກເງິນ ໃຫ້ມີຄວາມເຂັ້ມແຂງ ໂດຍແນໃສ່ການສ້າງ ນະໂຍບາຍຕ່າງໆທີ່ຕິດພັນກັບວຽກງານສະກັດກັ້ນການຟອກເງິນ ຫຼື ວຽກງານ AML/CFT ໃຫ້ຄອບຄູ່ ໄປກັບການເຜີຍແຜ່ຄວາມຮູ້ ແລະ ສ້າງຈິດສຳນຶກກ່ຽວກັບວຽກງານດັ່ງກ່າວໃຫ້ກັບພະນັກງານທຸກຄົນ ທົ່ວອົງກອນ.

5.2. ຫັນເປັນທັນສະໄໝ ແລະ ນຳໃຊ້ເຕັກໂນໂລຊີ, ນະວັດຕະກຳໃໝ່ໆ ໃນການດຳເນີນທຸລະ ກິດ

5.2.1 ຄຸ້ມຄອງ ແລະ ພັດທະນາລະບົບໄອທີໃຫ້ທັນສະໄໝ, ປອດໄພ ແລະ ສາມາດ ບໍລິການໄດ້ 24/7

1) ສ້າງລະບົບ Data Center ໃຫ້ໄດ້ມາດຕະຖານ Tier III ຈາກສະຖາບັນ Uptime ແລະ ເພື່ອເປັນການສ້າງ ເງື່ອນໄຂຄວາມພ້ອມໃນການກ້າວເຂົ້າສູ່ມາດຕະຖານສາກົນ ISO 27001;

2) ຍົກລະດັບລະບົບເຄື່ອຂ່າຍໃນທົ່ວລະບົບ ທຄຕລ ໃຫ້ມີຄວາມທັນສະໄໝ ແລະ ຍົກລະດັບລະບົບໄຟຟ້າໃຫ້ມີປະສິດທິພາບ;
3) ປັບປຸງລະບົບ Core Banking ໃຫ້ສາມາດຮອງຮັບຜະລິດຕະພັນທີ່ຫລາກຫລາຍ ແລະ ຮອງຮັບການເພີ່ມຂຶ້ນຂອງຈຳນວນທຸລະກຳ;
4) ພັດທະນາລະບົບໄອທີໃຫ້ມີຄວາມປອດໄພ ເພື່ອຍົກລະດັບການປ້ອງກັນບັນຫາການໂຈມຕີຈາກທາງພາຍນອກ (Cyber Security);
5) ສ້າງນະໂຍບາຍຮັບມືເຫດການສຸກເສີນ ແລະ ກູ້ຄືນລະບົບໄອທີ (DRP);
6) ພັດທະນາ ແລະ ຍົກລະດັບລະບົບໂປຼແກຼມຮັບໃຊ້ວຽກງານພາຍໃນ;
7) ຍົກລະດັບລະບົບການຊຳລະສະສາງ Bill Payment ແລະ ຜະລິດຕະພັນ E-Banking ໃຫ້ມີຄວາມທັນສະໄໝ.

5.2.2 ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking

ຫັນການບໍລິການສູ່ຮູບແບບ Digital Banking ເປັນຍຸດທະສາດສຳຄັນຂອງ ທຄຕລ ໃນການພັດທະນາ ແລະ ປັບປຸງຜະລິດຕະພັນ-ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າໃນຍຸກດິຈິຕອລ. ການພັດທະນານີ້ປະກອບດ້ວຍການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ການສ້າງນະວັດຕະກຳທາງການເງິນ ແລະ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງລູກຄ້າໃນແຕ່ລະໄລຍະ. ໃນນັ້ນ, ແນວທາງການພັດທະນາປະກອບມີ:

1) ສ້າງຄວາມຫຼາກຫຼາຍໃຫ້ Mobile Banking;
2) ອອກຜະລິດຕະພັນບັດໃໝ່ໃຫ້ມີຄວາມຫຼາກຫຼາຍ;
3) ທົບທວນ, ປະເມີນ ແລະ ປັບປຸງຜະລິດຕະພັນປັດຈຸບັນ;
4) ຂະຫຍາຍ, ປັບປຸງ ແລະ ປ່ຽນແທນຕູ້ຝາກ-ຖອນເງິນ;
5) ຍົກລະດັບວຽກງານລາຍການຮຽກເກັບຜະລິດຕະພັນ ແລະ ບໍລິການອີຄອມເມີສ;
6) ປັບປຸງລາຍງານ ແລະ ພັດທະນາເຄື່ອງມືໃຊ້ໃນການລອກກ່າຍຜະລິດຕະພັນບັດທີ່ອອກໂດຍ ທຄຕລ;
7) ພັດທະນາເຄື່ອງມືໃຊ້ໃນການລອກກ່າຍການຮັບບັດສາກົນຜ່ານຊ່ອງທາງຕ່າງໆຂອງ ທຄຕລ;
8) ປັບປຸງການບໍລິການໃຫ້ທັນສະໄໝ Self service.

5.2.3 ຄຸ້ມຄອງບໍລິຫານຂໍ້ມູນ ແລະ ພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝ

1) ປັບປຸງລະບົບ ແລະ ຍົກລະດັບໂຄງລ່າງພື້ນຖານລະບົບ Big Data;
2) ພັດທະນາການວິເຄາະຂໍ້ມູນຂັ້ນສູງ Advanced Analytics;
3) ປັບປຸງ, ພັດທະນາລະບົບລາຍງານສະຖິຕິຜ່ານທຸກລະບົບ ແລະ ທຸກຊ່ອງທາງ ຂອງ ທຄຕລ;
4) ຮັກສາຄວາມປອດໄພ ແລະ ຄວບຄຸມຄຸນນະພາບຂໍ້ມູນ.

5.2.4 ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ

1) ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ: ທຄຕລ ຈະໄດ້ນຳໃຊ້ລະບົບ LOS ເພື່ອອະນຸມັດສິນເຊື່ອ (ໂດຍບໍ່ໃຊ້ລະບົບເອກະສານ/Hard file) ສຳລັບລູກຄ້າ SMEs ແລະ ລູກຄ້າບຸກຄົນ ພ້ອມທັງນຳໃຊ້ລະບົບ Credit Rating ເພື່ອຊ່ວຍໃນການອະນຸມັດໃຫ້ສອດຄ່ອງຕາມລະບຽບ ແລະ ເງື່ອນໄຂກຳນົດໄວ້;
2) ພັດທະນາການໃຫ້ບໍລິການໜັງສືສິນເຊື່ອ-ໜັງສືຄ້ຳປະກັນ ໃຫ້ເປັນຮູບແບບອີເລັກໂທຣນິກ ເພື່ອຫັນເປັນການບໍລິການທີ່ທັນສະໄໝ: ທຄຕລ ຈະເອົາໃຈໃສ່ພັດທະນາລະບົບ LC Online Application, BG

Online Application ເຊິ່ງການພັດທະນານີ້ເລີ່ມຈາກການສ້າງແພລດຟອມດິຈິຕອລທີ່ທັນສະໄໝ, ເຊິ່ງຈະຊ່ວຍໃຫ້ລູກຄ້າສາມາດຍື່ນຄຳຮ້ອງຂໍໜັງສືສິນເຊື່ອ ແລະ ໜັງສືຄ້ຳປະກັນຜ່ານລະບົບອອນລາຍ;

3) ພັດທະນາລະບົບລາຍງານສິນເຊື່ອ ໃຫ້ສອດຄ່ອງແຕ່ລະໄລຍະ.

5.2.5 ປັບປຸງ ແລະ ພັດທະນາລະບົບບັນຊີ-ລາຍງານການເງິນໃຫ້ເປັນທັນສະໄໝ

ການນຳໃຊ້ລະບົບດິຈິຕອລທີ່ທັນສະໄໝເພື່ອປັບປຸງ ແລະ ພັດທະນາລະບົບບັນຊີ-ລາຍງານການເງິນທັນເຂົ້າສູ່ໂປຼແກຼມ ຈະຊ່ວຍເພີ່ມຂີດຄວາມສາມາດໃນການແຂ່ງຂັນ ແລະ ສະໜັບສະໜຸນການເຕີບໃຫຍ່ຂອງທະນາຄານຢ່າງຍືນຍົງ, ສາມາດຫຼຸດຜ່ອນໄລຍະເວລາ ແລະ ຄວາມຊັບຊ້ອນໃນການເຮັດວຽກ, ຫຼຸດຜ່ອນການໃຊ້ເອກະສານ ແລະ ຄວາມຜິດພາດທີ່ອາດຈະເກີດຂຶ້ນຈາກການເຮັດວຽກດ້ວຍມື.

5.3 ທັນສູ່ມາດຕະຖານສາກົນ ໃນການຄຸ້ມຄອງບໍລິຫານ ແລະ ບໍລິການ

5.3.1 ທັນການຄຸ້ມຄອງ ແລະ ບໍລິຫານອີງກອນໃຫ້ຍືນຍົງຕາມທິດສີຂຽວ Sustainable Finance

1) ສ້າງມາດຖານການດຳເນີນງານດ້ານຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (Environment, Social and Governance);
2) ຄຸ້ມຄອງບໍລິຫານຕາມ Corporate Governance (CG);
3) ການລິເລີ່ມເຂົ້າເຖິງໂຄງການເງິນສີຂຽວ Green finance.

5.3.2 ປະຕິບັດຕາມຫຼັກການ BASEL II

1) ພັດທະນາການຄຸ້ມຄອງບໍລິຫານຄວາມສ່ຽງສິນເຊື່ອ ໃຫ້ໄປຕາມຫຼັກການ BASEL II (ໂຄງການ C2-C9);
2) ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ສອດຄ່ອງຕາມມາດຕະຖານສາກົນ;
3) ຄຸ້ມຄອງບໍລິຫານຂໍ້ມູນຕາມຫຼັກການໂຄງການ BASEL II.

5.3.3 ພັດທະນາວຽກງານບັນຊີ ແລະ ລາຍງານການເງິນ ໃຫ້ໄດ້ຕາມມາດຕະຖານ IFRS ເຕັມຮູບແບບ.

ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ເຕັມສ່ວນ IFRS Full Versions ຈະຕ້ອງເອົາໃຈໃສ່ການປັບປຸງ ແລະ ພັດທະນາວຽກງານທີ່ຕິດພັນຫຼາຍດ້ານທີ່ມີຄວາມກ່ຽວຂ້ອງ ໂດຍສະເພາະປັດໄຈພາຍໃນທີ່ຈະເປັນເງື່ອນໄຂຫຼັກເຮັດໃຫ້ແຜນການສຳເລັດຕາມທີ່ກຳນົດ. ເຖິງແນວໃດກໍ່ດີ, ປັດຈຸບັນ ທຄຕລ ຈະຕ້ອງຈັດຕັ້ງປະຕິບັດມາດຕະຖານສາກົນມີທັງໝົດຈຳນວນ 26 ມາດຕະຖານ ເນື່ອງຈາກອີງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຈຳຕ້ອງໄດ້ຈັດຕັ້ງປະຕິບັດ IFRS Full Versions ພາຍໃນປີ 2026 ທີ່ຈະມາເຖິງນີ້. ສະນັ້ນ, ເພື່ອໃຫ້ສອດຄ່ອງທາງດ້ານນິຕິກຳຄຸ້ມຄອງທີ່ກ່ຽວຂ້ອງ ແລະ ການດຳເນີນງານຂອງ ທຄຕລ ຈຶ່ງໄດ້ກຳນົດໂຄງການ Full IFRS Transformation ເພື່ອປະເມີນສິ່ງທີ່ຈະຕ້ອງປະຕິບັດ, ຄວາມອາດສາມາດ, ຜົນກະທົບທີ່ອາດຈະເກີດຂຶ້ນ ແລະ ປັບປຸງພັດທະນາຂະບວນການຂັ້ນຕອນປະຕິບັດວຽກງານພາຍໃນຂອງ ທຄຕລ ໃນແຕ່ລະຂັ້ນ ພ້ອມທັງຊອກຫາວິທີທາງເຄື່ອງມືແກ້ໄຂມາຮອງຮັບໃຫ້ສອດຄ່ອງ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດ ເພື່ອແໃສ່ໃຫ້ເອກະສານລາຍງານການເງິນຂອງ ທຄຕລ ມີຄວາມໜ້າເຊື່ອຖືຫຼາຍທີ່ສຸດ ທີ່ຈະເປັນເຄື່ອງມືໃນການຕັດສິນໃຈຂອງຜູ້ບໍລິຫານ ແລະ ຜູ້ນຳໃຊ້ທົ່ວໄປ ກໍ່ຄືນັກລົງທຶນພາຍໃນ ແລະ ຕ່າງປະເທດຕໍ່ກັບຮຸ້ນ ທຄຕລ ໃນຕະຫຼາດຫຼັກຊັບ.

5.3.4 ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ກ້າວສູ່ມາດຕະຖານ COSO

1) ພັດທະນາເຄື່ອງມື ແລະ ກົນໄກກວດກາໃຫ້ທັນສະໄໝ;
2) ສ້າງລະບົບການຄວບຄຸມພາຍໃນໃຫ້ໄດ້ມາດຕະຖານ COSO.

5.3.5 ພັດທະນາວຽກງານບໍລິການໃຫ້ໄດ້ຕາມມາດຕະຖານສາກົນ ISO9001:2015

1) ສືບຕໍ່ຮັກສາ ແລະ ປັບປຸງຂໍ້ຄົງຄ້າງ ISO 9001:2015 ມາດຖານການບໍລິຫານຄຸນນະພາບ ການປະຕິບັດວຽກງານທີ່ເປັນລະບົບ ແລະ ໄດ້ມາດຖານຮູບແບບການບໍລິການຄືກັນໃນທົ່ວລະບົບ ທຄຕລ;
2) ພັດທະນາ ແລະ ປັບປຸງວຽກງານການບໍລິການອີງໃສ່ດ້ານລະບຽບການ, ພະນັກງານຜູ້ໃຫ້ບໍລິການ ແລະ ລະບົບທີ່ສາມາດສົ່ງເສີມການບໍລິການໃຫ້ມີຄວາມທັນສະໄໝ ຕາມສະພາບການປ່ຽນແປງໃນປັດຈຸບັນ.

5.3.6 ພັດທະນາໂຄງການ PCI Compliance

ທຄຕລ ໄດ້ໃຫ້ຄວາມສຳຄັນກັບການພັດທະນາໂຄງການ PCI Compliance ເພື່ອຍົກລະດັບມາດຕະຖານຄວາມປອດໄພດ້ານຂໍ້ມູນບັດໃຫ້ສອດຄ່ອງກັບມາດຕະຖານສາກົນ Payment Card Industry Data Security Standard (PCI DSS). ໂຄງການດັ່ງກ່າວ ແມ່ນມາດຕະຖານຄວາມປອດໄພການຄຸ້ມຄອງຂໍ້ມູນຜູ້ຖືບັດ ແລະ ຄວາມປອດໄພໃນການໃຫ້ບໍລິການບັດຊຳລະທີ່ສູນບັດສາກົນວາງອອກ ແລະ ຍອມຮັບຕາມມາດຕະຖານສາກົນ.

6. ແຜນງານ ແລະ ໂຄງການ ຂອງແຜນຍຸດທະສາດການພັດທະນາ ທຄຕລ ປີ 2025 – 2029

- **ຍຸດທະສາດ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນ**
  - ປະກອບມີ 4 ແຜນງານ 17 ໂຄງການ
- **ຍຸດທະສາດ 2: ທັນເປັນທັນສະໄໝ ແລະ ນຳໃຊ້ເຕັກໂນໂລຊີໃໝ່ໃນການດຳເນີນທຸລະກິດ**
  - ປະກອບມີ 5 ແຜນງານ 22 ໂຄງການ
- **ຍຸດທະສາດ 3: ທັນສູ່ມາດຕະຖານສາກົນ ໃນການຄຸ້ມຄອງການບໍລິຫານ ແລະ ບໍລິການ**
  - ປະກອບມີ 6 ແຜນງານ 11 ໂຄງການ

7. ການຈັດຕັ້ງປະຕິບັດ

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເປົ້າໝາຍແຕ່ລະດ້ານຂອງຍຸດທະສາດສະບັບນີ້ ໃຫ້ປະກົດຜົນເປັນຈິງ ທຸກໆພາກສ່ວນຈະຕ້ອງໄດ້ເອົາໃຈໃສ່ປະຕິບັດບັນດາມາດຕະການຕົ້ນຕໍ ດັ່ງນີ້:

1. ສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ພະແນກ, ສູນ, ສາຂາ ຕ້ອງເປັນເຈົ້າການໃນການຜັນຂະຫຍາຍເນື້ອໃນຂອງຍຸດທະສາດສະບັບນີ້ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ເຜີຍແຜ່ໃຫ້ແຕ່ລະພາກສ່ວນຮັບຊາບ;
2. ສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ພະແນກ, ສູນ, ສາຂາ ຕ້ອງທັນແຜນຍຸດທະສາດດັ່ງກ່າວອອກເປັນແຜນງານ-ໂຄງການລະອຽດ ສຳລັບການພັດທະນາແຕ່ລະໄລຍະ;
3. ແຕ່ລະພາກສ່ວນຕ້ອງເປັນເຈົ້າການກວດກາຢ່າງເຂັ້ມງວດຕໍ່ການຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການ ໃຫ້ມີປະສິດທິຜົນ ແລະ ທັນຕາມກຳນົດເວລາ ຜ່ານການທົບທວນ ແລະ ສະຫຼຸບຕີລາຄາ ຢ່າງເປັນປະຈຳ ທຸກໆໄຕມາດ ແລະ ປີ;
4. ທົບທວນຄືນການຈັດຕັ້ງປະຕິບັດຍຸດທະສາດ ຫຼື ປັບປຸງແຜນຍຸດທະສາດ ເພື່ອໃຫ້ແທດເໝາະກັບສະພາບການປ່ຽນແປງໃໝ່ໃນແຕ່ລະໄລຍະ.



ທ່ານ ສຸລິວັດ ສຸວັນນະຈູມຄຳ

ປະທານສະພາບໍລິຫານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ວັນ/ເດືອນ/ປີເກີດ:	30 ຕຸລາ 1977
ອາຍຸ:	47 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ໂພນສະຫວັນໃຕ້, ເມືອງ ສີສັດຕະນາກ , ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ພົວພັນສາກົນດ້ານເສດຖະສາດ ແລະ ການເມືອງ, ມະຫາວິທະນາໄລ Lodz, LODZ, ປະເທດໂປໂລຍ
ດ້ານພາສາຕ່າງປະເທດ:	ພາສາອັງກິດ, ພາສາໂປໂລຍ, ພາສາໄທ.

ການເຝິກອົບຮົມ:

2019	ທິດສະດີ ການເມືອງການປົກຄອງ ຂັ້ນສູງ ທີ່ ສະຖາບັນການເມືອງການປົກຄອງແຫ່ງຊາດ

ປະສົບການໃນການເຮັດວຽກ:

12/2024 - ປັດຈຸບັນ	ຮອງລັດຖະມົນຕີ ກະຊວງການເງິນ
07-12/2024	ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
01/2022 – 07/2024	ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ
2019-2021	ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
2018-2019	ຮອງຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
2016-2018	ຮອງຫົວໜ້າກົມງົບປະມານ, ກະຊວງການເງິນ
2014-2016	ຮອງຫົວໜ້າກົມ, ເລຂາຮອງນາຍົກລັດຖະມົນຕີ, ສຳນັກງານນາຍົກລັດຖະມົນຕີ
2013-2014	ຫົວໜ້າພະແນກ, ພະແນກເສດຖະກິດມະຫາພາກ, ກົມນະໂຍບາຍການເງິນ, ກະຊວງການເງິນ
2011-2013	ປະຈຳການເປັນທີ່ປຶກສາ ຫົວໜ້າຫ້ອງການຜູ່ຕາງໜ້າກຸ່ມອາຊີຕາເວັນອອກສ່ຽງໃຕ້ ຢູ່ສຳນັກງານໃຫຍ່ ທະນາຄານໂລກ, ວໍຊິງຕັນດີຊີ ສະຫະລັດ ອາເມລິກາ
2009-2011	ຮອງຫົວໜ້າພະແນກ, ເລຂາຮອງລັດຖະມົນຕີກະຊວງການເງິນ
2007-2009	ເປັນເຈົ້າໜ້າທີ່ອາວຸໂສ, ເລຂາຮອງລັດຖະມົນຕີກະຊວງການເງິນ
2004-2007	ເຈົ້າໜ້າທີ່ອາວຸໂສຮັບຜິດຊອບວຽກງານຄຸ້ມຄອງໜີ້ສາທາລະນະ ກົມການເງິນຕ່າງປະເທດ, ກະຊວງການເງິນ
2002-2004	ວິຊາການ ຮັບຜິດຊອບດ້ານການຮ່ວມມື ສະຖາບັນການເງິນສາກົນ (IFIs), ພະແນກຮ່ວມມືສາກົນ, ກົມການເງິນຕ່າງປະເທດ, ກະຊວງການເງິນ



ທ່ານ ອາໂນ ເດີໂລເມ

ສະມາຊິກ ສະພາບໍລິຫານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ວັນ/ເດືອນ/ປີເກີດ: 19 ມີນາ 1979

ອາຍຸ: 46 ປີ

ສັນຊາດ: ຝຣັ່ງ

ທີ່ຢູ່ປັດຈຸບັນ: ໝາຍເລກ 46 ຖະໜົນ ຊາລ໌ ໂຟເກ, 75007 ນະຄອນຫຼວງປາຣີ

ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ດ້ານກົດຈະການສາທາລະນະ

ການເຝິກອົບຮົມ:

2007-2009	ໂຮງຮຽນການບໍລິຫານແຫ່ງຊາດ (ENA). ລຸ້ນ Willy Brandt
2003-2005	ປະລິນຍາໂທດ້ານກົດຈະການສາທາລະນະ, ສະຖາບັນການສຶກສາດ້ານການເມືອງແຫ່ງ ນະຄອນຫຼວງປາຣີ.
1999-2003	ສາຂາວິຊາເສດຖະສາດ, ການສຶກສາດ້ານການຄ້າຊັ້ນສູງ (HEC)

ປະສົບການໃນການເຮັດວຽກ:

ຕັ້ງແຕ່ ກັນຍາ 2024:	ຜູ້ອຳນວຍການຝ່າຍພັດທະນາຍຸດທະສາດ - ກຸ່ມເບຣດ - ນະຄອນຫຼວງປາຣີ.
ພຶດສະພາ 2020 – ສິງຫາ 2024:	ຮອງຜູ້ອຳນວຍການຝ່າຍນະວັດຕະກຳ - ອຳນວຍການຝ່າຍວິສາຫະກິດ - ກະຊວງເສດຖະກິດ, ການເງິນ ແລະ ຄຸ້ມຄອງດ້ານອຸດສາຫະກຳ ແລະ ດິຈິຕອນ - ນະຄອນຫຼວງປາຣີ.
ມິຖຸນາ 2017 – ເມສາ 2020:	ຫົວໜ້າຫ້ອງການບໍລິການທະນາຄານ ແລະ ການຊຳສະສາງ - ຫ້ອງການຄັງເງິນ - ກະຊວງການເງິນ - ນະຄອນຫຼວງປາຣີ.
ສິງຫາ 2016 – ພຶດສະພາ 2017:	ຫົວໜ້າຫ້ອງການພົວພັນສອງຝ່າຍ ແລະ ຫ້ອງການເຄື່ອງມືທາງການເງິນຂອງເອີຣົບ - ກະຊວງການເງິນ - ນະຄອນຫຼວງປາຣີ.
ສິງຫາ 2013 – ມີນາ 2014:	ທີ່ປຶກສາ - ກອງທຶນການເງິນສາກົນ - ວໍຊິງຕັນ ດີຊີ
ພຶດສະພາ 2011 – ກໍລະກົດ 2013:	ຜູ້ຈັດການບໍລິຫານທຶນ - ອົງການ France Trésor (AFT) - ນະຄອນຫຼວງປາຣີ
ເມສາ 2009 – ເມສາ 2011:	ຮອງຫົວໜ້າຫ້ອງການລະບົບການເງິນສາກົນ - ກະຊວງການເງິນ - ນະຄອນຫຼວງປາຣີ

ໃບມອບສິດ - Proxy

1. ຂ້າພະເຈົ້າ ..... ສັນຊາດ .....
   I / We ..... Nationality .....

ເຮືອນເລກທີ ..... ບ້ານ..... ເມືອງ.....
Residing at..... Village..... District.....
ແຂວງ..... Province.....

ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Being a shareholder of Banque Pour Le Commerce Exterieur Lao Public
ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of .....shares which are equivalent to the same number of votes

2. ຂໍມອບໝາຍສະມາຊິກສະພາບໍລິຫານອິດສະຫຼະ (ເລືອກ 1 ທ່ານ) - Hereby assign the Independent Board Member (select only one):

☐ ທ່ານ ປອ. ອາຄົມ ປະເສີດ
Mr. Akhom Praserth

☐ ທ່ານ ຮສ. ທອງເພັດ ຈັນທະນິວົງ
Assoc Prof. Thongphet Chanthanivong

☐ ທ່ານ ສອນໄຊ ສີລາເພັດ
Mr. Sonexay Silaphet

☐ ທ່ານນາງ ລັດດາວັນ ຊົງວິໄລ
Mrs. Latdavanh Songvilay

☐ ***ບຸກຄົນອື່ນ ກະລຸນາລະບຸລາຍລະອຽດ / Or other person, please specify:***

ຂໍມອບໝາຍ ທ່ານ/ທ່ານ ນາງ..... ອາຍຸ.....
Hereby assign Mr./Ms ..... Age.....
ສັນຊາດ.....ຢູ່ເຮືອນເລກທີ .....
Nationality..... Residing at.....
ບ້ານ..... ເມືອງ..... ແຂວງ.....
Village..... District..... Province.....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ, ທີ່ຈະຈັດຂຶ້ນໃນ ເວລາ 14:30 – 16:30 ໂມງ ຂອງວັນທີ 30 ເມສາ 2025.
To be my/our proxy to attend and vote on my/our behalf in the Shareholders' Meeting of the Banque Pour Le Commerce Exterieur Lao Public which will be held at 14:30 PM of 30 April 2025.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)
I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

3.1 ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
To grant the proxy to consider and vote in all agendas on my/our behalf as the proxy may deem appropriate; ***or***

3.2 ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

ວາລະທີ 01: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝສາມັນ ທຄຕລ ປະຈຳປີ 2023;

Agenda 01: Approve the minutes of the Ordinary Shareholders' Meeting for the year 2023;

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນ ທຄຕລ ປະຈຳປີ 2024;

Agenda 02: To consider and approve the annual report on the performance and financial statements of BCEL for the year 2024;

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 03: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2024;

Agenda 03: To consider and approve the allocation of the profit of the year 2024;

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 04: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2025;

Agenda 04: To consider and approve the plan for the year 2025

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນຍຸດທະສາດພັດທະນາ ທຄຕລ ໄລຍະ 2025-2029.

Agenda 05: To consider and approve the business strategic plan of BCEL 2024-2029.

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2025.

Agenda 06: Consider and approve the appointment of the independent auditor for the year 2025.

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 07: ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ

Agenda 07: Consider and approve the appointment of the chairman and member of BCEL's Board of Directors.

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 08: ພິຈາລະນາ ແລະ ຮັບຮອງ ການເພີ່ມທຶນຈົດທະບຽນຂອງ ທຄຕລ

Agenda 08: Consider and approve BCEL's recapitalization

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 09: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງຈຳກັດ

Agenda 09: Consider and Approve the Sale of shares held by BCEL in Banque Franco-Lao Limited

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

ວາລະທີ 10: ພິຈາລະນາ ແລະ ຮັບຮອງ ການຂາຍຮຸ້ນທີ່ ທຄຕລ ຖືຄອງຢູ່ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ

Agenda 10: Consider and Approve the Sale of shares held by BCEL in EDL-Generation Public Company

☐ ເຫັນດີ / Approve ☐ ບໍ່ເຫັນດີ / Disapprove

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໃວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່..... ວັນທີ ..... /...../2025

Wrote at.....date..... /...../2025

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / Signed by the shareholder

ເຊັນຜູ້ຕາງໜ້າ/Signed by the proxy

ໝາຍເຫດ/Remark:

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ;

   The shareholder is required to assign only one proxy to attend and vote in the meeting on the shareholder's behalf;

2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ;

   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office;

3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.

ລະບຽບສຳລັບການດຳເນີນກອງປະຊຸມຜູ້ຖືຮຸ້ນ ທຄຕລ

Rules for the Shareholders' Meeting of BCEL

1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/Registration for attending the meeting

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆ ທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ແລະ ໃບມອບສິດ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

For the proxy, documents to be presented to the officers at registration desk are: his/her own valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, and letter of Proxy. If these documents are in foreign languages, only the documents in English are acceptable.

ກໍລະນີທີ່ບໍ່ໄດ້ລົງທະບຽນ ຫຼື ລົງທະບຽນບໍ່ສຳເລັດເນື່ອງຈາກຂາດຄວາມຄົບຖ້ວນດ້ານເອກະສານດັ່ງກ່າວ ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Without registration or the registration is incomplete due to absence of the said documents, shareholders or proxies shall have no right to vote, question or make comments in the meeting.

2. ອົງປະຊຸມ/Quorum

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ 2 ຄົນຂຶ້ນໄປ ແລະມີຈຳນວນຮຸ້ນທີ່ຖືເກີນ 51% ຂອງຈຳນວນຮຸ້ນສາມັນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

Shareholders' meeting can commence only if there are at least 2 or more shareholders attending the meeting and their shares shall be more than 51% of the total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

3. ການດຳເນີນກອງປະຊຸມ/Rules for proceeding

- ທ່ານປະທານສະພາບໍລິຫານ ທຄຕລ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.

The Chairman of BCEL's Board of Directors or designated person will preside over and lead the meeting;

- ທ່ານປະທານກອງປະຊຸມ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດ ຄະແນນແຕ່ລະວາລະ.
  The Chairman of the meeting will propose the title of each agenda and order the voting of each agenda.
- ຜູ້ອຳນວຍການ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.
  The Managing Director of BCEL will present details of each agenda to the meeting.
- ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການ ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.
- After the Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda
- ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.
  All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

4. ພາສາທີ່ນຳໃຊ້ໃນກອງປະຊຸມ/Language in the meeting

- ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ
- The language used in the meeting is Lao language.

5. ຜູ້ມີສິດລົງຄະແນນສຽງ/Persons eligible to vote

- ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງ ປະຊຸມຮຽບຮ້ອຍແລ້ວເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.
  Only the shareholders or proxies who have registered to attend the meeting are eligible to vote.
- ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.
  Any shareholders or proxies who have not registered to attend the meeting and other attendees will not be eligible to vote.

6. ການລົງຄະແນນສຽງ/Voting

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳ ສະເໜີເທົ່ານັ້ນລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

7. ຜົນສັກສິດຂອງການລົງຄະແນນສຽງ/Effectiveness of voting

- ສຳລັບການລົງມະຕິທົ່ວໄປ, ການລົງຄະແນນສຽງທີ່ບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

  For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting
- ສຳລັບການລົງມະຕິສະເພາະ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າ ໜຶ່ງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າ 20% ຈຳນວນຮຸ້ນ ທຄຕລ ທັງໝົດ.

  For special resolution, the "Disapprove votes" will become effective only if such votes account for more than one third of total shareholders or proxies attending the meeting and having shares more than 20% of the total BCEL shares.
- ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

  Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

8. ການແຈ້ງຜົນການລົງຄະແນນສຽງ/Notification of voting result

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບຄະແນນສຽງ ຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

9. ການສະເໜີຄຳຖາມ/Questions

- ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄຳຖາມ ຫຼື ສະແດງຄຳເຫັນທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ປະຊຸມ, ຍົກເວັ້ນກໍລະນີທີ່ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ປະຊຸມ.

  The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. Other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.
- ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍ

ດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly the shareholders or proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມ ຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Shareholders ' Meeting of Banque Pour Le Commerce Exterieur Lao Public, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

- ບັດປະຈຳຕົວ/Identification Card
- ສຳມະໂນຄົວ/Family book
- ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/Passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / Attendees who are legal persons

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

- ໃບອະນຸຍາດລົງທຶນ/ Investment License
- ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)
- ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນ ພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງ ປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

ຄຳແນະນຳ ກ່ຽວກັບ ການລົງຄະແນນສຽງ
Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງສຳລັບທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວ ກ່ຽວກັບ ການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າ ຈະບໍ່ຕ້ອງລົງແນນສຽງອີກ.
   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນ ສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸ ຢ່າງຈະແຈ້ງ ກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ (ຖ້າບໍ່ມີຂໍ້ມູນດັ່ງກ່າວຢູ່ໃນບັດລົງຄະແນນສຽງ) ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.
   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding (if such information is not available in the ballot) and mark a cross in the Disapprove box.

4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
   After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.
   You will be informed about the voting result right in the meeting with one share equals one vote.

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ, ຍົກເວັ້ນວາລະໃດທີ່ຕ້ອງລົງຄະແນນສຽງດ້ວຍມະຕິສະເພາະນັ້ນ ຄະແນນສຽງບໍ່ເຫັນດີຕ້ອງມີຄະແນນຫຼາຍກວ່າ 1/3 ຂອງຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.
   The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting, except for any agenda that requires a specific resolution, Disapproval vote shall account for more than 1/3 of the total number of BCEL shares attending the meeting.

ໝາຍເຫດ/Remark:

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
   Any attendees who failed to make registration will not be eligible to votes.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ / BCEL Shareholder Meeting

- ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024
  ໃນວັນທີ 30 ເມສາ 2025 ເວລາ 14:30
  ທີ່ຫ້ອງປະຊຸມ Grand Ballroom
- BCEL's shareholder's Meeting 2024
  Date 30 April 2025, 14:30
  At Grand Ballroom

